

# ການສ້າງລູກສິດໃຫມ່

# ຄຳນຳ

ປື້ມ *ຄູ່ມືການສ້າງລູກສິດໃໝ່* ຫົວນີ້ມີເປົ້າໝາຍສຳລັບໃຊ້ວຽກງານ 5 ເປົ້າໝາຍ ຄື:

1. ອົບຮົມຜູ້ທີ່ເຊື່ອໃໝ່ໜຶ່ງຕໍ່ໜຶ່ງ

2. ອົບຮົມຜູ້ທີ່ເຊື່ອໃໝ່ເປັນກຸ່ມນ້ອຍ

3. ເປັນບົດເທດສະໜາສຳລັບນັກເທດໃໝ່ ໝາຍຄວາມວ່າ ນັກເທດໃນຄຣິສຕະຈັກທ້ອງຖິ່ນທີ່ຍັງບໍ່ມີຄວາມຊຳນານໃນການຕຽມຄຳເທດສະໜາແລະຍັງຕຽມບໍ່ເປັນ ກໍຈະສາມາດເອົາບົດຮຽນນີ້ມາໃຊ້ເປັນບົດເທດໂດຍກົງກໍໄດ້

4. ເປັນແບບຢ່າງໂຄງຮ່າງໃນການຕຽມຄຳເທດສະໜາ ໝາຍຄວາມວ່າ ນັກເທດໃນຄຣິສຕະຈັກທ້ອງຖິ່ນສາມາດຮຽນຮູ້ວິທີການຕຽມຄຳເທດສະໜາດ້ວຍຕົນເອງ ຈາກແບບຢ່າງໂຄງຮ່າງຂອງບົດຮຽນຕ່າງໆໃນປື້ມຄູ່ມືນີ້ ເພາະເປັນຕົວຢ່າງທີ່ດີແລະເຮັດຕາມໄດ້ງ່າຍ ເຊັ່ນ:
   - ຕັ້ງເປົ້າໝາຍສຳລັບຄຳເທດສະໜາ
   - ຕຽມຄຳນຳ
   - ເລືອກຕອນຈາກພຣະຄຳພີທີ່ຈະອ່ານເພື່ອຮຽນນຳກັນ
   - ຕຽມຄຳຖາມເພື່ອຖາມພີ່ນ້ອງຜູ້ຟັງກ່ຽວກັບພຣະຄຳພີຕອນນັ້ນ
   - ຕຽມຄຳອະທິບາຍຂໍ້ສຳຄັນເປັນຂໍ້ໆ
   - ຕຽມຄຳແນະນຳກ່ຽວກັບການນຳມາໃຊ້
   - ເລືອກຂໍ້ສຳຄັນຂໍ້ໜຶ່ງເພື່ອເປັນຂໍ້ທ່ອງຈຳນຳກັນ

5. ເຮົາໃຊ້ປື້ມຄູ່ມືນີ້ໃນການສອນຄົນທີ່ຍັງບໍ່ເຊື່ອແຕ່ສົນໃຈຮຽນກໍໄດ້ ຜູ້ສົນໃຈອາດຈະຮຽນຮ່ວມກັບກຸ່ມຄຣິສຕຽນຫຼືຮຽນໜຶ່ງຕໍ່ໜຶ່ງກໍໄດ້ຄືກັນ

ຜູ້ຂຽນຫວັງເປັນຢ່າງຍິ່ງວ່າ ປື້ມຄູ່ມືນີ້ຈະເປັນປະໂຫຍດໃນການເສີມສ້າງຊີວິດສ່ວນຕົວແລະຄຣິສຕະຈັກຂອງທ່ານໃຫ້ພັດທະນາ ຈະເລີນ ແລະ ເກີດຜົນຢ່າງຫຼວງຫຼາຍ.

ຂໍພຣະເຈົ້າຊົງໂຜດອວຍພອນພີ່ນ້ອງທຸກໆທ່ານ

ທ້າວ ໂລຍ

# 🕮 ສາລະບານ 🕮


1. ການນະມັດສະການພຣະເຈົ້າອົງດຽວ ....7
2. ການອະທິຖານ ຫຼື ອ້ອນວອນຕໍ່ພຣະເຈົ້າ ....9
3. ການຮັກພຣະເຈົ້າແລະຮັກເພື່ອນບ້ານ ....11
4. ພຣະວິນຍານບໍຣິສຸດ ....13
5. ການເປັນຄົນໃໝ່ໃນພຣະຄຣິດ ....15
6. ຄຣິສຕະຈັກ ....17
7. ໜ້າທີ່ຂອງຄຣິສຕະຈັກ ....19
8. ຄຣິສຕະຈັກແລະການນະມັດສະການ (ພາກ 1) ....21
9. ຄຣິສຕະຈັກແລະການນະມັດສະການ (ພາກ 2) ....23
10. ການເປັນນໍ້າໜຶ່ງໃຈດຽວກັນໃນຄຣິສຕະຈັກ ....25
11. ການສາມັກຄີທຳໃນຄຣິສຕະຈັກ ....27
12. ໜ້າທີ່ຂອງຄຣິສຕະຈັກຕໍ່ສັງຄົມ (ພາກ 1) ....29
13. ໜ້າທີ່ຂອງຄຣິສຕະຈັກຕໍ່ສັງຄົມ (ພາກ 2) ....31
14. ຄຣິສຕຽນເປັນຄົນບໍຣິສຸດຂອງພຣະເຈົ້າ ....33
15. ຄຣິສຕຽນແທ້ ແລະ ຄຣິສຕຽນປອມ ....35
16. ສາສະໜາຊ່ວຍໃຫ້ມະນຸດພົ້ນບໍ່ໄດ້ ....37
17. ບາບ ....39
18. ການລົງໂທດ ....41
19. ພຣະເຢຊູເປັນພຣະຜູ້ຊ່ວຍໃຫ້ລອດພົ້ນ ....43
20. ການກັບໃຈໃໝ່ ....45
21. ພຣະຄຸນຂອງພຣະເຈົ້າ ....47
22. ການຕັດສິນໃຈ ....49
23. ການປະຖິ້ມຄວາມເຊື່ອເກົ່າແກ່ ....51
24. ຄຣິສຕຽນເປັນລູກຂອງພຣະເຈົ້າ ....53
25. ເສລີພາບໃນພຣະຄຣິດ ....55
26. ພຣະເຈົ້າຊົງເລືອກສັນພວກເຮົາ ....57

27. ຄວາມໝັ້ນຄົງເມື່ອໄດ້ຮັບຄວາມລອດພົ້ນ ....................59
28. ພຣະເຈົ້າ....................61
29. ພຣະຄຳພີ ....................63
30. ຜີມານຊາຕານ....................65
31. ການສ້າງໂລກ....................67
32. ມະນຸດບໍ່ເຊື່ອຟັງພຣະເຈົ້າ....................69
33. ແຜນການຂອງພຣະເຈົ້າ ....................71
34. ການກຳເນີດຂອງພຣະເຢຊູຄຣິດ....................73
35. ການຕາຍ ແລະ ການເປັນຄືນມາຈາກຕາຍຂອງພຣະເຢຊູຄຣິດ ....................75
36. ຄຣິສຕະຈັກດັ້ງເດີມ ແລະ ພຣະວິນຍານບໍຣິສຸດ....................77
37. ການສະເດັດມາເທື່ອທີສອງຂອງພຣະເຢຊູ....................79
38. ສະຫວັນ ....................81
39. ນະຣົກ....................83
40. ຄອບຄົວຄຣິສຕຽນ....................85
41. ພໍ່ ແມ່ ລູກ ....................87
42. ເຫດການສຳຄັນໃນຄອບຄົວຄຣິສຕຽນ - ມື້ແຕ່ງງານ ....................89
43. ເຫດການສຳຄັນໃນຄອບຄົວຄຣິສຕຽນ - ການເກີດລູກ....................91
44. ເຫດການສຳຄັນໃນຄອບຄົວຄຣິສຕຽນ - ການຕາຍ....................93
45. ການສະຫຼອງວັນພິເສດຂອງຄຣິສຕຽນ....................95
46. ອາວຸດຍຸດທະພັນທັງຊຸດຂອງພຣະເຈົ້າ ....................97
47. ການມີໄຊຊະນະໃນເມື່ອຜະຈົນຜີມານມາຫຼອກລວງ ....................99
48. ໄຊຊະນະເໜືອຜີ ແລະ ວິນຍານຊົ່ວ ....................101
49. ການຮັບບັບຕິສະມາ....................103
50. ການຮັບພິທີມະຫາສະນິດ....................105
51. ການຖວາຍ....................107
52. ຜູ້ຮັບໃຊ້ໃນຄຣິສຕະຈັກຂອງພຣະເຈົ້າ ....................109
53. ເລື່ອງຄວາມທຸກ....................111

# 1. ການນະມັດສະການພຣະເຈົ້າອົງດຽວ

1. **ເປົ້າໝາຍ -** ເພື່ອຊ່ວຍໃຫ້ຄຣິສຕຽນເຂົ້າໃຈວ່າເປັນຫຍັງຕ້ອງນະມັດສະການພຣະເຈົ້າອົງດຽວແລະຄວນນະມັດສະການພຣະເຈົ້າແນວໃດ?

2. **ຄຳນຳ -** ການນະມັດສະການພຣະເຈົ້າກໍບໍ່ຄືກັບການເຄົາຣົບການໄຫວ້ສິ່ງສັກສິດຕ່າງໆທີ່ທ່ານເຄີຍເຄົາຣົບນັບຖືມາ ຖ້າຫາກວ່າທ່ານເຄີຍລ້ຽງຜີ ໃຫ້ເຂົ້າໃຈວ່າບໍ່ຕ້ອງລ້ຽງພຣະເຈົ້າ ຖ້າຫາກເຄີຍບະຫໍຜີ, ຫໍເຈົ້າຖິ່ນເຈົ້າຖານ ໃຫ້ເຂົ້າໃຈວ່າບະພຣະເຈົ້າບໍ່ໄດ້ ສາສະໜາເກົ່າທີ່ທ່ານເຄີຍເຮັດມາສິ່ງເຫຼົ່ານີ້ເອົາມາໃຊ້ໃນການນະມັດສະການພຣະເຈົ້າບໍ່ໄດ້ ເພາະການນະມັດສະການພຣະເຈົ້າບໍ່ຄືກັນ.

3. **ອ່ານພຣະຄຳພີ -** ອົບພະຍົບ 20:1-6

4. **ຖາມ - ຕອບ**

   4.1 ຄຳສັ່ງສອນນີ້ມາຈາກຜູ້ໃດ?
   **ຕອບ**: ອົບພະຍົບ 20:1 ..........

   4.2 ເຮົາບໍ່ຄວນມີຫຍັງເກັບໄວ້ກາບໄຫວ້ບູຊາ?
   **ຕອບ:** ອົບພະຍົບ 20:3 ..........

   4.3 ເປັນຫຍັງເຮົາກາບໄຫວ້ຮູບເຄົາຣົບບໍ່ໄດ້?
   **ຕອບ:** ອົບພະຍົບ 20:3 ..........

   4.4 ຫຼັງຈາກເຮົາເຊື່ອພຣະເຢຊູແລ້ວເຮົາຄວນເກັບສະສົມຮູບເຄົາຣົບໄວ້ໃນເຮືອນຂອງເຮົາຫຼືບໍ່?
   **ຕອບ:** ອົບພະຍົບ 20:5 ..........

   4.5 ຜູ້ທີ່ກາບໄຫວ້ຮູບເຄົາລົບຈະສະແດງທ່າທີແນວໃດຕໍ່ພຣະເຈົ້າ?
   **ຕອບ:** ອົບພະຍົບ 20:5 ..........

   4.6 ຜູ້ທີ່ກາບໄຫວ້ຮູບເຄົາຣົບຈະໄດ້ຮັບຜົນຕອບແທນແບບໃດຈາກພຣະເຈົ້າ?
   **ຕອບ:** ອົບພະຍົບ 20:5 ..........

   4.7 ຜູ້ທີ່ເຊື່ອຜູ້ທີ່ຟັງແລະນະມັດສະການພຣະເຈົ້າ ຈະໄດ້ຮັບຜົນຕອບແທນຢ່າງໃດຈາກພຣະເຈົ້າ?
   **ຕອບ:** ອົບພະຍົບ 20:6 ..........

5. **ອະທິບາຍ -** ການນະມັດສະການພຣະເຈົ້າອົງດຽວ

   5.1 ຄຣິສຕຽນຕ້ອງນະມັດສະການພຣະເຈົ້າອົງດຽວເທົ່ານັ້ນຈະຂາບໄຫວ້ພຣະເຈົ້າແລະພຣະອື່ນຮ່ວມກັນບໍ່ໄດ້ (ອົບພະຍົບ 20:1-6)

5.2 ຜູ້ທີ່ເຊື່ອຕ້ອງນະມັດສະການພຣະເຈົ້າຢ່າງຖືກຕ້ອງໂດຍ

- ການຮ້ອງເພງ
- ການປະກາດຄວາມລອດພົ້ນທີ່ມາຈາກພຣະອົງ
- ການເລົ່າເຖິງພຣະສິຣິຂອງພຣະອົງ
- ການສັນລະເສີນຂອບຄຸນພຣະເຈົ້າ

5.3 ຜູ້ທີ່ເຊື່ອຕ້ອງນະມັດສະການພຣະເຈົ້າດ້ວຍໃຈບໍຣິສຸດ ການນະມັດສະການນັ້ນບໍ່ແມ່ນພິທີ ບໍ່ຕ້ອງໃຊ້ທູບທຽນຫຼືວັດຖຸສິ່ງຂອງ ແຕ່ເປັນການນະມັດສະການພຣະເຈົ້າດ້ວຍໃຈບໍຣິສຸດ ຄືການຍອມຮັບວ່າພຣະເຈົ້າເປັນພຣະເຈົ້າສູງສຸດ ເປັນພຣະຜູ້ເປັນເຈົ້າ ແລະຍອມຮັບວ່າເຮົາເປັນຄົນບາບທີ່ໄດ້ຮັບຄວາມລອດຈາກພຣະອົງ

5.4 ເຮົາຕ້ອງນະມັດສະການດ້ວຍສຸດຈິດສຸດໃຈສຸດກຳລັງຂອງເຮົາ

**6. ການນຳມາໃຊ້**

6.1 ຖ້າພີ່ນ້ອງຜູ້ໃດມີຮູບເຄົາຣົບເກັບໄວ້ໃນເຮືອນຂອງທ່ານ ທ່ານຄວນຈະເຮັດແນວໃດກັບສິ່ງເຫຼົ່ານັ້ນ

6.2 ໃຫ້ພີ່ນ້ອງທຸກຄົນກ່າວຄຳຂອບຄຸນພຣະເຈົ້າໃນສິ່ງທີ່ພຣະອົງຊົງປະທານໃຫ້ ແລະ ຄວນຍົກຍ້ອງນະມັດສະການສັນລະເສີນພຣະອົງແຕ່ຜູ້ດຽວ

**7. ຂໍ້ທ່ອງຈຳ** - ອົບພະຍົບ 20:3

# 2. ການອະທິຖານ ຫຼື ອ້ອນວອນຕໍ່ພຣະເຈົ້າ

1. **ເປົ້າໝາຍ -** ເພື່ອຊ່ວຍໃຫ້ຄຣິສຕຽນເຂົ້າໃຈວ່າ ເປັນຫຍັງເຮົາຕ້ອງອະທິຖານ ແລ້ວເຮົາຄວນຈະອະທິຖານແນວໃດ.

2. **ຄຳນຳ -** ກ່ອນທ່ານມາເຊື່ອພຣະເຢຊູນັ້ນທ່ານເຄີຍອ້ອນວອນຫາໃຜ ແລ້ວສິ່ງສັກສິດເຫຼົ່ານັ້ນມີສິດເທົ່າພຣະຜູ້ສ້າງຜູ້ແຕ່ງໂລກບໍ?

3. **ອ່ານພຣະຄຳພີ -** ມັດທາຍ 6:7-13

4. **ຖາມ - ຕອບ**

4.1 ເມື່ອທ່ານອະທິຖານທ່ານອະທິຖານຫາໃຜ?

**ຕອບ:** ມັດທາຍ 6:9..........................................................................................

4.2 ເມື່ອເຮົາອະທິຖານ ເຮົາຄວນເລີ່ມຕົ້ນດ້ວຍການເວົ້າເຖິງພຣະບິດາແນວໃດ?

**ຕອບ:** ມັດທາຍ 6:9..........................................................................................

4.3 ຈາກຂໍ້ 10-13 ເປັນຕົວຢ່າງສິ່ງໃດແດ່ທີ່ເຮົາຄວນຈະຂໍຈາກພຣະບິດາ?

**ຕອບ:** ຂໍ້ທີ່ 10..........................................................................................

ຂໍ້ທີ່ 10..........................................................................................

ຂໍ້ທີ່ 11..........................................................................................

ຂໍ້ທີ່ 12..........................................................................................

ຂໍ້ທີ່ 13..........................................................................................

4.4 ການອາທິຖານຂອງເຮົາຄວນຈະຈົບລົງດ້ວຍການເວົ້າແນວໃດຕໍ່ພຣະເຈົ້າ?

**ຕອບ:** ມັດທາຍບົດ 6:13..........................................................................................

4.5 ຄຳວ່າ "ອາແມນ" ໝາຍຄວາມວ່າແນວໃດ?

**ຕອບ:** ..........................................................................................

5. **ອະທິບາຍ -** ການອະທິຖານ

5.1 ການອະທິຖານປຽບຄືກັນກັບການລົມກັນລະຫ່ວາງພໍ່ກັບລູກ

5.2 ການອະທິຖານມີຫຼາຍປະເພດນຳກັນເຊັ່ນ: ນະມັດສະການສັນເສີນ, ສາລະພາບຜິດບາບ, ຂອບໃຈສຳລັບອາຫານແລະສິ່ງອື່ນໆ, ຂໍພຣະເຈົ້າຊົງນຳພາ ໆລໆ

5.3 ແບບຢ່າງໃນການອະທິຖານ ຄື:

1 ຍົກຍ້ອງສັນເສີນ 2 ສາລະພາບ 3 ທູນຂໍສິ່ງທີ່ຕົນເອງຕ້ອງການ 4 ອະທິຖານເພື່ອຜູ້ອື່ນແລະກໍລະນີຕ່າງໆ 5 ຂອບພຣະຄຸນ ທັງໝົດທີ່ເວົ້າມານີ້ ເຮົາຕ້ອງອາໄສພຣະນາມຂອງພຣະເຢຊູ ບໍ່ແມ່ນອາໄສຕົວເຮົາເອງ ເພື່ອມີສິດອະທິຖານກັບພຣະເຈົ້າໄດ້

6. **ການນຳມາໃຊ້** - ເຮົາຄວນຈະຈົດສິ່ງທີ່ເຮົາໄດ້ອະທິຖານທູນຂໍຕໍ່ພຣະເຈົ້າ ເພື່ອຊ່ວຍໃຫ້ເຮົາຈື່ໄດ້ແລະຂອບຄຸນສັນເສີນພຣະອົງ ເມື່ອເຫັນພຣະອົງຊົງຕອບຄຳອະທິຖານຂອງເຮົາຢ່າງມະຫັດສະຈັນແລ້ວ.

7. **ຂໍ້ທ່ອງຈຳ** - ມັດທາຍ 6:9-13

# 3. ການຮັກພຣະເຈົ້າແລະຮັກເພື່ອນບ້ານ

1. **ເປົ້າໝາຍ -** ເພື່ອຊ່ວຍໃຫ້ຄຣິສຕຽນເຂົ້າໃຈວ່າຄວນຈະມີທ່າທີແນວໃດຕໍ່ພຣະເຈົ້າແລະຕໍ່ເພື່ອນບ້ານ

2. **ຄຳນຳ -** ໃນສັງຄົມລາວມີສິ່ງທີ່ຄົນລາວທຸກຄົນຕ້ອງນັບຖື ຄື: ຊາດ, ພັກ ແລະລັດ ແຕ່ຄຣິສຕຽນທຸກຄົນສົມຄວນຈະຮັກຫຍັງຫຼາຍທີ່ສຸດ.

3. **ອ່ານພຣະຄຳພີ -** ລູກາ 10:25-28

4. **ຖາມ - ຕອບ**

   4.1 ລູກຂອງພຣະເຈົ້າທີ່ແທ້ຈິງຄວນຮັກພຣະເຈົ້າແບບໃດ?

   **ຕອບ:** ລູກາ 10:27 ..........................................................................................

   ..........................................................................................

   4.2 ນອກຈາກເຮົາຕ້ອງຮັກພຣະເຈົ້າແລ້ວ ເຮົາຄວນຮັກໃຜອີກ?

   **ຕອບ:** ລູກາ 10:27 ..........................................................................................

   4.3 ເຮົາຈະຕ້ອງຮັກເພື່ອນບ້ານແນວໃດ?

   **ຕອບ:** ລູກາ 10:27 ..........................................................................................

   4.4 ຖ້າເຮົາຮັກພຣະເຈົ້າແລະຮັກເພື່ອນບ້ານ ແລ້ວເຮົາຈະໄດ້ຫຍັງ?

   **ຕອບ:** ລູກາ 10:28 ..........................................................................................

5. **ອະທິບາຍ -** ການຮັກພຣະເຈົ້າແລະການຮັກເພື່ອນບ້ານ

   5.1 ການຮັກພຣະເຈົ້າ

   - ດ້ວຍສຸດຈິດສຸດໃຈ ຄື ການຮັກພຣະເຈົ້າແຕ່ພຽງຜູ້ດຽວເທົ່ານັ້ນ ເໜືອກວ່າຮັກສິ່ງອື່ນໆ
   - ດ້ວຍສຸດກຳລັງ ຄື ການມອບຖວາຍຮ່າງກາຍ ແລະ ກຳລັງເຫື່ອແຮງໃນການຮັບໃຊ້ພຣະເຈົ້າ
   - ດ້ວຍສຸດຄວາມຄິດ ຄື ການໃຊ້ຄວາມຄິດ ແລະ ສະຕິປັນຍາໃນການຮັບໃຊ້ພຣະເຈົ້າ ເຊັ່ນ: ສຶກສາຮໍ່າຮຽນພຣະຄຳພີ, ສອນຄົນອື່ນ, ແນະນຳຄອບຄົວຕາມແນວທາງຂອງພຣະເຈົ້າ

   5.2 ການຮັກຄົນອື່ນ ຄື ການຊ່ວຍເຫຼືອເຂົາ ໂດຍການນຳເຂົາມາຮູ້ຈັກກັບພຣະເຈົ້າ ແລະ ການສະແດງຄວາມຮັກຕໍ່ເຂົາ, ເຊັ່ນ: ບໍ່ຄວນນິນທາຫຼືປ້ອຍດ່າ, ບໍ່ອິດສາ, ບໍ່ເອົາປຽບ ແຕ່ເຫັນແກ່ຄົນອື່ນຫຼາຍກວ່າເຫັນແກ່ຕົວເອງ

6. **ການນຳມາໃຊ້**

   6.1 ຄວາມຮັກເກີດຂຶ້ນໄດ້ເມື່ອສອງຄົນໃຊ້ເວລາລົມກັນ ອອກຄວາມຄິດເຫັນຊ່ວຍກັນ ລະຫວ່າງທ່ານກັບພຣະເຈົ້າເດ ທ່ານຈະເຮັດແນວໃດເພື່ອຮັກພຣະເຈົ້າຫຼາຍຂຶ້ນ?

**6.2** ໃຫ້ທຸກຄົນໃນທີ່ປະຊຸມສະເໜີຄວາມຄິດເຫັນວ່າ ເຮົາຄວນຈະສະແດງຄວາມຮັກຕໍ່ເພື່ອນບ້ານແນວໃດ ໃຫ້ຈົດຊື່ຂອງເພື່ອນບ້ານ ແລະ ນັດກັນວ່າຈະໄປຢ້ຽມຢາມເຂົາເມື່ອໃດ ໃຫ້ທີ່ປະຊຸມອະທິຖານຂໍການຊົງນຳຈາກພຣະເຈົ້າໃນການໄປຢ້ຽມຢາມສະແດງຄວາມຮັກຂອງພຣະເຈົ້າຕໍ່ເຂົາ

**7. ຂໍ້ທ່ອງຈຳ -** ລູກາ 10:27

# 4. ພຣະວິນຍານບໍຣິສຸດ

1. **ເປົ້າໝາຍ -** ເພື່ອຊ່ວຍໃຫ້ຄຣິສຕຽນເຂົ້າໃຈວ່າ ພຣະວິນຍານບໍຣິສຸດຊົງສະຖິດຢູ່ໃນຜູ້ທີ່ເຊື່ອທຸກຄົນ

2. **ຄໍານໍາ -** ພີ່ນ້ອງເຄີຍສັງເກດບໍວ່າ ການເຮັດຕາມນໍ້າພຣະໄທຂອງພຣະເຈົ້ານັ້ນດີ ແຕ່ຫຼາຍເທື່ອເຮົາເຮັດບໍ່ໄດ້ເພາະເຮົາຂາດກໍາລັງເຫື່ອແຮງ ເຮົາຈະຮັບກໍາລັງເຫື່ອແຮງຫຼືອໍານາດໃນການເຮັດຕາມນໍ້າພຣະໄທຂອງພຣະເຈົ້າໄດ້ແນວໃດ?

3. **ອ່ານພຣະຄໍາພີ -** ໂຢຮັນ 14:15-19 ແລະ ໂຢຮັນ 14:26,27

4. **ຖາມ - ຕອບ**

   4.1 ພຣະເຢຊູບອກວ່າພຣະອົງຈະທູນຂໍພຣະບິດາໂຜດປະທານຜູ້ຊ່ວຍອີກຜູ້ໜຶ່ງ ຜູ້ຊ່ວຍນັ້ນຄືໃຜ?
   **ຕອບ:** ໂຢຮັນ 14:15-17........................................................................................

   4.2 ພຣະວິນຍານບໍຣິສຸດຈະຢູ່ກັບເຮົາເຫິງປານໃດ?
   **ຕອບ:** ໂຢຮັນ 14:16............................................................................................

   4.3 ພຣະວິນຍານຊົງມີພຣະລັກສະນະແນວໃດ?
   **ຕອບ:** ໂຢຮັນ 14:17............................................................................................

   4.4 ພຣະວິນຍານບໍຣິສຸດຊົງສະຖິດຢູ່ໃສ?
   **ຕອບ:** ໂຢຮັນ 14:17............................................................................................

   4.5 ພຣະວິນຍານບໍຣິສຸດຈະຊົງເຮັດຫຍັງ?
   **ຕອບ:** ໂຢຮັນ 14:26

   1 ..................................................................................................................

   2 ..................................................................................................................

   4.6 ຖ້າຫາກພຣະວິນຍານບໍຣິສຸດຢູ່ໃນເຮົາ ເຮົາຄວນຈະມີຈິດໃຈແນວໃດ?
   **ຕອບ:** ໂຢຮັນ 14:27............................................................................................

5. **ອະທິບາຍ -** ບົດບາດໜ້າທີ່ຂອງພຣະວິນຍານບໍຣິສຸດ

   5.1 ຊົງສະຖິດຢູ່ນໍາຜູ່ທີ່ເຊື່ອທຸກຄົນ ແລະຊົງເຮັດໃຫ້ເຂົາຮູ້ແນ່ນອນວ່າ ເຂົາເປັນລູກຂອງພຣະເຈົ້າ

   5.2 ຊົງສະຖິດຢູ່ໃນຜູ້ທີ່ເຊື່ອທຸກຄົນ ແລະເປັນພະລັງ ເປັນຣິດເດດ ເພື່ອໃຫ້ເຮົາມີໄຊເໜືອບາບ ເໜືອພະຍາມານ ເໜືອໂລກ

   5.3 ຊົງສະຖິດຢູ່ໃນຜູ້ທີ່ເຊື່ອທຸກຄົນເພື່ອຊົງນໍາພາໃຫ້ເຮົາດໍາເນີນຊີວິດຕາມນໍ້າພຣະໄທຂອງພຣະເຈົ້າ

## 6. ການນຳມາໃຊ້

**6.1** ໃຫ້ພີ່ນ້ອງອະທິຖານຂໍພຣະວິນຍານບໍຣິສຸດຊົງນຳພາຊີວິດປະຈຳວັນຂອງຕົນ

**6.2** ໃຫ້ພີ່ນ້ອງພິຈາລະນາຕົນເອງເບິ່ງວ່າ ຍັງມີຄວາມຢ້ານຕ່າງໆຫຼືບໍ່ ເຊັ່ນ: ຢ້ານຜີ, ຢ້ານຄວາມຕາຍ ໆລໆ ຖ້າຍັງຢ້ານສິ່ງເຫຼົ່ານີ້ໃຫ້ພີ່ນ້ອງເຂົ້າໃຈວ່າ ພຣະວິນຍານຊົງສະຖິດຢູ່ນຳ ແລະພຣະອົງຊົງໃຫຍ່ກວ່າສິ່ງເຫຼົ່ານັ້ນທັງສິ້ນ ແລ້ວຈຶ່ງອະທິຖານຂໍພຣະວິນຍານຊົງທຳລາຍຄວາມຢ້ານອອກຈາກຈິດໃຈ

## 7. ຂໍ້ທ່ອງຈຳ - ໂຢຮັນ 14:26

# 5. ການເປັນຄົນໃໝ່ໃນພຣະຄຣິດ

1. **ເປົ້າໝາຍ -** ເພື່ອຊ່ວຍໃຫ້ຮູ້ວ່າ ຄົນທີ່ເຊື່ອໃນພຣະເຢຊູຄຣິດເປັນຄົນທີ່ຖືກສ້າງຂຶ້ນໃໝ່

2. **ຄຳນຳ -** ຄົນທົ່ວໆໄປມັກເວົ້າວ່າ ສາສະໜາທຸກສາສະໜາສອນໃຫ້ຄົນເຮົາເຮັດດີ ແລະເມື່ອເຮົາເປັນພະຍານໃຫ້ຄົນທົ່ວໆໄປ ເຂົາມັກເວົ້າວ່າ ທຸກສາສະໜາດີຄືກັນໝົດ ແຕ່ວ່າການເປັນລູກຂອງພຣະເຈົ້າກໍບໍ່ຄືກັນກັບການນັບຖືກັບສາສະໜາຕ່າງໆ ຄຣິສຕຽນບໍ່ຫວັງແຕ່ຈະປະຕິບັດສາສະໜາແລະເຮັດດີເທົ່ານັ້ນ ຄຣິສຕຽນເປັນຄົນທີ່ເກີດໃໝ່ ມີຊີວິດໃໝ່ ມີທ່າທີໃໝ່ ເພາະເປັນຄົນທີ່ປະກອບດ້ວຍພຣະວິນຍານຂອງພຣະເຢຊູ.

3. **ອ່ານພຣະຄຳພີ -** 2 ໂກຣິນໂທ 5:17

4. **ຖາມ - ຕອບ**

   4.1 ຄົນທີ່ຢູ່ໃນພຣະຄຣິດເປັນຄົນແນວໃດແລ້ວ?
   **ຕອບ:** 2 ໂກຣິນໂທ 5:17......................................................................

   4.2 ແມ່ນຫຍັງລ່ວງໄປແລ້ວເມື່ອເຮົາຖືກສ້າງຂຶ້ນໃໝ່ໃນພຣະຄຣິດ?
   **ຕອບ:** 2 ໂກຣິນໂທ 5:17......................................................................

   4.3 ສິ່ງເກົ່າໆຂອງເຮົາລ່ວງໄປທັງໝົດແລ້ວບໍ?
   **ຕອບ:** 2 ໂກຣິນໂທ 5:17......................................................................

   4.4 ສິ່ງເກົ່າໆຂອງເຮົານັ້ນຄືຫຍັງແດ່? (ໃຫ້ຄິດເອົາເອງ)
   **ຕອບ:** ..........................................................................................
   ..........................................................................................

   4.5 ສິ່ງໃໝ່ໆທີ່ເຮົາໄດ້ຮັບມີຫຍັງແດ່? (ໃຫ້ຄິດເອົາເອງ)
   **ຕອບ:** ..........................................................................................

   4.6 ຖ້າຫາກວ່າທ່ານຍັງບໍ່ທັນຖືກສ້າງຂຶ້ນໃໝ່ ໝາຍຄວາມວ່າທ່ານຍັງເປັນຄົນແນວໃດ?
   **ຕອບ:** 2 ໂກຣິນໂທ 5:17......................................................................

5. **ອະທິບາຍ -** ຄຣິສຕຽນເປັນຄົນທີ່ຖືກສ້າງຂຶ້ນໃໝ່

   5.1 ປ່ຽນຈາກຄວາມມືດອັນມີການນັບຖືຜີແລະການໄຫວ້ຮູບເຄົາຣົບ ມາສູ່ຄວາມສະຫວ່າງໂດຍການເປັນລູກຂອງພຣະເຈົ້າ

   5.2 ປ່ຽນຈາກການເປັນຂ້ອຍຂ້າໃນຣາຊອານາຈັກຂອງຜີມານ ມາສູ່ການເປັນຄົນມີເສລີພາບໃນແຜ່ນດິນຂອງພຣະເຈົ້າ

   5.3 ປ່ຽນຈາກຄົນທີ່ຢູ່ໃຕ້ການລົງໂທດຂອງພຣະເຈົ້າ ມາເປັນຄົນທີ່ໄດ້ຮັບການຍົກໂທດ

   5.4 ປ່ຽນຈາກການເປັນຄົນບາບ ມາສູ່ການເປັນຄົນຊອບທຳ ໂດຍຄວາມເຊື່ອໃນພຣະເຢຊູຄຣິດ

6. **ການນຳມາໃຊ້** - ມີຫຍັງແດ່ຈາກຊີວິດເກົ່າທີ່ພີ່ນ້ອງຍັງບໍ່ທັນໄດ້ປະຖິ້ມ ເຊັ່ນ: ການເກັບຮັກສາຮູບພຣະ, ການເຂົ້າຮ່ວມພິທີກຳ, ການບະບົນທໍຜີ, ການເອີ້ນຫາບັນພຣະບູລຸດ, ການເກັບກະດູກຫຼືແຂ້ວ, ການຫຼິ້ນຜີຖ້ວຍແກ້ວ, ການຫຼີ້ນນ້ຳມັນພາຍ, ໆລໆ ນອກຈາກສິ່ງທີ່ກ່າວມານີ້ ອາດຈະມີເລື່ອງອື່ນໆທີ່ເຮົາຮູ້ວ່າເປັນບາບ ຊຶ່ງສົມຄວນປະຖິ້ມຄືກັນ ຖ້າພີ່ນ້ອງຍັງມີສ່ວນກ່ຽວຂ້ອງກັບເລື່ອງນີ້ຢູ່ ໃຫ້ສາລະພາບຕໍ່ກັບພຣະເຈົ້າແລ້ວຖິ້ມສາ ເພື່ອຈະເປັນຜູ້ທີ່ໄດ້ຖືກສ້າງໃໝ່ໃນພຣະຄຣິດຢ່າງແທ້ຈິງ

7. **ຂໍ້ທ່ອງຈຳ** - 2 ໂກຣິນໂທ 5:17

# 6. ຄຣິສຕະຈັກ

1. **ເປົ້າໝາຍ -** ເພື່ອຊ່ວຍໃຫ້ຮູ້ວ່າ ຄຣິສຕະຈັກແມ່ນຫຍັງ?

2. **ຄຳນຳ -** "ຄຣິສຕະຈັກ" ໝາຍເຖິງຄົນທີ່ພຣະເຈົ້າຊົງເອີ້ນອອກຈາກໂລກມາເປັນລູກຂອງພຣະອົງ ຄຣິສຕະຈັກບໍ່ແມ່ນຕົວອາຄານຫຼືວັດຖຸສິ່ງຂອງ ແລະບໍ່ແມ່ນໂຄງຮ່າງການຈັດຕັ້ງໃດໆ ແຕ່ເປັນກຸ່ມຄົນທີ່ເຊື່ອໃນພຣະເຢຊູຄຣິດ ແລະພຣະເຢຊູຄຣິດຊົງເປັນເຈົ້າຂອງແລະເປັນເຈົ້ານາຍຂອງຄຣິສຕະຈັກ.

3. **ອ່ານພຣະຄຳພີ -** 1 ເປໂຕ 2:9-10

4. **ຖາມ - ຕອບ**

   4.1 ຄຣິສຕຽນເປັນປະຊາຊາດທີ່ມີລັກສະນະຢ່າງໃດ?

   **ຕອບ:** 1 ເປໂຕ 2:9 ..........................................................................................

   4.2 ພຣະເຈົ້າໄດ້ເລືອກເຮົາໄວ້ເພື່ອຫຍັງ?

   **ຕອບ:** 1 ເປໂຕ 2:9 ..........................................................................................

   4.3 ພຣະເຈົ້າຊົງເອີ້ນເຮົາທັງຫຼາຍອອກມາຈາກຫຍັງ?

   **ຕອບ:** 1 ເປໂຕ 2:9 ..........................................................................................

   4.4 ພຣະເຈົ້າຊົງໃຫ້ເຮົາເຂົ້າສູ່ຫຍັງ?

   **ຕອບ:** 1 ເປໂຕ 2:9 ..........................................................................................

   4.5 ກ່ອນທີ່ເຮົາຈະມາເຊື່ອພຣະເຈົ້າ ເຮົາຍັງໄດ້ຂາດຫຍັງຢູ່?

   **ຕອບ:** 1 ເປໂຕ 2:10 ........................................................................................

   4.6 ແຕ່ບັດນີ້ເຮົາເປັນພົນລະເມືອງຂອງໃຜ?

   **ຕອບ:** 1 ເປໂຕ 2:10 ........................................................................................

5. **ອະທິບາຍ -** ຄຣິສຕະຈັກ

   5.1 ຄຣິສຕະຈັກ:

   - ເປັນປະຊາຊາດທີ່ພຣະເຈົ້າໄດ້ເລືອກສັນໄວ້
   - ເປັນປະໂລຫິດຫຼວງເພື່ອມານະມັດສະການພຣະເຈົ້າ "ປະໂລຫິດ" ເປັນຄຳບູຮານ ໝາຍຄວາມວ່າ ເປັນຜູ້ຮັບໃຊ້ພຣະເຈົ້າແລະເປັນຜູ້ນຳພາຄົນອື່ນໃນການບົວລະບັດພຣະເຈົ້າ
   - ເປັນປະຊາຊາດບໍຣິສຸດ ຄຳວ່າ "ບໍຣິສຸດ" ໝາຍຄວາມວ່າ ເປັນຄົນທີ່ໄດ້ຖິ້ມຄວາມບາບແລ້ວຮັບເອົາຄວາມຊອບທຳຂອງພຣະເຢຊູ

   5.2 ຄຣິສຕະຈັກຄວນຕອບສະໜອງພຣະເຈົ້າ

   - ເຮົາໄດ້ຮັບຄວາມເມດຕາຈາກພຣະເຈົ້າ ດັ່ງນັ້ນ, ເຮົາຈຶ່ງຕ້ອງປະກາດພຣະເມດຕາຂອງພຣະເຈົ້າໃຫ້ຄົນອື່ນຮູ້ຈັກຄືກັນ

6. **ການນຳມາໃຊ້** - ພີ່ນ້ອງມີຄວາມຮູ້ສຶກແນວໃດຕໍ່ການເປັນປະຊາຊາດຂອງພຣະເຈົ້າ ການເປັນປະຊາຊາດຂອງພຣະເຈົ້າມີຄວາມໝາຍຫຼາຍສຳລັບທ່ານ ເມື່ອເຮົາຮູ້ວ່າເຮົາເປັນປະຊາຊາດທີ່ພຣະເຈົ້າໄດ້ເລືອກສັນໄວ້ ເຮົາຄວນຕອບສະໜອງພຣະຄຸນຂອງພຣະເຈົ້າແນວໃດ?

7. **ຂໍ້ທ່ອງຈຳ** - 1 ເປໂຕ 2:9-10

# 7. ໜ້າທີ່ຂອງຄຣິສຕະຈັກ

1. **ເປົ້າໝາຍ -** ເພື່ອຊ່ວຍໃຫ້ຄຣິສຕຽນເຂົ້າໃຈວ່າ ຄຣິສຕະຈັກມີໜ້າທີ່ຫຍັງຕໍ່ພຣະເຈົ້າ, ຕໍ່ກັນແລະກັນ ແລະຕໍ່ສັງຄົມ

2. **ຄຳນຳ -** ກ່ອນທີ່ເຮົາຈະມາເຊື່ອພຣະເຈົ້າ ເຮົາເຄີຍຮັບໃຊ້ຕົນເອງ ຖືຕົນເອງເປັນໃຫຍ່, ເຮັດຫຍັງຕາມໃຈຕົວເອງ ແຕ່ດຽວນີ້ເຮົາຕ້ອງຮັບໃຊ້ (1) ພຣະເຈົ້າ (2) ຄຣິສຕະຈັກ (3) ສັງຄົມ

3. **ອ່ານພຣະຄຳພີ -** ກິດຈະການ 2:41-47

4. **ຖາມ - ຕອບ**

4.1 ໃນຄຣິສຕະຈັກສະໄໝເດີມພວກຄົນທີ່ເຊື່ອໄດ້ຕັ້ງໝັ້ນຄົງຢູ່ກັບເລື່ອງຫຍັງ?

**ຕອບ:** ກິດຈະການ 2:42

(1) ..........................................................................................................

(2) ..........................................................................................................

(3) ..........................................................................................................

(4) ..........................................................................................................

4.2 ພວກເຂົາມີທ່າທີແນວໃດຕໍ່ການຊົງເຄື່ອນໄຫວຂອງພຣະເຈົ້າ?

**ຕອບ:** ກິດຈະການ 2:43..............................................................................

4.3 ພຣະເຈົ້າຊົງອວຍພອນໃຫ້ພວກຜູ້ນຳສາມາດເຮັດແນວໃດ?

**ຕອບ:** ກິດຈະການ 2:43..............................................................................

4.4 ເປັນຫຍັງຄຣິສຕຽນໃນສະໄໝເດີມໄດ້ຂາຍທີ່ດິນແລະສິ່ງຂອງຂອງເຂົາ?

**ຕອບ:** ກິດຈະການ 2:44-45 ........................................................................

4.5 ເມື່ອເຂົາຮ່ວມສາມັກຄີທຳເຂົາມີໃຈແນວໃດ?

**ຕອບ:** ກິດຈະການ 2:46..............................................................................

4.6 ຄົນພາຍນອກມີຄວາມຮູ້ສຶກແນວໃດຕໍ່ຄຣິສຕະຈັກສະໄໝເດີມ?

**ຕອບ:** ກິດຈະການ 2:47..............................................................................

4.7 ພຣະເຈົ້າໄດ້ອວຍພອນຄຣິສຕະຈັກສະໄໝເດີມແນວໃດ?

**ຕອບ:** ກິດຈະການ 2:47..............................................................................

5. **ອະທິບາຍ -** ໜ້າທີ່ຂອງຄຣິສຕະຈັກ

5.1 ບໍ່ວ່າຄຣິສຕະຈັກຈະເຮັດຫຍັງກໍຕາມກໍຕ້ອງໃຫ້ພຣະເຈົ້າເປັນເອກເປັນໃຫຍ່

**5.2** ຄຣິສຕະຈັກສະໄໝເດີມເປັນຕົວຢ່າງເລື່ອງຄວາມໝັ້ນພຽນ 3 ປະການ ຄື:

- ໃນການຮັບໃຊ້ພຣະເຈົ້າ ຄື ສັນເສີນພຣະເຈົ້າທຸກມື້ ອະທິຖານ ນະມັດສະການ ໆລໆ
- ໃນການຮັບໃຊ້ໃຫ້ກັນແລະກັນ ຄື ຊ່ວຍເຫຼືອກັນ ກິນເຂົ້ານຳກັນ
- ໃນການຮັບໃຊ້ສັງຄົມ ຄື ຊ່ວຍເຫຼືອຄົນທຸກຍາກ ພາຄົນມາເຊື່ອພຣະເຈົ້າ

6. **ການນຳມາໃຊ້** - ຄຣິສຕະຈັກຂອງພວກເຮົາເຮັດຕາມຮູບແບບ 3 ປະການນີ້ຫຼືບໍ່ ຖ້າຍັງບໍ່ທັນເຮັດ ພວກເຮົາຄວນຈະປັບປຸງແກ້ໄຂແນວໃດ? ແລະພວກເຮົາຄວນເລີ່ມຕົ້ນດ້ວຍການເຮັດຫຍັງ ອາທິດນີ້ແດ່?

7. **ຂໍ້ທ່ອງຈຳ** - ກິດຈະການ 2:42

# 8. ຄຣິສຕະຈັກແລະການນະມັດສະການ (ພາກ 1)

1. **ເປົ້າໝາຍ -** ເພື່ອຊ່ວຍໃຫ້ຄຣິສຕຽນເຂົ້າໃຈວ່າ ການນະມັດສະການພຣະເຈົ້າເປັນສິ່ງທີ່ສຳຄັນທີ່ສຸດໃນຄຣິສຕະຈັກ

2. **ຄຳນຳ -** ເມື່ອຄິດເຖິງຄຣິສຕະຈັກ ເຮົາເຄີຍສັງເກດບໍ່ວ່າ ຄຣິສຕະຈັກມີເປົ້າໝາຍແນວໃດ ຄວາມຈິງແລ້ວຄຣິສຕະຈັກຕັ້ງຂຶ້ນເພື່ອນະມັດສະການພຣະເຈົ້າ ການນະມັດສະການພຣະເຈົ້າບໍ່ຄືກັນກັບການເຮັດບຸນຕາມສາສະໜາເກົ່າ ການເຮັດບຸນມີເປົ້າໝາຍເພື່ອຫວັງຈະໄດ້ຮັບສິ່ງຕອບແທນໃນຊາດໜ້າ ແຕ່ການນະມັດສະການມີເປົ້າໝາຍເພື່ອຈະຖວາຍຄວາມຮັກ ຄຳສັນເສີນແດ່ພຣະເຈົ້າໂດຍບໍ່ເຫັນແກ່ຜົນປະໂຫຍດສ່ວນຕົວເລີຍ ແຕ່ເຮົານະມັດສະການພຣະອົງເພາະພຣະອົງຊົງເປັນພຣະຜູ້ເປັນເຈົ້າຜູ້ດີເລີດປະເສີດ.

3. **ອ່ານພຣະຄຳພີ -** ພຣະນິມິດ 5:9-14

4. **ຖາມ - ຕອບ**
   - 4.1 ເປັນຫຍັງພຣະເຢຊູຈຶ່ງສົມຄວນໄດ້ຮັບການນະມັດສະການ?
     **ຕອບ:** ພຣະນິມິດ 5:9 ...........................................................................................
   - 4.2 ໃນການນະມັດສະການພຣະເຢຊູ ເຮົາຈະກ່າວຫຍັງເພື່ອເປັນການສັນລະເສີນພຣະອົງ?
     **ຕອບ:** ພຣະນິມິດ 5:12 .........................................................................................
   - 4.3 ມີພວກໃດແດ່ທີ່ຄວນນະມັດສະການພຣະເຢຊູ?
     **ຕອບ:** ພຣະນິມິດ 5:13 .........................................................................................
   - 4.4 ເປັນຫຍັງພວກຜູ້ອາວຸໂສພາກັນຂາບລົງເມື່ອນະມັດສະການຕໍ່ໜ້າພຣະເຈົ້າ?
     **ຕອບ:** ພຣະນິມິດ 5:14 .........................................................................................

5. **ອະທິບາຍ -** ຄຣິສຕະຈັກແລະ ການນະມັດສະການ (ພາກ 1)
   - 5.1 ຄຣິສຕະຈັກຢູ່ເພື່ອນະມັດສະການພຣະເຢຊູຜູ້ເປັນກະສັດຍິ່ງໃຫຍ່ ເມື່ອເຮົານະມັດສະການຕ້ອງນະມັດສະການດ້ວຍມີສະມາທິ ແລະທຸກຄົນຕ້ອງມີສ່ວນຮ່ວມດ້ວຍ ຕ້ອງນະມັດສະການດ້ວຍໃຈຢຳເກງພຣະອົງ ເພາະວ່າພຣະອົງຊົງຍິ່ງໃຫຍ່ແລະບໍຣິສຸດ
   - 5.2 ຜູ້ທີ່ນະມັດສະການພຣະເຈົ້າຕ້ອງນະມັດສະການດ້ວຍຄວາມຕັ້ງໃຈແລະຈິງໃຈ ບໍ່ແມ່ນເຮັດເປັນພິທີເທົ່ານັ້ນ
   - 5.3 ການນະມັດສະການພຣະເຈົ້າມີຫຼາຍຢ່າງນຳກັນ ຄື ຮ້ອງເພງ, ອະທິຖານ, ອ່ານພຣະຄຳພີ, ເວົ້າຄຳຍົກຍ້ອງສັນເສີນພຣະອົງ, ຖວາຍຊັບ ແລະ ຖວາຍຕົນເອງແດ່ພຣະເຈົ້າ

6. **ການນຳມາໃຊ້** - ການນະມັດສະການພຣະເຈົ້າໃນຄຣິສຕະຈັກຂອງເຮົາເປັນແນວໃດ? ຄວນປ່ຽນແປງຫຍັງແດ່ເພື່ອໃຫ້ກົງກັບຕົວຢ່າງຂ້າງເທິງນີ້? ຂໍໃຫ້ທີ່ປະຊຸມທຸກຄົນສຳຫຼວດຕົວເອງ ເມື່ອເຮົາເຕົ້າໂຮມນະມັດສະການເຮົາຕັ້ງໃຈຈິງໆບໍ ຫຼືເຮົາເຮັດພໍເປັນພິທີເທົ່ານັ້ນ? ຫລັງຈາກໄດ້ຮຽນບົດຮຽນນີ້ແລ້ວ ຂໍໃຫ້ທີ່ປະຊຸມໃຊ້ເວລານະມັດສະການພຣະເຈົ້າຮ່ວມກັນ

7. **ຂໍ້ທ່ອງຈຳ** - ພຣະນິມິດ 5:12

# 9. ຄຣິສຕະຈັກແລະການນະມັດສະການ (ພາກ 2)

1. **ເປົ້າໝາຍ -** ເພື່ອຊ່ວຍໃຫ້ຄຣິສຕຽນເຂົ້າໃຈວ່າ ຕ້ອງຮູ້ຈັກພຣະເຈົ້າເພື່ອນະມັດສະການພຣະອົງໄດ້ຢ່າງຖືກຕ້ອງ

2. **ຄຳນຳ -** ພີ່ນ້ອງຮູ້ຈັກພຣະລັກສະນະ ແລະ ການກະທຳຂອງພຣະເຈົ້າໜ້ອຍຫຼາຍປານໃດ ຖ້າຍັງບໍ່ຮູ້ພຣະເຈົ້າດີພໍ ຕ້ອງຮຽນພຣະຄຳພີຊຶ່ງເປັນຄຳສັ່ງສອນຂອງພຣະເຈົ້າເພື່ອຈະສາມາດຍົກຍ້ອງພຣະເຈົ້າໄດ້ຢ່າງເຕັມທີ

3. **ອ່ານພຣະຄຳພີ -** ພຣະນິມິດ 15:3-4

4. **ຖາມ - ຕອບ**

4.1 ຄົນທັງຫລາຍໃນຂໍ້ນີ້ເຮັດແນວໃດໃນການນະມັດສະການພຣະເຈົ້າ?

**ຕອບ:** ພຣະນິມິດ 15:3 ................................................................................................

4.2 ພຣະເຢຊູຊົງມີຣິດທານຸພາບຫຼາຍປານໃດ?

**ຕອບ:** ພຣະນິມິດ 15:3 ................................................................................................

4.3 ພຣະຣາຊກິດຂອງພຣະອົງເປັນແນວໃດ?

**ຕອບ:** ພຣະນິມິດ 15:3 ................................................................................................

4.4 ພຣະອົງເປັນກະສັດຂອງໃຜແດ່?

**ຕອບ:** ພຣະນິມິດ 15:3 ................................................................................................

4.5 ວິຖີທາງຂອງພຣະເຈົ້າເປັນແນວໃດ?

**ຕອບ:** ພຣະນິມິດ 15:3 ................................................................................................

4.6 ເປັນຫຍັງທຸກຄົນຈະຢຳເກງແລະຖວາຍກຽດແດ່ພຣະເຈົ້າ?

**ຕອບ:** ພຣະນິມິດ 15:4 ................................................................................................

4.7 ໃຜເປັນຜູ້ບໍຣິສຸດ

**ຕອບ:** ພຣະນິມິດ 15:4 ................................................................................................

5. **ອະທິບາຍ -** ຄຣິສຕະຈັກແລະການນະມັດສະການ (ພາກ 2)

5.1 ພຣະເຈົ້າເປັນໃຜ?

- ເປັນຜູ້ຊົງມີຣິດທານຸພາບສູງສຸດ
- ເປັນພຣະມະຫາກະສັດແຫ່ງປະຊາຊາດທັງປວງ
- ເປັນພຣະມະຫາກະສັດແຫ່ງຍຸກສະໄໝທັງຫລາຍ (ຕາມໝາຍເຫດໃນ ພຣະນິມິດ 15:3)

5.2 ພຣະລັກສະນະຂອງພຣະເຈົ້າ

- ບໍຣິສຸດ
- ຍຸດຕິທຳ
- ເປັນຄວາມຮັກ ໆລໆ

( *ໃຫ້ທີ່ປະຊຸມບອກພຣະລັກສະນະຂອງພຣະເຈົ້າມາອີກ 10 ປະການ*)

5.3 ພຣະຣາຊກິດຂອງພຣະອົງ

- ເປັນຜູ້ສ້າງໂລກ
- ເປັນຜູ້ພິພາກສາ
- ເປັນຜູ້ຊ່ວຍໃຫ້ລອດແລະອື່ນໆ

( *ໃຫ້ທີ່ປະຊຸມບອກພຣະຣາຊກິດຂອງພຣະເຈົ້າມາອີກ 10 ປະການ*)

6. **ການນຳມາໃຊ້** - ຂໍໃຫ້ພີ່ນ້ອງໃຊ້ເວລາສັນລະເສີນ ແລະ ຂອບຄຸນພຣະເຈົ້ານຳກັນ ສຳລັບພະລັກສະນະແລະພຣະຣາຊກິດຂອງພຣະອົງທີ່ເຮົາໄດ້ຮຽນມາໃນມື້ນີ້.

7. **ຂໍ້ທ່ອງຈຳ** - ພຣະນິມິດ 15:3-4

# 10. ການເປັນນ້ຳໜຶ່ງໃຈດຽວກັນໃນຄຣິສຕະຈັກ

1. **ເປົ້າໝາຍ -** ເພື່ອຊ່ວຍໃຫ້ຄຣິສຕຽນເຂົ້າໃຈວ່າ ຜູ້ທີ່ເຊື່ອທຸກຄົນຕ້ອງເປັນອັນໜຶ່ງອັນດຽວກັນໃນພຣະຄຣິດ

2. **ຄຳນຳ -** ຄວາມຮັກຕໍ່ກັນແລະກັນ ແລະຄວາມເປັນນ້ຳໜຶ່ງໃຈດຽວກັນໃນຄຣິສຕະຈັກຂອງພຣະຄຣິດ ເປັນສິ່ງສຳຄັນຫຼາຍ ເພາະເປັນການພິສູດວ່າ ເຮົາເປັນລູກຂອງພຣະເຈົ້າ ແລະພຣະເຈົ້າຊົງສະຖິດຢູ່ກັບເຮົາ ພຣະເຢຊູເຄີຍເວົ້າວ່າ "ຖ້າພວກເຈົ້າຮັກຊຶ່ງກັນແລະກັນ ທຸກຄົນກໍຈະຮູ້ວ່າພວກເຈົ້າເປັນສາວົກຂອງເຮົາ" (ໂຢຮັນ 13:35)

3. **ອ່ານພຣະຄຳພີ -** ເອເຟໂຊ 4:1-6

4. **ຖາມ - ຕອບ**

**4.1** ອາຈານເປົາໂລຂໍຮ້ອງໃຫ້ເຮົາສະແດງທ່າທີແນວໃດຕໍ່ກັນແລະກັນ?

**ຕອບ:** ເອເຟໂຊ 4:2

(1) ..........................................................................................................

(2) ..........................................................................................................

(3) ..........................................................................................................

(4) ..........................................................................................................

**4.2** ຄຣິສຕຽນທຸກຄົນຕ້ອງພະຍາຍາມເຮັດຫຍັງແດ່?

**ຕອບ:** ເອເຟໂຊ 4:3 ..........................................................................................

**4.3** ລູກຂອງພຣະເຈົ້າຄວນຈະແບ່ງພັກແບ່ງພວກບໍ?

**ຕອບ:** ເອເຟໂຊ 4:4 ..........................................................................................

**4.4** ລູກຂອງພຣະເຈົ້າເປັນອັນໜຶ່ງອັນດຽວກັນເພາະເຮົາມີຫຍັງແດ່ທີ່ເປັນອັນດຽວກັນ?

**ຕອບ:** ເອເຟໂຊ 4:4

(1) ..........................................................................................................

(2) ..........................................................................................................

(3) ..........................................................................................................

**4.5** ລູກຂອງພຣະເຈົ້າເປັນອັນໜຶ່ງອັນດຽວກັນເພາະມີຫຍັງອີກແດ່ທີ່ເປັນອັນດຽວກັນ?

**ຕອບ:** ເອເຟໂຊ 4:5-6

(1) ..........................................................................................................

(2) ..........................................................................................................

(3) ..........................................................................................................

(4) ..........................................................................................................

5. **ອະທິບາຍ** - ການເປັນນໍ້າໜຶ່ງໃຈດຽວກັນໃນຄຣິສຕະຈັກ

5.1 ເຮົາຕ້ອງເປັນນໍ້າໜຶ່ງໃຈດຽວກັນ ເພື່ອຄົນພາຍນອກຈະເຊື່ອວ່າພຣະເຈົ້າມີຈິງ ແລະເຊື່ອວ່າເຮົາເປັນລູກຂອງພຣະເຈົ້າແລະເປັນລູກສິດຂອງພຣະເຢຊູ ການແບ່ງພັກແບ່ງພວກເປັນການທໍາລາຍພຣະກາຍຂອງພຣະອົງ

5.2 "ຝ່າຍເຮົາຮູ້ແລ້ວວ່າ ພວກເຮົາໄດ້ຍ້າຍອອກຈາກຄວາມຕາຍເຂົ້າສູ່ຊີວິດແລ້ວ ກໍເພາະພວກເຮົາຮັກພີ່ນ້ອງ. ຜູ້ໃດທີ່ບໍ່ຮັກ ຜູ້ນັ້ນກໍຍັງຢູ່ໃນຄວາມຕາຍ" (1 ໂຢຮັນ 3:14)

6. **ການນໍາມາໃຊ້**

6.1 ຫາກວ່າພີ່ນ້ອງຄຣິສຕຽນຄົນໃດມີທ່າທີບໍ່ຖືກຕ້ອງຕໍ່ພີ່ນ້ອງຄຣິສຕຽນນໍາກັນ ກໍຄວນປ່ຽນໃຈໃໝ່ຫັນມາຫາກັນດ້ວຍຄວາມຮັກຂອງພຣະເຈົ້າ ຍົກໂທດໃຫ້ກັນ ແລະຄືນດີກັນ

6.2 ໃຫ້ທີ່ປະຊຸມຕັ້ງເປົ້າໝາຍ 3 ປະການກ່ຽວກັບການຊ່ວຍກັນເສີມສ້າງຄວາມເປັນອັນໜຶ່ງອັນດຽວກັນໃນຄວາມຮັກ

7. **ຂໍ້ທ່ອງຈໍາ** - ເອເຟໂຊ 4:3

# 11. ການສາມັກຄີທຳໃນຄຣິສຕະຈັກ

1. **ເປົ້າໝາຍ** - ເພື່ອຊ່ວຍໃຫ້ຄົນຄຣິສຕຽນເຂົ້າໃຈວ່າ ຜູ້ທີ່ເຊື່ອທຸກຄົນມີໜ້າທີ່ຕໍ່ກັນແນວໃດ

2. **ຄຳນຳ** - ພາຍໃນຄຣິສຕະຈັກເຄີຍມີບັນຫາກັນບໍ? ແມ່ນຫຍັງເປັນສາເຫດທີ່ເຮັດໃຫ້ສິ່ງເຫຼົ່ານີ້ເກີດຂຶ້ນ ແລະຄວນຈະແກ້ໄຂແນວໃດ?

3. **ອ່ານພຣະຄຳພີ** - 1 ເທຊະໂລນິກ 5:12-22

4. **ຖາມ - ຕອບ**

**4.1** ເຮົາຄວນຈະມີທ່າທີແນວໃດ ຕໍ່ຜູ້ປົກຄອງ ຫຼືຜູ້ນຳໃນຄຣິສຕະຈັກ?

**ຕອບ:** 1 ເທຊະໂລນິກ 5:12-13

**4.2** ພຣະຄຳພີສອນໃຫ້ເຮົາດຳເນີນຊີວິດແນວໃດໃນການຢູ່ຮ່ວມກັນ?

**ຕອບ:** 1 ເທຊະໂລນິກ 5:13

**4.3** ຄຣິສຕຽນທຸກຄົນມີໜ້າທີ່ແນວໃດໃນການຊ່ວຍເຫຼືອຄົນອື່ນ?

**ຕອບ:** 1 ເທຊະໂລນິກ 5:14

- ຄວນຊ່ວຍຄົນທີ່ບໍ່ມີລະບຽບ(ຄົນຂີ້ຄ້ານ)ດ້ວຍການ ..........................................
- ຄວນຊ່ວຍຄົນທີ່ນ້ອຍໃຈດ້ວຍການ ..........................................
- ຄວນຊ່ວຍຄົນທີ່ອ່ອນກຳລັງດ້ວຍການ ..........................................

**4.4** ໃນການຮັບໃຊ້ຄົນທັງປວງເຮົາຄວນມີທ່າທາງແນວໃດ?

**ຕອບ:** 1 ເທຊະໂລນິກ 5:14 ..........................................

**4.5** ເພື່ອສ້າງຄວາມຮັກແລະຄວາມເຂົ້າໃຈກັນໃນຄຣິສຕະຈັກເຮົາຕ້ອງລະມັດລະວັງຫຍັງ?

**ຕອບ:** 1 ເທຊະໂລນິກ 5:15 ..........................................

**4.6** ເມື່ອພີ່ນ້ອງຄົນໜຶ່ງຄົນໃດເຮັດຜິດຕໍ່ເຮົາ ເຮົາຄວນຈະຕອບສະໜອງແນວໃດ?

**ຕອບ:** 1 ເທຊະໂລນິກ 5:15 ..........................................

**4.7** ນ້ຳພຣະໄທຂອງພຣະເຈົ້າສຳລັບຄຣິສຕຽນມີຫຍັງແດ່?

**ຕອບ:** 1 ເທຊະໂລນິກ 5:16 ..........................................

5:17 ..........................................

5:18 ..........................................

**4.8** ເມື່ອຄຣິສຕຽນປະຊຸມກັນ ເຮົາຄວນເຮັດຫຍັງ ແລະ ບໍ່ຄວນເຮັດຫຍັງ?

**ຕອບ:** 1 ເທຊະໂລນິກ 5::19-22 ..........................................

..........................................

..........................................

..........................................

5. **ອະທິບາຍ -** ການສາມັກຄີທຳໃນາຄຣິສຕະຈັກ

ພີ່ນ້ອງທຸກຄົນຄວນຈະສຳຫຼວດໃຈຕົນເອງວ່າ ຄຣິສຕະຈັກມີຄວາມສາມັກຄີແລເປັນນ້ຳໜຶ່ງໃຈດຽວກັນໜ້ອຍຫຼາຍປານໃດ ທ່ານມີທ່າທີແນວໃດຕໍ່:

- ຜູ້ນຳຄຣິສຕະຈັກ ທ່ານພ້ອມທີ່ຈະຮັບເອົາຄຳແນະນຳຂອງເພິ່ນບໍ?
- ພີ່ນ້ອງຄົນອື່ນ ທ່ານພ້ອມທີ່ຈະຢູ່ຢ່າງສະຫງົບສຸກບໍ ຫຼືທ່ານມັກຜິດຖຽງກັນກັບພວກເຂົາບໍ?
- ຕໍ່ພີ່ນ້ອງທີ່ມີຄວາມຂາດເຂີນ ທ່ານຍິນດີຈະຊ່ວຍເຂົາບໍ?

6. **ການນຳມາໃຊ້ -** ໃຫ້ພີ່ນ້ອງສຳຫຼວດຕົນເອງວ່າມີເລື່ອງກັບຄົນອື່ນໃນຄຣິສຕະຈັກບໍ? ຖ້າມີ ຄວນຟ້າວແກ້ໄຂ ມີຄົນທີ່ຂາດກຳລັງໃຈເປັນພິເສດບໍ? ຖ້າມີ ຄວນຟ້າວໃຫ້ກຳລັງໃຈເຂົາ.

7. **ຂໍ້ທ່ອງຈຳ -** 1 ເທຊະໂລນິກ 5:16-18

# 12. ໜ້າທີ່ຂອງຄຣິສຕະຈັກຕໍ່ສັງຄົມ (ພາກ 1)

1. **ເປົ້າໝາຍ** - ເພື່ອຊ່ວຍໃຫ້ຄຣິສຕຽນເຂົ້າໃຈວ່າ ຄວນຈະວາງຕົວແນວໃດຕໍ່ສັງຄົມ

2. **ຄໍານໍາ** - ໜ້າທີ່ທໍາອິດຂອງຄຣິສຕະຈັກຕໍ່ສັງຄົມແມ່ນຕ້ອງເປັນແບບຢ່າງທີ່ດີໃນການດໍາເນີນຊີວິດ ປະຈໍາວັນຕໍ່ໜ້າສັງຄົມ ການເປັນພະຍານຂອງພວກຄຣິສຕຽນຈຶ່ງຈະມີນໍ້າໜັກ

3. **ອ່ານພຣະຄໍາພີ** - ຟີລິບປອຍ 2:14-16; 1 ເທຊະໂລນິກ 4:11-12

4. **ຖາມ - ຕອບ**

   4.1 ທຸກມື້ນີ້ຊາວໂລກເປັນແນວໃດໃນສາຍຕາຂອງພຣະເຈົ້າ?

   **ຕອບ:** ຟີລິບປອຍ 2:15..............................................................................................

   4.2 ໃນສັງຄົມແບບນີ້ພວກເຮົາຄວນເປັນຄົນແບບໃດ?

   **ຕອບ:** ຟີລິບປອຍ 2:15..............................................................................................

   4.3 ໃນສັງຄົມແບບນີ້ພວກເຮົາຄວນສະແດງຫຍັງ?

   **ຕອບ:** ຟີລິບປອຍ 2:16..............................................................................................

   4.4 ເຮົາຄວນຈະວາງຕົວແນວໃດໃນສັງຄົມ ເພື່ອເປັນທີ່ນັບຖືຂອງຄົນພາຍນອກ?

   **ຕອບ:** 1 ເທຊະໂລນິກ 4:11

   (1) ..........................................................................................................................

   (2) ..........................................................................................................................

   (3) ..........................................................................................................................

   4.5 ຜົນທີ່ຕາມມາຈະເປັນແນວໃດ ຖ້າເຮົາວາງຕົວແບບນີ້?

   **ຕອບ:** 1 ເທຊະໂລນິກ 4:12........................................................................................

5. **ອະທິບາຍ** - ໜ້າທີ່ຂອງຄຣິສຕະຈັກຕໍ່ສັງຄົມໃນໂລກທີ່ເຕັມໄປດ້ວຍຄວາມບາບ ເຮົາຕ້ອງເປັນ ແບບຢ່າງຕໍ່ສັງຄົມ ຄື:

   5.1 ຕ້ອງວາງຕົວແບບທີ່ຈະບໍ່ຖືກຕິຕຽນໄດ້ ເພື່ອຄົນທີ່ຍັງບໍ່ເຊື່ອຈະໄດ້ເຫັນຊີວິດຂອງເຮົາແລະຈະໄດ້ ສົນໃຈໃນເລື່ອງຂອງພຣະເຈົ້າ

   5.2 ຕ້ອງເວົ້າແຕ່ໃນທາງທີ່ດີ ແລະ ກ່ຽວກັບເລື່ອງຂອງພຣະເຈົ້າ ເພື່ອຄົນທີ່ບໍ່ເຊື່ອຈະເລີ່ມສົນໃຈ ໃນພຣະອົງ

   5.3 ຕ້ອງໃຊ້ຄໍາສັ່ງສອນຂອງພຣະເຈົ້າເປັນຫຼັກໃນການເວົ້າ ແລະການປະພຶດປະຕິບັດເພື່ອເອົາ ຊະນະສັງຄົມຊົ່ວຮ້າຍແລະເພື່ອຈະສາມາດພາຄົນມາເຊື່ອພຣະເຈົ້າໄດ້

   5.4 ຖ້າຄຣິສຕຽນປະພຶດຕົນເປັນຄົນຊົ່ວຊ້າ ຮັບຮອງໄດ້ວ່າບໍ່ມີໃຜສົນໃຈມາເຊື່ອພຣະເຈົ້າ

6. **ການນໍາມາໃຊ້** - ຢາກໃຫ້ພີ່ນ້ອງສໍາຫຼວດຕົວເອງວ່າ ຄໍາພະຍານຂອງເຮົາມີອິດທິພົນຕໍ່ຄົນອື່ນຫຼາຍນ້ອຍປານໃດ ເມື່ອເວົ້າອອກໄປແລ້ວຈະມີຄົນຮັບຟັງຫຼືບໍ່ ແລະຊີວິດປະຈໍາວັນຂອງເຮົາເປັນແບບຢ່າງທີ່ດີຕໍ່ສັງຄົມຫຼືບໍ່ ຫຼື ຊີວິດຂອງເຮົາເປັນເຫດໃຫ້ຄົນພາຍນອກເວົ້າວ່າ ຊີວິດການປະພຶດຂອງຄຣິສຕຽນກໍບໍ່ເຫັນຈະແຕກຕ່າງຫຍັງກັບຄົນທີ່ບໍ່ເຊື່ອເທົ່າໃດ.

7. **ຂໍ້ທ່ອງຈໍາ** - 1 ເທຊະໂລນິກ 4:11-12

# 13. ໜ້າທີ່ຂອງຄຣິສຕະຈັກຕໍ່ສັງຄົມ (ພາກ 2)

1. **ເປົ້າໝາຍ -** ເພື່ອຊ່ວຍໃຫ້ຄຣິສຕຽນເຂົ້າໃຈວ່າ ຄວນຈະວາງຕົວແນວໃດຕໍ່ສັງຄົມ

2. **ຄຳນຳ -** ຖ້າສົມມຸດວ່າທ່ານມີຄວາມທຸກຫຼືບັນຫາໜັກໃຈ ແຕ່ບໍ່ມີຜູ້ໃດຊ່ວຍທ່ານ ທ່ານຈະມີຄວາມຮູ້ສຶກແນວໃດ ໃນທຳນອງດຽວກັນ ໃນສັງຄົມມີຫຼາຍຄົນທີ່ພວມປະສົບກັບຄວາມທຸກເພາະມີບັນຫາສຸຂະພາບ ບັນຫາທາງຄອບຄົວ ບັນຫາວຽກການ ບາງຄົນກໍບໍ່ມີໃຜສົນໃຈຊ່ວຍເຂົາເລີຍ ຄຣິສຕະຈັກຄວນໃຫ້ຄວາມສົນໃຈກັບບຸກຄົນແນວນີ້

3. **ອ່ານພຣະຄຳພີ -** ລູກາ 10:30-37

4. **ຖາມ - ຕອບ**

   4.1 ຊາຍຄົນນັ້ນພວມເດີນທາງໄປໃສ?

   **ຕອບ:** ລູກາ 10:30 ....................................................................................................

   4.2 ໃນເມື່ອເຂົາພວມເດີນທາງ ມີຫຍັງເກີດຂຶ້ນກັບເຂົາ?

   **ຕອບ:** ລູກາ 10:30 ....................................................................................................

   4.3 ມີໃຜຜ່ານມາພົບເຫັນເຂົາ? ແລ້ວຄົນນັ້ນໄດ້ຊ່ວຍເຂົາບໍ?

   **ຕອບ:** ລູກາ 10:31 ....................................................................................................

   4.4 ຄົນຕໍ່ມາທີ່ຜ່ານມາພົບເຫັນເຂົາແມ່ນໃຜ? ແລະຄົນນັ້ນຊ່ວຍເຂົາບໍ?

   **ຕອບ:** ລູກາ 10:32 ....................................................................................................

   4.5 ໃນທີ່ສຸດແມ່ນໃຜໄດ້ຊ່ວຍເຂົາ?

   **ຕອບ:** ລູກາ 10:33 ....................................................................................................

   4.6 ຊາວຊາມາເຣຍໄດ້ຊ່ວຍເຫຼືອເຂົາແນວໃດ?

   **ຕອບ:** ລູກາ 10:34-35

   (1) ....................................................................................................................

   (2) ....................................................................................................................

   (3) ....................................................................................................................

   4.7 ພຣະເຢຊູສັ່ງໃຫ້ເຮົາເຮັດແນວໃດ?

   **ຕອບ:** ລູກາ 10:37 ....................................................................................................

5. **ອະທິບາຍ -** ໜ້າທີ່ຂອງຄຣິສຕະຈັກຕໍ່ສັງຄົມ ການໃຫ້ຄວາມຊ່ວຍເຫຼືອຕາມແບບຢ່າງຂອງຊາວຊາມາເຣຍ

   5.1 ຄວາມຕ້ອງການຂອງຊາຍທີ່ເດີນທາງ ເຂົາຖືກປຸ້ນແລະຖືກທຸບຕີໃນບ່ອນເປົ່າປ່ຽວ

5.2 ຄວາມເມດຕາຂອງຜູ້ຊ່ວຍ ຊາຍ 2 ຄົນທຳອິດແມ່ນປະໂລຫິດ ແລະ ຄົນເລວີ ຊຶ່ງທັງ 2 ຄົນ ແມ່ນນັກບວດ ແຕ່ພວກເຂົາກໍບໍ່ໄດ້ຊ່ວຍຊາຍທີ່ບາດເຈັບເລີຍ ມີພຽງຊາວຊາມາເຣຍຜູ້ໃຈດີຄົນດຽວເທົ່ານັ້ນທີ່ຊ່ວຍເຂົາໄວ້ ເຖິງແມ່ນວ່າຊາວຊາມາເຣຍຈະເປັນສັດຕູກັບຊາວຢິວກໍຕາມ ແຕ່ເຂົາກໍຍັງມີນ້ຳໃຈຊ່ວຍເຫຼືອຄົນຢິວທີ່ບາດເຈັບນີ້

5.3 ຄຳສັ່ງຂອງພຣະເຢຊູ ພຣະເຢຊູສັ່ງໃຫ້ເຮັດເໝືອນຊາວຊາມາເຣຍຜູ້ໃຈດີ ໃຫ້ເຮົາເປັນຄົນເອື້ອເຟື້ອຕໍ່ສັງຄົມ ເຖິງແມ່ນຜູ້ທີ່ຕ້ອງການຄວາມຊ່ວຍເຫຼືອຈະບໍ່ແມ່ນພີ່ນ້ອງຫຼືໝູ່ຂອງເຮົາກໍຕາມ ແຕ່ເຮົາຄວນສະແດງຄວາມຮັກແບບເສຍສະຫຼະຂອງພຣະເຈົ້າຕໍ່ເຂົາ

6. **ການນຳມາໃຊ້** - ໃນສັງຄົມຂອງທ່ານມີໃຜແດ່ທີ່ຕ້ອງການຄວາມຊ່ວຍເຫຼືອ? ເຮົາຄວນເຮັດແນວໃດເພື່ອສະແດງຄວາມຮັກຂອງພຣະເຈົ້າຕໍ່ເຂົາ?

7. **ຂໍ້ທ່ອງຈຳ** - ລູກາ 10:27

# 14. ຄຣິສຕຽນເປັນຄົນບໍຣິສຸດຂອງພຣະເຈົ້າ

1. **ເປົ້າໝາຍ -** ເພື່ອຊ່ວຍໃຫ້ເຂົ້າໃຈຄວາມໝາຍຂອງຄໍາວ່າ "ຄຣິສຕຽນເປັນຄົນບໍຣິສຸດຂອງພຣະເຈົ້າ"

2. **ຄໍານໍາ -** ກ່ອນທີ່ທ່ານຈະມາເຊື່ອໃນພຣະເຈົ້າ ທ່ານເຄີຍໄດ້ຮັບຄໍາສອນວ່າ ທຸກສາສະໜາຄືກັນໝົດ ແລະທຸກສາສະໜາຈຶ່ງສາມາດປະສົມປະສານກັນໄດ້. ທີ່ຈິງແລ້ວເລື່ອງຄວາມເຊື່ອໃນພຣະເຢຊູຄຣິດບໍ່ເປັນສາສະໜາ ໝາຍຄວາມວ່າ ບໍ່ຄືສາສະໜາຕ່າງໆທີ່ມະນຸດຕັ້ງຂຶ້ນມາ. ເລື່ອງຂອງພຣະເຈົ້າເປັນຄວາມຈິງທັງໝົດ ແຕ່ສາສະໜາອື່ນມີພະຍາມານກ່ຽວຂ້ອງນໍາ ດັ່ງນັ້ນເລື່ອງຂອງພຣະເຢຊູຈະປົນກັບສາສະໜາອື່ນໆບໍ່ໄດ້ເດັດຂາດ

3. **ອ່ານພຣະຄໍາພີ -** 2 ໂກຣິນໂທ 6:14-18 ໝາຍເຫດ: "ເບລີອານ" (ຂໍ້ 15) ໝາຍເຖິງມານຮ້າຍ

4. **ຖາມ - ຕອບ**

   4.1 ເປັນຫຍັງຄຣິສຕຽນຈຶ່ງຜູກພັນກັບຄົນທີ່ບໍ່ເຊື່ອບໍ່ໄດ້?

   **ຕອບ:** 2 ໂກຣິນໂທ 6:14 (1) ........................................................................

   (2) ........................................................................

   4.2 ເປັນຫຍັງລູກຂອງພຣະເຈົ້າມີສ່ວນຮ່ວມກັບຮູບເຄົາຣົບບໍ່ໄດ້?

   **ຕອບ:** 2 ໂກຣິນໂທ 6:15-16........................................................................

   4.3 ລູກຂອງພຣະເຈົ້າບໍ່ຄວນແຕະຕ້ອງຫຍັງແດ່?

   **ຕອບ:** 2 ໂກຣິນໂທ 6:17........................................................................

   4.4 ພຣະເຈົ້າສັນຍາແນວໃດຕໍ່ຜູ້ທີ່ແຍກຕົວອອກຈາກສິ່ງມົນທິນ?

   **ຕອບ:** 2 ໂກຣິນໂທ 6:17,18........................................................................

5. **ອະທິບາຍ -** ຄຣິສຕຽນເປັນຄົນບໍຣິສຸດຂອງພຣະເຈົ້າ

   5.1 "ບໍຣິສຸດ" ໝາຍຄວາມວ່າ ພຣະເຈົ້າໄດ້ເລືອກສັນໃຫ້ເປັນປະຊາຊາດຂອງພຣະອົງ ຄຣິສຕຽນເປັນຄົນບໍຣິສຸດໃນຄວາມໝາຍວ່າ ເຮົາມີຊີວິດຢູ່ເພື່ອພຣະເຈົ້າ

   5.2 "ບໍຣິສຸດ" ໝາຍຄວາມວ່າ ບໍ່ຄືຄົນອື່ນ ຄົນທີ່ບໍ່ເຊື່ອກໍເປັນລູກນ້ອງຂອງຜີມານ ທີ່ພວມເດີນທາງໄປນະຣົກ ພຣະເຈົ້າຊົງເອີ້ນເຂົາວ່າເປັນ "ຄົນອະທໍາ" ແຕ່ເຮົາເປັນຄົນຊອບທໍາ ຄົນຊອບທໍາກັບຄົນອະທໍາຈະເຂົ້າຫຸ້ນສ່ວນນໍາກັນບໍ່ໄດ້

   5.3 "ບໍຣິສຸດ" ໝາຍຄວາມວ່າ ເປັນຄືກັບພຣະເຈົ້າ ພຣະເຈົ້າຊົງເປັນພຣະຜູ້ເປັນເຈົ້າທີ່ບໍຣິສຸດ ພຣະອົງບໍ່ເຄີຍເຮັດບາບ ຄຣິສຕຽນຕ້ອງເປັນຄົນບໍຣິສຸດຄືກັນ ຕ້ອງກຽດຊັງການເຮັດບາບ

6. **ການນໍາມາໃຊ້ -** ຂໍໃຫ້ພີ່ນ້ອງທຸກຄົນສໍາຫຼວດຕົວເອງວ່າ ທ່ານຍັງມີສ່ວນຮ່ວມກັບສິ່ງທີ່ຜິດພຣະເຈົ້າຢູ່ບໍ? ຖ້າມີ ທ່ານຄວນເຮັດແນວໃດ?

7. **ຂໍ້ທ່ອງຈໍາ -** 2 ໂກຣິນໂທ 6:17,18

# 15. ຄຣິສຕຽນແທ້ ແລະ ຄຣິສຕຽນປອມ

1. **ເປົ້າໝາຍ -** ເພື່ອຊ່ວຍໃຫ້ເຂົ້າໃຈວ່າ ຄຣິສຕຽນປອມແລະຄຣິສຕຽນແທ້ຕ່າງກັນແນວໃດ

2. **ຄໍານໍາ -** ຄຣິສຕຽນແທ້ເປັນຄົນທີ່ບັງເກີດໃໝ່ດ້ວຍການເຊື່ອໃນພຣະຄຣິດ ຄຣິສຕຽນແທ້ເປັນຄົນທີ່ຮູ້ຈັກພຣະເຈົ້າ ມີຄວາມສໍາພັນກັບພຣະອົງ ຄຣິສຕຽນແທ້ເປັນຄົນທີ່ປະກອບດ້ວຍພຣະວິນຍານບໍຣິສຸດ

3. **ອ່ານພຣະຄໍາພີ -** ມັດທາຍ 7:21-23

4. **ຖາມ - ຕອບ**

4.1 ທຸກຄົນທີ່ເອີ້ນພຣະເຢຊູວ່າ "ພຣະອົງເຈົ້າ" ຈະໄດ້ເຂົ້າໃນແຜ່ນດິນສະຫວັນບໍ?

**ຕອບ:** ມັດທາຍ 7:21..........................................................................................

4.2 ໃຜເປັນຜູ້ທີ່ຈະເຂົ້າໄປໃນແຜ່ນດິນສະຫວັນໄດ້?

**ຕອບ:** ມັດທາຍ 7:21..........................................................................................

4.3 ເຖິງແມ່ນວ່າຄຣິສຕຽນປອມບໍ່ໄດ້ເປັນລູກຂອງພຣະເຈົ້າ ແຕ່ເຂົາເຄີຍເຮັດຫຍັງໃນພຣະນາມພຣະເຢຊູ

**ຕອບ:** ມັດທາຍ 7:22

(1) ..........................................................................................................

(2) ..........................................................................................................

(3) ..........................................................................................................

4.4 ຄຣິສຕຽນປອມເຄີຍໃຊ້ຊື່ຂອງພຣະເຢຊູມາອ້າງບໍ?

**ຕອບ:** ມັດທາຍ 7:22..........................................................................................

4.5 ພຣະເຢຊູຈະຊົງຕອບພວກຄຣິສຕຽນປອມແນວໃດ?

**ຕອບ:** ມັດທາຍ 7:23..........................................................................................

4.6 ຄຣິສຕຽນປອມເຄີຍເຮັດຊົ່ວບໍ?

**ຕອບ:** ມັດທາຍ 7:23..........................................................................................

5. **ອະທິບາຍ -** ຄຣິສຕຽນແທ້ ແລະ ຄຣິສຕຽນປອມ

5.1 ທົ່ວໂລກມີຫຼາຍຄົນອ້າງວ່າເປັນຄຣິສຕຽນ ແຕ່ເຂົາບໍ່ໄດ້ເຊື່ອຢ່າງຈິງຈັງ ເຂົາພຽງແຕ່ອ້າງຕົວເປັນຄຣິສຕຽນເປັນການບັງໜ້າເພື່ອຫາຜົນປະໂຫຍດສ່ວນຕົວ ພວກນີ້ອາດຈະເວົ້າແບບຄຣິສຕຽນແທ້ ແຕ່ໃຈເຂົາຫ່າງຈາກພຣະເຈົ້າ ພວກເຂົາອາດຈະວາງທ່າທີຕ່າງໆເປັນຄຣິສຕຽນ ຄື: ອະທິຖານ ໄປນະມັດສະການ ຖວາຍໜຶ່ງສ່ວນສິບຂອງລາຍໄດ້ ໆລໆ ຊຶ່ງເປັນພຽງການກະທໍາພາຍນອກ ແຕ່ຫາກພາຍໃນຈິດໃຈຂອງເຂົາກໍບໍ່ມີຄວາມຮັກຕໍ່ພຣະເຈົ້າເລີຍ

**5.2** ຄຣິສຕຽນປອມບໍ່ມີສ່ວນໃນພຣະເຢຊູຄຣິດ ເຖິງແມ່ນວ່າເຂົາຈະເອີ້ນພຣະເຢຊູວ່າ "ພຣະອົງເຈົ້າ" ແຕ່ບໍ່ໄດ້ໝາຍຄວາມວ່າເຂົາເປັນລູກຂອງພຣະອົງຢ່າງແທ້ຈິງ ເຫດສັນນັ້ນພຣະອົງຈະບໍ່ຕ້ອນຮັບເຂົາ

**5.3** ການພິສູດວ່າເປັນຄຣິສຕຽນປອມ ຫຼື ຄຣິສຕຽນຈິງ ຂໍໃຫ້ພີ່ນ້ອງລະມັດລະວັງ ແລະສັງເກດໃຫ້ດີ ເພາະມີຫຼາຍຄົນອ້າງວ່າຕົນເປັນຄຣິສຕຽນ ແມ່ນແຕ່ໃນເມື່ອພວກເຂົາບໍ່ໄດ້ເຊື່ອພຣະເຈົ້າຈິງໆ ເຮົາບໍ່ຄວນເຊື່ອພຽງຄໍາເວົ້າຂອງເຂົາເທົ່ານັ້ນ ແຕ່ຕ້ອງເບິ່ງຄວາມປະພຶດຂອງເຂົານໍາ ຄືຄຣິສຕຽນແທ້ຈະເຮັດຕາມນໍ້າພຣະໄທຂອງພຣະເຈົ້າ (ມັດທາຍ 7:21)

6. **ການນໍາມາໃຊ້** - ຂໍໃຫ້ພີ່ນ້ອງທຸກຄົນສໍາຫຼວດຈິດໃຈວ່າ ເຮົາເປັນຄົນທີ່ເຊື່ອຢ່າງບໍ່ຈິງຈັງທີ່ຢາກຫາຜົນປະໂຫຍດສ່ວນຕົວບໍ? ເຮົາເຊື່ອພຣະເຢຊູເຮັດຫຍັງ? ເພື່ອຢາກໄດ້ຮັບການປິ່ນປົວໃຫ້ຫາຍຈາກໂລກໄພໄຂ້ເຈັບຫຼືຢາກຈະຮັ່ງມີບໍ? ພີ່ນ້ອງຄົນໃດຮູ້ສຶກວ່າເປັນຄຣິສຕຽນປອມກໍໃຫ້ກັບໃຈສາລະພາບບາບຕໍ່ພຣະເຈົ້າ ຂໍພຣະອົງຊົງຮັບເອົາເປັນລູກທີ່ແທ້ຈິງຂອງພຣະອົງ.

7. **ຂໍ້ທ່ອງຈໍາ** - ມັດທາຍ 7:21

# 16. ສາສະໜາຊ່ວຍໃຫ້ມະນຸດພົ້ນບໍ່ໄດ້

1. **ເປົ້າໝາຍ -** ເພື່ອຊ່ວຍໃຫ້ຄຣິສຕຽນເຂົ້າໃຈວ່າ ນອກຈາກພຣະເຢຊູຄຣິດ ບໍ່ມີສາສະໜາໃດຈະພາໄປສູ່ຄວາມລອດພົ້ນໄດ້

2. **ຄຳນຳ -** ເປັນຫຍັງມະນຸດທົ່ວໂລກຈຶ່ງນັບຖືສາສະໜາຕ່າງໆ? ເປັນຫຍັງມະນຸດຈຶ່ງຕັ້ງສາສະໜາຫຼາຍສາສະໜາຂຶ້ນມາ? ພຣະຄຳພີກ່າວໄວ້ຢ່າງຊັດເຈນວ່າ ມະນຸດໄດ້ຕັ້ງສາສະໜາຕ່າງໆຂຶ້ນມາເພື່ອຂາບໄຫວ້ນັບຖື ແທນທີ່ຈະຮັກແລະນະມັດສະການພຣະເຈົ້າຜູ້ຊົງສ້າງພວກເຂົາ.

3. **ອ່ານພຣະຄຳພີ -** ໂຣມ 1:18-25

4. **ຖາມ - ຕອບ**

4.1 ພຣະເຈົ້າຊົງສະແດງຄວາມໂກດຮ້າຍຕໍ່ມະນຸດຍ້ອນຫຍັງ?

**ຕອບ:** ໂຣມ 1:18 ...............................................................................................

4.2 ມະນຸດຮູ້ເລື່ອງພຣະເຈົ້າໄດ້ແນວໃດ?

**ຕອບ:** ໂຣມ 1:19-20 ...........................................................................................

4.3 ມະນຸດຊຶ່ງເຄີຍຮູ້ຈັກພຣະເຈົ້າຕັ້ງແຕ່ສະໄໝພຣະອົງຊົງສ້າງໂລກ ໄດ້ຕອບສະໜອງພຣະເຈົ້າແນວໃດ?

**ຕອບ:** ໂຣມ 1:21 ...............................................................................................

4.4 ຄົນທີ່ບໍ່ຖວາຍກຽດແດ່ພຣະເຈົ້າມີລັກສະນະແນວໃດ?

**ຕອບ:** ໂຣມ 1:21 ...............................................................................................

4.5 ຄົນທີ່ປະຖິ້ມພຣະເຈົ້າໄດ້ຫັນໄປນະມັດສະການຫຍັງແທນພຣະອົງ?

**ຕອບ:** ໂຣມ 1:22-23 ...........................................................................................

4.6 ສິ່ງສັກສິດ ຄື ຮູບເຄົາຣົບ ແລະ ຜີສາງຂອງສາສະໜາຕ່າງໆ ນຳມາທຽບເທົ່າກັບສະຫງ່າຣາສີຂອງພຣະອົງຜູ້ເປັນຢູ່ຕະຫຼອດຊົ່ວອາຍຸການໄດ້ບໍ?

**ຕອບ:** ໂຣມ 1:22-23 ...........................................................................................

4.7 ພຣະເຈົ້າຊົງປ່ອຍໃຫ້ເຂົາປະພຶດແນວໃດ?

**ຕອບ:** ໂຣມ 1:24 ...............................................................................................

4.8 ເຂົາໄດ້ເອົາຄວາມຈິງເລື່ອງພຣະເຈົ້າມາແລກປ່ຽນກັບຫຍັງ?

**ຕອບ:** ໂຣມ 1:25 ...............................................................................................

4.9 ເຂົານະມັດສະການຫຍັງແທນອົງພຣະຜູ້ສ້າງ?

**ຕອບ:** ໂຣມ 1:25 ...............................................................................................

5. **ອະທິບາຍ** - ສາສະໜາທຸກສາສະໜາບໍ່ມີປະໂຫຍດ

5.1 ມະນຸດທຸກຄົນສາມາດຮູ້ຈັກພຣະລັກສະນະຂອງພຣະເຈົ້າໄດ້ໂດຍການເບິ່ງສັບພະສິ່ງທີ່ພຣະອົງໄດ້ສ້າງຂຶ້ນມາ

5.2 ມະນຸດບໍ່ຍອມຮັບພຣະອົງເພາະເຂົາເປັນຄົນບາບ ຮັກຄວາມມືດຫຼາຍກວ່າຮັກແສງສະຫວ່າງ ແທນທີ່ຈະຮັກແລະນະມັດສະການພຣະອົງ ເຂົາກັບໄປຕັ້ງສາສະໜາອື່ນໆແລະລັດທິຕ່າງໆຂຶ້ນມາ ທີ່ມີການຂາບໄຫວ້ນະມັດສະການຮູບເຄົາຣົບຫຼືຜູ້ນໍາຂອງສາສະໜານັ້ນໆ ແທນທີ່ຈະກັບໃຈມາຫາພຣະເຈົ້າ ແລະ ກາບໄຫວ້ນະມັດສະການພຣະອົງ

5.3 ພຣະເຈົ້າຊົງເສຍໃຈເມື່ອມະນຸດຕັ້ງສາສະໜາຕ່າງໆຂຶ້ນມາເອງ ແລະນະມັດສະການສິ່ງສັກສິດທີ່ບໍ່ແມ່ນພຣະເຈົ້າ ພຣະເຈົ້າຈຶ່ງລົງໂທດ

6. **ການນໍາມາໃຊ້** - ທ່ານເຊື່ອວ່າສາສະໜາອື່ນໆຈະນໍາໄປສູ່ຄວາມລອດພົ້ນໄດ້ບໍ? ຖ້າທ່ານຍັງຍຶດຖືແລະຮ່ວມຢູ່ກັບສາສະໜາອື່ນ ທ່ານຄວນສາລະພາບຕໍ່ພຣະເຈົ້າແລະໃຫ້ພີ່ນ້ອງອາທິຖານເພື່ອທ່ານ.

7. **ຂໍ້ທ່ອງຈໍາ** - ໂຣມ 1:18

# 17. ບາບ

1. **ເປົ້າໝາຍ -** ເພື່ອຊ່ວຍໃຫ້ເຮົາເຂົ້າໃຈວ່າ ທຸກຄົນເປັນຄົນບາບ ແລະ ໃຫ້ເຂົ້າໃຈວ່າບາບເປັນສິ່ງທີ່ໜ້າເບື່ອໜ່າຍທີ່ສຸດໃນສາຍຕາຂອງພຣະເຈົ້າ

2. **ຄໍານໍາ -** ຫຼາຍຄົນຄິດວ່າຕົນເອງບໍ່ເປັນຄົນບາບ ເຂົາຄິດວ່າເຂົາເປັນຄົນດີ ເຂົາບໍ່ເຂົ້າໃຈວ່າທຸກຄົນເປັນຄົນບາບ ແລະ ບໍ່ເຂົ້າໃຈວ່າບາບແມ່ນຫຍັງ ບາບແມ່ນການບໍ່ນັບຖືພຣະເຈົ້າ ການຂາບໄຫວ້ສິ່ງສັກສິດແທນການຂາບໄຫວ້ພຣະເຈົ້າ ແລະ ການເຮັດຊົ່ວ ຄື: ຂ້າຄົນ ລັກຊັບ ໆລໆ ຄົນທົ່ວໄປຖືວ່າບາບເປັນເລື່ອງເລັກນ້ອຍ ແຕ່ພຣະຄໍາພີສອນວ່າບາບເປັນເລື່ອງຮ້າຍແຮງ ເພາະແມ່ນການເຮັດຜິດຕໍ່ພຣະເຈົ້າ

3. **ອ່ານພຣະຄໍາພີ -** ໂຣມ 3:10-18

4. **ຖາມ - ຕອບ**
   - **4.1** ໃນໂລກນີ້ຄົນຊອບທໍາທີ່ບໍ່ມີບາບມີຢູ່ບໍ?
     **ຕອບ:** ໂຣມ 3:10 ..........
   - **4.2** ໃຜບອກວ່າບໍ່ມີຄົນຊອບທໍາຈັກຄົນ?
     **ຕອບ:** ໂຣມ 3:10 ..........
   - **4.3** ມະນຸດທຸກຄົນເປັນແນວໃດ?
     **ຕອບ:** ໂຣມ 3:12 ..........
   - **4.4** ຄໍາເວົ້າຂອງມະນຸດເປັນແນວໃດ?
     **ຕອບ:** ໂຣມ 3:13-14 ..........
   - **4.5** ບາບຂອງມະນຸດພາໃຫ້ເຂົາປະສົບກັບຫຍັງແດ່?
     **ຕອບ:** ໂຣມ 3:16 ..........
   - **4.6** ແມ່ນຫຍັງເປັນສາເຫດເຮັດໃຫ້ມະນຸດຕົກຢູ່ໃນສະພາບແບບນີ້?
     **ຕອບ:** ໂຣມ 3:18 ..........

5. **ອະທິບາຍ -** ບາບ
   - **5.1** ມະນຸດທຸກຄົນເປັນຄົນບາບ ພຣະຄໍາພີຕອນນີ້ສອນຊັດເຈນວ່າ ທຸກຄົນເປັນຄົນບາບ ບໍ່ມີຍົກເວັ້ນຈັກຄົນເລີຍ ເຖິງແມ່ນວ່າຫຼາຍຄົນຈະພະຍາຍາມເຮັດດີ ບໍ່ເຄີຍຂ້າຄົນຫຼືລ່ວງປະເວນີ ກໍຍັງເປັນຄົນບາບຄືກັນໃນສາຍຕາຂອງພຣະເຈົ້າ
   - **5.2** ເມື່ອທ່ານຄິດໃສ່ບາບທີ່ທ່ານເຄີຍເຮັດໄປແລ້ວ ທ່ານມີຄວາມຮູ້ສຶກແນວໃດ? ເສຍໃຈບໍ? ຄຣິສຕຽນທຸກຄົນຕ້ອງກຽດຊັງຄວາມບາບຄືກັນກັບພຣະອົງຊົງກຽດຊັງບາບ

5.3 ຢ່າລືມວ່າພຣະເຈົ້າຊົງເປັນຜູ້ບໍຣິສຸດແລະຊົງກຽດຊັງບາບ ພຣະອົງກໍຊົງລົງໂທດຄົນບາບຢ່າງແນ່ນອນ ເພາະເຫດນີ້ລູກຂອງພຣະເຈົ້າຕ້ອງເອົາໃຈໃສ່ແລະກະຕືລືລົ້ນໃນການຊັກຊວນຄົນເຮົາໃຫ້ກັບໃຈໃໝ່

6. **ການນໍາມາໃຊ້** - ທ່ານມີຄວາມຮູ້ສຶກແນວໃດຕໍ່ບາບທີ່ໄດ້ເຮັດໃນອາທິດນີ້? ເຮົາມີທ່າທີຕໍ່ບາບຄືກັນກັບພຣະເຢຊູບໍ? ຖ້າຫາກທ່ານຮູ້ສຶກເສີຍເລີຍຕໍ່ບາບ ກໍໃຫ້ຮີບກັບໃຈໃໝ່ແລະສໍາຫຼວດໃຈຕົນເອງວ່າເປັນຫຍັງຈຶ່ງເສີຍເລີຍແບບນັ້ນ

7. **ຂໍ້ທ່ອງຈໍາ** - ໂຣມ 3:12

# 18. ການລົງໂທດ

1. **ເປົ້າໝາຍ -** ເພື່ອຊ່ວຍໃຫ້ເຮົາເຂົ້າໃຈວ່າ ພຣະເຈົ້າລົງໂທດຄົນບາບແລະໃຫ້ຮູ້ວ່າພຣະເຈົ້າຕ້ອງລົງໂທດຍ້ອນສາເຫດໃດ

2. **ຄຳນຳ -** ຕັ້ງແຕ່ສະໄໝໂບຮານມາແລ້ວ ປູ່ຍ່າຕາຍາຍບອກລູກຫຼານວ່າ ຄົນບໍ່ດີຕ້ອງຕົກນະຣົກ ສະແດງວ່າມະນຸດຮູ້ແລ້ວວ່າມີການລົງໂທດ ແຕ່ອາດບໍ່ຮູ້ວ່າໃຜເປັນຜູ້ຕັດສິນລົງໂທດ ແລະບໍ່ຮູ້ວ່າການລົງໂທດນັ້ນເປັນແນວໃດ

3. **ອ່ານພຣະຄຳພີ -** ໂຢຮັນ 3:16-21

4. **ຖາມ - ຕອບ**

4.1 ພຣະເຈົ້າຊົງຮັກໃຜ

**ຕອບ:** ໂຢຮັນ 3:16..............................................................................................

4.2 ພຣະເຈົ້າຊົງຮັກມະນຸດຫຼາຍປານໃດ?

**ຕອບ:** ໂຢຮັນ 3:16..............................................................................................

4.3 ມະນຸດທຸກຄົນຈະຕ້ອງຈິບຫາຍໝົດບໍ?

**ຕອບ:** ໂຢຮັນ 3:16..............................................................................................

4.4 ສ່ວນຄົນທີ່ວາງໃຈເຊື່ອໃນພຣະເຢຊູຄຣິດຈະລອດພົ້ນຈາກຫຍັງ?

**ຕອບ:** ໂຢຮັນ 3:18..............................................................................................

4.5 ເປັນຫຍັງມະນຸດບາງຄົນຕ້ອງຖືກຕັດສິນລົງໂທດແລະຕົກນະຣົກ?

**ຕອບ:** ໂຢຮັນ 3:18..............................................................................................

4.6 ມະນຸດບາງສ່ວນຈະຕ້ອງຕົກນະຣົກ ເພາະເຂົາບໍ່ຮັກພຣະເຢຊູຜູ້ເປັນຄວາມສະຫວ່າງ ເຂົາໄດ້ຮັກຫຍັງຫຼາຍກວ່າຮັກຄວາມສະຫວ່າງ?

**ຕອບ:** ໂຢຮັນ 3:19..............................................................................................

4.7 ເປັນຫຍັງມະນຸດຈິ່ງຮັກຄວາມມືດຫຼາຍກວ່າຮັກຄວາມສະຫວ່າງ?

**ຕອບ:** ໂຢຮັນ 3:19..............................................................................................

5. **ອະທິບາຍ -** ການລົງໂທດ

5.1 ພຣະເຈົ້າບໍ່ປາຖະໜາທີ່ຈະລົງໂທດມະນຸດ ແຕ່ຊົງຊ່ວຍມະນຸດໃຫ້ລອດພົ້ນໄດ້ (ໂຢຮັນ 3:17)

5.2 ເຖິງແມ່ນວ່າພຣະເຈົ້າຊົງສົ່ງພຣະເຢຊູມາຊ່ວຍມະນຸດໃຫ້ລອດພົ້ນກໍຍັງມີຫຼາຍຄົນຕ້ອງຕົກນະຣົກເພາະ

- ບໍ່ຍອມເຊື່ອແລະວາງໃຈໃນພຣະເຢຊູ (ໂຢຮັນ 3:18)
- ຮັກແຕ່ຄວາມມືດ ຄື ຮັກຄວາມຊົ່ວ (ໂຢຮັນ 3:19)
- ກຽດຊັງຄວາມສະຫວ່າງ (ໂຢຮັນ 3:20)

5.3 ພຣະຄໍາພີເຕີຍບອກວ່າຄົນບາບທີ່ບໍ່ເຊື່ອຟັງພຣະເຢຊູຈະຕ້ອງຖືກພິພາກສາລົງໂທດຢ່າງແນ່ນອນ ບໍ່ມີຍົກເວັ້ນ ເຂົາຈະບໍ່ລອດດ້ວຍການສ້າງບຸນກຸສົນຫຼືການປະພຶດດີໄດ້ເລີຍ

6. **ການນໍາມາໃຊ້** - ເມື່ອທ່ານຄຶດໃສ່ຄົນໃກ້ຄຽງຫຼືພີ່ນ້ອງທີ່ທ່ານຮັກທີ່ຈະຕົກນະຣົກ ທ່ານມີຄວາມຮູ້ສຶກແນວໃດ? ແລະທ່ານຈະເຮັດຫຍັງເພື່ອຊ່ວຍເຂົາໄດ້?

7. **ຂໍ້ທ່ອງຈໍາ** - ໂຢຮັນ 3:18

# 19. ພຣະເຢຊູເປັນພຣະຜູ້ຊ່ວຍໃຫ້ລອດພົ້ນ

1. **ເປົ້າໝາຍ -** ເພື່ອຊ່ວຍໃຫ້ຄຣິສຕຽນເຂົ້າໃຈວ່າ ພຣະເຢຊູຊົງເປັນພຣະຜູ້ຊ່ວຍໃຫ້ລອດພົ້ນຈາກບາບ ແລະຈາກໂທດຂອງບາບ ແລະ ພຣະອົງຈະເປັນຜູ້ພິພາກສາລົງໂທດ

2. **ຄຳນຳ -** ມະນຸດທົ່ວໂລກເຮັດບຸນເຮັດຄວາມດີເພື່ອຊ່ວຍຕົນເອງໃຫ້ລອດພົ້ນຈາກບາບແລະຈາກໂທດແຫ່ງບາບ ມະນຸດຊ່ວຍຕົນເອງໃຫ້ລອດພົ້ນບໍ່ໄດ້ ຖ້າບໍ່ມີຜູ້ຊ່ວຍໃຫ້ລອດໄດ້ມະນຸດຈະຕ້ອງຖືກພິພາກສາໃຫ້ຕົກນະຮົກທຸກຄົນ

3. **ອ່ານພຣະຄຳພີ -** ໂຣມ 5:6-9

4. **ຖາມ - ຕອບ**

   4.1 ພຣະເຢຊູຍອມຕາຍທີ່ໄມ້ກາງແຂນເພື່ອຊ່ວຍໃຜ?
   **ຕອບ:** ໂຣມ 5:6 ..........

   4.2 ເມື່ອພຣະເຢຊູຕາຍເພື່ອມະນຸດ ມະນຸດຍັງມີສະພາບແນວໃດ?
   **ຕອບ:** ໂຣມ 5:6 ..........

   4.3 ເປັນໄປໄດ້ບໍວ່າມີຜູ້ຍອມຕາຍເພື່ອຄົນດີ?
   **ຕອບ:** ໂຣມ 5:7 ..........

   4.4 ຄົນຍອມຕາຍເພື່ອຄົນດີຍັງຫາຍາກ ຈະເປັນໄປໄດ້ບໍທີ່ຈະມີຄົນຍອມຕາຍເພື່ອຄົນຊົ່ວ?
   **ຕອບ:** ໂຣມ 5:7 ..........

   4.5 ພຣະເຢຊູຍອມຕາຍເພື່ອເຮົາ ໃນເມື່ອເຮົາເປັນແນວໃດ?
   **ຕອບ:** ໂຣມ 5:8 ..........

   4.6 ການທີ່ພຣະເຢຊູຍອມຕາຍເພື່ອເຮົາເມື່ອເຮົາຍັງເປັນຄົນບາບໄດ້ສະແດງໃຫ້ເຮົາເຫັນຫຍັງຈາກພຣະອົງ?
   **ຕອບ:** ໂຣມ 5:8 ..........

   4.7 ພຣະເຈົ້າຊົງນັບວ່າພວກເຮົາເປັນຄົນແບບໃດແລ້ວ?
   **ຕອບ:** ໂຣມ 5:9 ..........

   4.8 ພຣະເຢຊູຊ່ວຍພວກເຮົາໃຫ້ລອດພົ້ນຈາກຄວາມໂກດຮ້າຍຂອງພຣະເຈົ້າໄດ້ແນວໃດ?
   **ຕອບ:** ໂຣມ 5:9 ..........

5. **ອະທິບາຍ -** ພຣະເຢຊູເປັນພຣະຜູ້ຊ່ວຍໃຫ້ລອດພົ້ນ

   5.1 ມະນຸດທຸກຄົນເປັນຄົນບາບ ບາງສາສະໜາສອນໃຫ້ເອົາຕົວລອດເອົາເອງ ແຕ່ເປັນໄປບໍ່ໄດ້ທີ່ມະນຸດຈະຊ່ວຍຕົນເອງໃຫ້ລອດພົ້ນໄດ້ ເພາະເປັນຄົນທີ່ຕາຍແລ້ວຝ່າຍວິນຍານ

   5.2 ພຣະເຈົ້າຊົງເປັນພຣະເຈົ້າທີ່ບໍລິສຸດ ຈຶ່ງຈະຕ້ອງລົງໂທດຄົນບາບ ພຣະເຈົ້າຈະບໍ່ຊົງຫລັບຕາຕໍ່ການເຮັດບາບ ຜູ້ທີ່ເຮັດບາບຈະຕ້ອງຖືກພຣະອົງລົງໂທດ

5.3 ພຣະເຢຊູເປັນພຣະບຸດອົງດຽວຂອງພຣະເຈົ້າທີ່ໄດ້ຍອມລົງມາໃນໂລກນີ້ເພື່ອຮັບໂທດແທນມະນຸດທຸກຄົນ ການທີ່ພຣະເຢຊູຍອມຕາຍເທິງໄມ້ກາງແຂນນັ້ນບໍ່ແມ່ນເພາະພຣະອົງມີບາບ ພຣະອົງກໍບໍ່ມີບາບເລີຍ ແຕ່ພຣະອົງຍອມຕາຍແທນມະນຸດເພື່ອໄຖ່ບາບຂອງທຸກຄົນ.

6. **ການນຳມາໃຊ້** - ເຮົາຈະຮັບການຊ່ວຍໃຫ້ລອດພົ້ນໄດ້ແນວໃດ? ມີໃຜທີ່ຊຸມນຸມທີ່ຍັງບໍ່ທັນໄດ້ຮັບຊີວິດໃໝ່ຈາກພຣະເຢຊູບໍ? ຖ້າມີ ກໍຈົ່ງຊັກຊວນໃຫ້ຜູ້ນັ້ນຕ້ອນຮັບເອົາພຣະເຢຊູຄຣິດເປັນພຣະຜູ້ຊ່ວຍໃຫ້ລອດພົ້ນ.

7. **ຂໍ້ທ່ອງຈຳ** - ໂຣມ 5:8

# 20. ການກັບໃຈໃໝ່

1. **ເປົ້າໝາຍ** - ເພື່ອຊ່ວຍໃຫ້ຄຣິສຕຽນເຂົ້າໃຈວ່າການກັບໃຈໃໝ່ໝາຍຄວາມວ່າແນວໃດແລະມີຄວາມສຳຄັນແນວໃດໃນຊີວິດຄຣິສຕຽນ

2. **ຄຳນຳ** - ຄົນສ່ວນຫຼາຍເຫັນວ່າການເຮັດຊົ່ວບໍ່ແມ່ນເລື່ອງສຳຄັນ ເຂົາບໍ່ເສຍໃຈເພາະບາບທີ່ເຂົາເຄີຍເຮັດມາ ໜ້ອຍຄົນຈະກຽດຊັງແລະເບື່ອໜ່າຍຕົວເອງ ທີ່ເຄີຍຕົວະ ເຄີຍອິດສາຄົນອື່ນຫຼືເຄີຍເຮັດບາບຕ່າງໆ ແຕ່ວ່າພຣະເຈົ້າຕ້ອງການໃຫ້ມະນຸດກຽດຊັງບາບແລະກັບໃຈໃໝ່

3. **ອ່ານພຣະຄຳພີ** - ກິດຈະການ 2:22-24,36-41

4. **ຖາມ - ຕອບ**

4.1 ຄົນອະທຳ(ນອກສາສະໜາ)ໄດ້ເຮັດຫຍັງກັບພຣະເຢຊູ?

**ຕອບ:** ກິດຈະການ 2:23..........................................................................................

4.2 ແມ່ນຜູ້ໃດເຮັດໃຫ້ພຣະເຢຊູຄືນພຣະຊົນ?

**ຕອບ:** ກິດຈະການ 2:24..........................................................................................

4.3 ມະນຸດໄດ້ຄຶງພຣະເຢຊູໃສ່ໄມ້ກາງແຂນ ແຕ່ພຣະເຈົ້າໄດ້ໃຫ້ພຣະເຢຊູຄືນມາຊີວິດອີກ ແລ້ວໄດ້ຊົງແຕ່ງຕັ້ງໃຫ້ເປັນຫຍັງ?

**ຕອບ:** ກິດຈະການ 2:36..........................................................................................

4.4 ເມື່ອຄົນທັງຫຼາຍຟັງເປໂຕເທດສະໜາ ພວກເຂົາກໍເຂົ້າໃຈວ່າພວກເຂົາເອງແມ່ນຜູ້ທີ່ໄດ້ປະຫານຊີວິດຂອງອົງພຣະຜູ້ເປັນເຈົ້າ ແລ້ວພວກເຂົາເກີດມີຄວາມຮູ້ສຶກແນວໃດ?

**ຕອບ:** ກິດຈະການ 2:37..........................................................................................

4.5 ເປໂຕບອກໃຫ້ພວກເຂົາເຮັດຫຍັງ?

**ຕອບ:** ກິດຈະການ 2:38..........................................................................................

4.6 ຄຳວ່າ "ຖິ້ມໃຈເກົ່າເອົາໃຈໃໝ່" ໝາຍຄວາມວ່າແນວໃດ?

**ຕອບ:** ..........................................................................................

4.7 ຖ້າເຮົາຍອມກັບໃຈໃໝ່ ພຣະເຈົ້າຈະຊົງເຮັດຫຍັງເພື່ອເຮົາ?

**ຕອບ:** ກິດຈະການ 2:38..........................................................................................

4.8 ແລ້ວເຮົາຈະໄດ້ຮັບຫຍັງ?

**ຕອບ:** ກິດຈະການ 2:38..........................................................................................

4.9 ພຣະສັນຍານັ້ນມີໄວ້ກັບໃຜແດ່?

**ຕອບ:** ກິດຈະການ 2:39..........................................................................................

5. **ອະທິບາຍ** - ການກັບໃຈໃໝ່

5.1 ການກຽດຊັງເບື່ອໜ່າຍບາບຂອງຕົນເອງ - ເມື່ອມີຄົນກັບໃຈໃໝ່ເຂົາຈະເລີ່ມຕົ້ນດ້ວຍການຮູ້ຕົວວ່າມີຄວາມຜິດບາບແລະຈະເສຍໃຈເພາະບາບເຫຼົ່ານັ້ນ ເຂົາຈະຮູ້ສຶກກຽດຊັງຕົວເອງເພາະວ່າເຂົາເປັນຄົນບາບ

5.2 ການຫັນຫຼັງຕໍ່ບາບ - ຄົນທີ່ກັບໃຈໃໝ່ຕ້ອງປິ່ນຫຼັງໃສ່ບາບ ປະຖິ້ມບາບ ຕັດຂາດເລີກກ່ຽວຂ້ອງກັບບາບຢ່າງເດັດຂາດ

5.3 ການຂໍໃຫ້ພຣະເຈົ້າຍົກໂທດ - ຄົນທີ່ກັບໃຈໃໝ່ຕ້ອງເຂົ້າໃຈວ່າ ມີພຽງພຣະເຢຊູຄຣິດເທົ່ານັ້ນທີ່ຊ່ວຍເຂົາໄດ້ ຖ້າບໍ່ມີພຣະເຢຊູເປັນຜູ້ຊ່ວຍໃຫ້ລອດພົ້ນເຂົາກໍຕ້ອງຕົກນະຮົກ ເພາະສະນັ້ນຄົນທີ່ກັບໃຈໃໝ່ຈະຟ້າວອອ້ນວອນທູນຂໍໃຫ້ພຣະເຈົ້າຊົງຊໍາລະເຂົາຈາກບາບແລະຊົງຍົກໂທດໃຫ້.

6. **ການນໍາມາໃຊ້** - ທ່ານໄດ້ກັບໃໝ່ຫຼືຍັງ? ຖ້າຫາກວ່າມີໃຜທີ່ຍັງບໍ່ໄດ້ຖິ້ມໃຈເກົ່າເອົາໃຈໃໝ່ດ້ວຍໃຈຈິງຂໍໃຫ້ທ່ານຈົ່ງກັບໃຈສາລະພາບດຽວນີ້

7. **ຂໍ້ທ່ອງຈໍາ** - ກິດຈະການ 2:38

# 21. ພຣະຄຸນຂອງພຣະເຈົ້າ

1. **ເປົ້າໝາຍ -** ເພື່ອຊ່ວຍໃຫ້ຄຣິສຕຽນເຂົ້າໃຈວ່າ ເຮົາລອດໄດ້ດ້ວຍພຣະຄຸນຂອງພຣະເຈົ້າ

2. **ຄຳນຳ -** ສາສະໜາທຸກສາສະໜາສອນວ່າ "ເຮັດດີໄດ້ດີ ເຮັດຊົ່ວໄດ້ຊົ່ວ" ຄຳສອນນີ້ໝາຍຄວາມວ່າ ມະນຸດສາມາດຊ່ວຍຕົນເອງໃຫ້ລອດພົ້ນໄດ້ ແຕ່ພຣະຄຳພີຂອງພຣະເຈົ້າສອນກົງກັນຂ້າມ ວ່າ ຄວາມລອດພົ້ນນັ້ນຈະເກີດຈາກການກະທຳຂອງມະນຸດເອງບໍ່ໄດ້ເດັດຂາດ

3. **ອ່ານພຣະຄຳພີ -** ຕິໂຕ 3:3-7

4. **ຖາມ - ຕອບ**
   - 4.1 ກ່ອນທີ່ເຮົາມາເຊື່ອພຣະເຈົ້າເຮົາເຄີຍເປັນຄົນແນວໃດ?
     **ຕອບ:** ຕິໂຕ 3:3 ........................................................................................
   - 4.2 ເຖິງແມ່ນວ່າເຮົາເປັນຄົນຊົ່ວຊ້າຕາມທີ່ເວົ້າໄວ້ແລ້ວ ພຣະເຈົ້າສະແດງທ່າທີຫຍັງຕໍ່ເຮົາ?
     **ຕອບ:** ຕິໂຕ 3:4 ........................................................................................
   - 4.3 ພຣະອົງຊົງປາກົດໃນໂລກນີ້ເພື່ອເຮັດຫຍັງ?
     **ຕອບ:** ຕິໂຕ 3:5 ........................................................................................
   - 4.4 ເຮົາລອດຈາກບາບດ້ວຍການກະທຳດີຂອງເຮົາເອງບໍ?
     **ຕອບ:** ຕິໂຕ 3:5 ........................................................................................
   - 4.5 ຖ້າມະນຸດບໍ່ໄດ້ລອດດ້ວຍການກະທຳດີ ຈະລອດດ້ວຍຫຍັງ?
     **ຕອບ:** ຕິໂຕ 3:5 ........................................................................................
   - 4.6 ພຣະເຈົ້າໄດ້ຕັ້ງເຮົາໄວ້ເປັນຜູ້ຊອບທຳດ້ວຍຫຍັງ?
     **ຕອບ:** ຕິໂຕ 3:7 ........................................................................................

5. **ອະທິບາຍ -** ພຣະຄຸນຂອງພຣະເຈົ້າ
   - 5.1 ພຣະຄຸນຂອງພຣະເຈົ້າ ໝາຍຄວາມວ່າ ພຣະເຈົ້າໄດ້ຊົງສະແດງຄວາມເມດຕາຕໍ່ມະນຸດເຖິງແມ່ນວ່າມະນຸດສົມຄວນໄດ້ຮັບການລົງໂທດ
   - 5.2 ມະນຸດຈະເອົາຕົວລອດດ້ວຍການເຮັດດີຂອງຕົນເອງບໍ່ໄດ້ ເພາະມະນຸດທຸກຄົນເຮັດບາບແລະຄວາມດີຂອງມະນຸດໃນສາຍຕາຂອງພຣະເຈົ້າແລ້ວກໍຄືກັບແພຂາດເກົ່າ
   - 5.3 ພີ່ນ້ອງສາມາດຕອບຄຳຖາມຕໍ່ໄປນີ້ໄດ້ບໍ: ເຮົາເຮັດດີເພື່ອຈະລອດ ຫຼື ເຮົາເຮັດດີເພາະເຮົາລອດແລ້ວ ແນວໃດຖືກ?

6. **ການນຳມາໃຊ້** - ການເຮັດບຸນບໍ່ມີປະໂຫຍດເພາະມະນຸດບໍ່ໄດ້ລອດດ້ວຍການເຮັດດີ ຖ້າຫາກມີໃຜຄິດວ່າຈະລອດເພາະວ່າໄປປະຊຸມເລື້ອຍໆ ຫຼື ເພາະຖວາຍໜຶ່ງສ່ວນສິບຂອງລາຍໄດ້ ຫຼື ເພາະກະທຳກິດຈະການຕ່າງໆ ກໍໃຫ້ເຊົາຄິດແນວນີ້ສາ  ແລ້ວຈຶ່ງຫັນມາເພິ່ງພຣະເຢຊູເທົ່ານັ້ນແລະວາງໃຈໃນພຣະອົງຜູ້ຊົງເຮັດໃຫ້ລອດພົ້ນໄດ້

7. **ຂໍ້ທ່ອງຈຳ** - ຕິໂຕ 3:5

# 22. ການຕັດສິນໃຈ

1. **ເປົ້າໝາຍ -** ເພື່ອຊ່ວຍໃຫ້ເຂົ້າໃຈວ່າເຮົາຕ້ອງເລືອກລະຫວ່າງຊີວິດເກົ່າ ແລະ ພຣະເຢຊູຄຣິດ

2. **ຄໍານໍາ -** ມະນຸດບາງຄົນຢາກໄດ້ຜົນປະໂຫຍດຂອງການເປັນຄຣິສຕຽນ ຄື ຢາກຮັບການຍົກໂທດບາບ ຊີວິດຕະຫຼອດໄປເປັນນິດ ໆລໆ ໂດຍບໍ່ປະຖິ້ມຊີວິດເກົ່າແລະຍັງຄົງເຮັດບາບ ຂາບໄຫວ້ຮູບເຄົາຣົບ ໆລໆ ແຕ່ເຮົາຈະຕ້ອງເລືອກລະຫວ່າງສອງເສັ້ນທາງ ຈະຢຽບເຮືອສອງແຄມບໍ່ໄດ້

3. **ອ່ານພຣະຄໍາພີ -** ລູກາ 18:18-30

4. **ຖາມ - ຕອບ**

   4.1 ເສດຖີໜຸ່ມຢາກໄດ້ຫຍັງ?

   **ຕອບ:** ລູກາ 18:18 ..........................................................................................

   4.2 ເສດຖີໜຸ່ມຍອມຮັບວ່າເຂົາເປັນຄົນບາບບໍ?

   **ຕອບ:** ລູກາ 18:20-21 ......................................................................................

   4.3 ພຣະເຢຊູຊົງໃຫ້ເສດຖີໜຸ່ມປະຖິ້ມຫຍັງແດ່?

   **ຕອບ:** ລູກາ 18:22 ..........................................................................................

   4.4 ໃນການທີ່ພຣະເຢຊູຊົງສັ່ງດັ່ງນັ້ນ ພຣະອົງໃຫ້ເສດຖີໜຸ່ມເລືອກລະຫວ່າງສອງຢ່າງ ສອງຢ່າງນັ້ນຄືຫຍັງແດ່?

   **ຕອບ:** ລູກາ 18:22 ..........................................................................................

   4.5 ເສດຖີໜຸ່ມໄດ້ເລືອກເອົາພຣະເຢຊູຫຼືເລືອກເອົາຊັບສົມບັດ?

   **ຕອບ:** ລູກາ 18:23-25 ......................................................................................

5. **ອະທິບາຍ -** ການຕັດສິນໃຈ

   5.1 ຄຣິສຕຽນຈະຕ້ອງເລືອກລະຫວ່າງພຣະເຢຊູກັບສິ່ງອື່ນໆ ວ່າຈະໃຫ້ສິ່ງໃດເປັນທີໜຶ່ງໃນຊີວິດຂອງເຮົາ

   5.2 ກ່ອນທີ່ພຣະເຢຊູຈະເປັນທີໜຶ່ງໄດ້ ເຮົາຕ້ອງປະຕິເສດຊີວິດເກົ່າ ຄື: ການເຫັນແກ່ຕົວ ສາສະໜາອື່ນ ຮູບເຄົາຣົບຕ່າງໆ ຕະຫຼອດທັງຄວາມຊົ່ວມົວໝອງຂອງໂລກນີ້ ແລ້ວເລືອກເອົາພຣະເຢຊູຜູ້ດຽວ

   5.3 ໃນລູກາ 18:18-27 ຊັບສົມບັດເປັນສິ່ງທີ່ເສດຖີບູຊາໃນໃຈ ເພາະສະນັ້ນພຣະເຢຊູຈຶ່ງໃຫ້ເສດຖີໜຸ່ມປະຕິເສດຊັບສົມບັດແລະຍອມຮັບເອົາພຣະອົງເປັນທີໜຶ່ງໃນໃຈ

6. **ການນຳມາໃຊ້** - ທ່ານໄດ້ເລືອກເອົາອົງພຣະເຢຊູຜູ້ດຽວມາເປັນທີໜຶ່ງໃນຊີວິດຈິດໃຈຂອງທ່ານແລ້ວຫຼືຍັງ? ທ່ານຈະເຊື່ອພຣະເຢຊູແລະສິ່ງອື່ນພ້ອມໆກັນບໍ່ໄດ້ ເພາະພຣະເຢຊູບໍ່ໄດ້ຄືຈຳນວນພຣະທັງຫຼາຍທີ່ມະນຸດໄດ້ສ້າງຂຶ້ນມານົບໄຫວ້ບູຊາ ແຕ່ພຣະເຢຊູເປັນອົງພຣະຜູ້ເປັນເຈົ້າຜູ້ດຽວ ທີ່ມະນຸດທັງປວງຄວນຈະຂາບໄຫວ້ບູຊາ

7. **ຂໍ້ທ່ອງຈຳ -** ລູກາ 18:27

# 23. ການປະຖິ້ມຄວາມເຊື່ອເກົ່າແກ່

1. **ເປົ້າໝາຍ -** ເພື່ອຜູ້ທີ່ເຊື່ອໃນພຣະເຈົ້າຈະຕອບສະໜອງຄວາມຈິງໃນພຣະຄຳພີ ໂດຍການປະຖິ້ມຄວາມເຊື່ອຖືເກົ່າແກ່ຕ່າງໆ ຄື ການຂາບໄຫວ້ຮູບເຄົາຣົບ ການເຊື່ອອຳນາດໄສຍາສາດ ການຖືມື້ຖືຍາມ ເມື່ອເຊື່ອຖືໃນພຣະເຈົ້າແລ້ວກໍຈຳເປັນຈະຕ້ອງປະຖິ້ມສິ່ງເຫຼົ່ານີ້ໃຫ້ໝົດສິ້ນ

2. **ຄຳນຳ -** ບາງຄົນຖາມວ່າເຮົານັບຖືພຣະຫຼາຍອົງພ້ອມກັນບໍ່ໄດ້ບໍ? ເພາະວ່າເຄີຍມີບາງຄົນທີ່ຮັບເຊື່ອພຣະເຈົ້າແລ້ວຍັງມີພຣະທີ່ເປັນຮູບປະຕິມະກຳຢູ່ໃນຄວາມຄອບຄອງແລະຍັງເກັບເອົາໄວ້ເພື່ອຂາບໄຫວ້ບູຊາຢູ່ ອິດທິພົນຄວາມເຊື່ອຖືເກົ່າແກ່ຝັງແໜ້ນໃນຄວາມຄິດຂອງຫຼາຍໆຄົນ ເມື່ອມາເຊື່ອໃນພຣະເຈົ້າແລ້ວເຂົາກໍຍັງຖືມື້ຖືຍາມຢູ່ ແລະບາງຄົນຍັງໄປຫາຄວັດເຂົ້າຈ້ຳ ໝໍຜີ ໝໍເວດມົນກົນຄາຖາ ໃຫ້ເຮັດພິທີໄສຍາສາດໃຫ້ ການເຮັດແບບນີ້ເປັນອັນຕະລາຍຫຼາຍເພາະເປັນການຖອຍຄືນຫລັງຄືກັບຫລິ້ນໄຟ

3. **ອ່ານພຣະຄຳພີ -** ພຣະບັນຍັດສອງ 18:9-14

4. **ຖາມ - ຕອບ**

**4.1** ພຣະເຈົ້າຊົງບໍ່ໃຫ້ປະຊາຊາດຂອງພຣະອົງເຮັດຫຍັງ?

**ຕອບ:** ພຣະບັນຍັດສອງ 18:9 ........................................................................................

**4.2** ພຣະເຈົ້າຊົງຫ້າມເຂົາບໍ່ໃຫ້ເຮັດຫຍັງ?

**ຕອບ:** ພຣະບັນຍັດສອງ 18:10,11

1 ຢ່າເຮັດຫຍັງໃຫ້ລູກ?.......................................................................................................

2 ຢ່າໄປຫາແລະຢ່າໄປເປັນ ..............................................................................................

3 ຢ່າໄປຫາແລະຢ່າໄປເປັນ ..............................................................................................

4 ຢ່າໄປຫາແລະຢ່າໄປເປັນ ..............................................................................................

5 ຢ່າໄປຫາແລະຢ່າໄປເປັນ ..............................................................................................

6 ຢ່າໄປຫາແລະຢ່າໄປເປັນ ..............................................................................................

7 ຢ່າໄປຫາແລະຢ່າໄປເປັນ ..............................................................................................

**4.3** ພຣະເຈົ້າເຕືອນແນວໃດກັບຊົນຊາດທີ່ເຄີຍກະທຳຢ່າງນີ້?

**ຕອບ:** ພຣະບັນຍັດສອງ18:12 .........................................................................................

**4.4** ຄົນຂອງພຣະເຈົ້າຕ້ອງເປັນຄົນແນວໃດ?

**ຕອບ:** ພຣະບັນຍັດສອງ18:13 .........................................................................................

**4.5** ຄົນຂອງພຣະເຈົ້າຈະປະຕິບັດຕາມແບບຢ່າງຄົນທີ່ຢູ່ຮອບໆເຂົາໄດ້ບໍ? ເພາະຫຍັງ?

**ຕອບ:** ພຣະບັນຍັດສອງ 18:14 .......................................................................................

5. **ອະທິບາຍ** - ການປະຖິ້ມຄວາມເຊື່ອເກົ່າແກ່

5.1 ເລື່ອງຮູບເຄົາຣົບ ເຮົານະມັດສະການພຣະເຈົ້າແລະຮູບເຄົາຣົບນຳກັນບໍ່ໄດ້ ເຮົາຕ້ອງຕັດສິນໃຈວ່າເຮົາຈະນະມັດສະການໃຜ ຖ້າເຮົາຈະຕິດຕາມພຣະຜູ້ສ້າງຜູ້ຊົງເປັນພຣະເຈົ້າທ່ຽງແທ້ ເຮົາຈຳເປັນຕ້ອງປະຖິ້ມຮູບເຄົາຣົບ

5.2 ເລື່ອງການຖືມື້ຖືຍາມ ຜີມັນໃສ່ຮ້າຍວັນຂອງພຣະເຈົ້າ ມັນຈະເວົ້າວ່າມື້ນັ້ນບໍ່ດີ ມື້ນັ້ນບໍ່ເໝາະ ແລະກໍເດືອນນັ້ນເດືອນນີ້ບໍ່ດີ ຮວມທັງປີນັ້ນບໍ່ດີຄືກັນ ຄົນທີ່ບໍ່ເຊື່ອພຣະເຈົ້າເຂົາມັກຈະໄປຫາໝໍດູໃຫ້ເບິ່ງມື້ເບິ່ງຍາມໃຫ້ ຜີມັນຈະບອກວ່າ ມື້ໃດດີ ມື້ໃດບໍ່ດີ ຄົນທັງຫຼາຍກໍພາກັນເຊື່ອຖື ແລະເຮັດຕາມຄຳແນະນຳຂອງມັນຢ່າງເຄັ່ງຄັດ ຖ້າເຮົາເຊື່ອໃນພຣະເຈົ້າ ແລ້ວເຮົາຈະບໍ່ຍຶດຖືສິ່ງເຫຼົ່ານີ້ ແຕ່ຈະເຊື່ອພຣະເຈົ້າອົງບໍຣິສຸດເພາະພຣະເຈົ້າຊົງສ້າງວັນເວລາມາໃຫ້ລ້ວນແຕ່ດີທັງສິ້ນ

5.3 ເລື່ອງການຫຼິ້ນເຄື່ອງລາງຂອງຂັງແລະພິທີກຳທາງໄສຍາສາດ ເຮົາຮຽນຮູ້ວ່າພຣະເຈົ້າຊົງບໍ່ມັກການທຳນວຍ ແລະການໃຫ້ຄວັດເຂົ້າຈ້ຳຫຼືໝໍຜີເຮັດພິທີທາງໄສຍາສາດເພາະສິ່ງເຫຼົ່ານີ້ມາຈາກຜີມານຊາຕານ ຜີມານພະຍາຍາມໃຫ້ມະນຸດຕົກຢູ່ໃນອຳນາດຂອງມັນ ແລະ ພະຍາຍາມປິດບັງຄວາມຈິງຂອງພຣະເຈົ້າທ່ຽງແທ້ບໍ່ໃຫ້ເຮົາເຂົ້າໃຈ ເມື່ອເຮົາເຊື່ອໃນພຣະເຈົ້າເຮົາຕ້ອງບໍ່ກ່ຽວຂ້ອງກັບໄສຍາສາດແລະຕ້ອງຕັດຖິ້ມຄຳໝັ້ນສັນຍາທີ່ເຄີຍໃຫ້ໄວ້ແກ່ມັນ ແລະທຳລາຍຮູບເຄົາຣົບທີ່ມີຢູ່ໃນການຄອບຄອງຂອງເຮົາເຊັ່ນກັນ ເຮົາຕ້ອງອະທິຖານມອບຊີວິດຂອງເຮົາໄວ້ໃນມືຂອງພຣະເຈົ້າ ທັງຂໍໃຫ້ພຣະອົງຊົງປົກປ້ອງຮັກສາໄວ້ຈາກສິ່ງຊົ່ວຮ້າຍທັງປວງ

6. **ການນຳມາໃຊ້**

6.1 ທ່ານເຄີຍບົວລະບັດຮັບໃຊ້ສິ່ງສັກສິດອັດໃດແດ່? ທ່ານຍັງມີຮູບເຄົາຣົບຢູ່ໃນເຮືອນແລະຢູ່ໃນການຄອບຄອງຂອງທ່ານບໍ? ຖ້າມີ ທ່ານຈະເຮັດແນວໃດກັບຮູບເຄົາຣົບນັ້ນ?

6.2 ທ່ານເຄີຍໄປຫາໝໍດູເພື່ອເບິ່ງເລີກຍາມໃຫ້ບໍ? ທ່ານພ້ອມທີ່ຈະສາລະພາບຄວາມບາບນີ້ບໍ? ແລ້ວຈິ່ງຂໍພຣະອົງຊົງເປັນຜູ້ນຳແຕ່ລະມື້ໃນການດຳເນີນຊີວິດຂອງທ່ານຕໍ່ໄປ

6.3 ທ່ານພ້ອມທີ່ຈະຕັດສາຍສຳພັນກັບໄສຍາສາດຕ່າງໆທີ່ທ່ານເຄີຍມີຢູ່ແລະທຳລາຍວັດຖຸທາງໄສຍາສາດ ແລ້ວອາທິຖານຂໍໃຫ້ພຣະເຢຊູມາຄອບຄອງຊີວິດຂອງທ່ານບໍ?

7. **ຂໍ້ທ່ອງຈຳ** - ພຣະບັນຍັດສອງ 18:10-12

# 24. ຄຣິສຕຽນເປັນລູກຂອງພຣະເຈົ້າ

1. **ເປົ້າໝາຍ -** ເພື່ອຊ່ວຍໃຫ້ຄຣິສຕຽນເຂົ້າໃຈວ່າ ເຮົາເປັນລູກຂອງພຣະເຈົ້າ

2. **ຄໍານໍາ -** ລາງເທື່ອພີ່ນ້ອງຄຣິສຕຽນຖືກຄົນພາຍນອກເວົ້າໃສ່ວ່າເປັນລູກນ້ອງຝຣັ່ງຫຼືເປັນລູກນ້ອງອາຈານຄົນນັ້ນ ອາຈານຄົນນີ້ ແຕ່ບໍ່ເປັນຄວາມຈິງ ຄຣິສຕຽນບໍ່ໄດ້ເປັນລູກນ້ອງຂອງໃຜເລີຍແຕ່ເປັນລູກທີ່ຮັກຂອງພຣະບິດາເຈົ້າ

3. **ອ່ານພຣະຄໍາພີ -** ໂຢຮັນ 1:12,13 ແລະ ໂຣມ 8:14-17

4. **ຖາມ - ຕອບ**

4.1 ມະນຸດຈະມາເປັນລູກຂອງພຣະເຈົ້າໄດ້ແນວໃດ?

**ຕອບ:** ໂຢຮັນ 1:12 ..................................................................................................

4.2 ການເປັນລູກຂອງພຣະເຈົ້ານັ້ນບໍ່ໄດ້ເກີດຈາກຫຍັງແດ່?

**ຕອບ:** ໂຢຮັນ 1:13 ບໍໄດ້ເກີດຈາກ

(1) ..................................................................................................

(2) ..................................................................................................

(3) ..................................................................................................

4.3 ຖ້າພຣະວິນຍານນໍາພາຜູ້ໃດສະແດງວ່າຜູ້ນັ້ນເປັນຄົນແນວໃດ?

**ຕອບ:** ໂຣມ 8:14 ..................................................................................................

4.4 ຄຣິສຕຽນເປັນລູກຂອງພຣະເຈົ້າແລະຈຶ່ງໄດ້ເອີ້ນພຣະເຈົ້າວ່າແນວໃດ?

**ຕອບ:** ໂຣມ 8:15 ..................................................................................................

4.5 ເຮົາຈະຮູ້ວ່າເຮົາເປັນລູກຂອງພຣະເຈົ້າແນ່ນອນໄດ້ແນວໃດ?

**ຕອບ:** ໂຣມ 8:16 ..................................................................................................

4.6 ຖ້າເຮົາເປັນລູກຂອງພຣະເຈົ້າແລ້ວເຮົາມີຖານະຫຍັງແດ່?

**ຕອບ:** ໂຣມ 8:17 ..................................................................................................

4.7 ການເປັນຜູ້ຮ່ວມຮັບມໍລະດົກກັບພຣະຄຣິດ ຈະໄດ້ຮັບຫຍັງອີກຮ່ວມກັບພຣະອົງແດ່?

**ຕອບ:** ໂຣມ 8:17 ..................................................................................................

5. **ອະທິບາຍ -** ຄຣິສຕຽນເປັນລູກຂອງພຣະເຈົ້າ

5.1 ມະນຸດທຸກຄົນຖືກໍາເນີດມີຊີວິດຝ່າຍເນື້ອໜັງຈາກພໍ່ແມ່ ແຕ່ການໄດ້ຊີວິດຝ່າຍຈິດວິນຍານຈະຕ້ອງເກີດໃໝ່ຈາກພຣະວິນຍານບໍຣິສຸດ

5.2 ຄຣິສຕຽນເປັນລູກຂອງພຣະເຈົ້າ ໝາຍຄວາມວ່າເຮົາບໍ່ໄດ້ເປັນລູກກໍາພ້າຫຼືເປັນລູກຂອງພະຍາມານ ແຕ່ເປັນລູກຂອງພຣະເຈົ້າຜູ້ເປັນພຣະບິດາທີ່ດີທີ່ສຸດ

5.3 ການເປັນລູກຂອງພຣະເຈົ້າ ໝາຍຄວາມວ່າ ເຮົາຢູ່ໃນຄອບຄົວຂອງພຣະອົງແລະມີສັກສີນຳກັນກັບພຣະອົງ ການຢູ່ໃນຄອບຄົວຂອງພຣະອົງ ໝາຍຄວາມວ່າ ພຣະອົງເປັນພຣະບິດາຂອງເຮົາ ແລະຄົນນັບຫຼາຍລ້ານຄົນທີ່ເຊື່ອໃນພຣະອົງໃນທົ່ວໂລກກໍເປັນພີ່ນ້ອງຂອງເຮົາ ແລະເຮົາມີສ່ວນຮ່ວມທຸກສຸກນຳກັນກັບພີ່ນ້ອງຄຣິສຕຽນທັງຫຼາຍເຫຼົ່ານັ້ນ ເພາະວ່າເຮົາຢູ່ໃນຄອບຄົວດຽວກັນ

## 6. ການນຳມາໃຊ້

6.1 ທ່ານຈະໝັ້ນໃຈວ່າທ່ານເປັນລູກຂອງພຣະເຈົ້າໄດ້ແນວໃດ?

6.2 ຄຣິສຕຽນເຊິ່ງເປັນລູກຂອງພຣະເຈົ້າຄວນມີທ່າທີແນວໃດຕໍ່ພຣະເຈົ້າ ທ່ານເປັນລູກທີ່ຮູ້ຈັກບຸນຄຸນຂອງພຣະບິດາບໍ?

## 7. ຂໍ້ທ່ອງຈຳ - ໂຢຮັນ 1:12

# 25. ເສລີພາບໃນພຣະຄຣິດ

1. **ເປົ້າໝາຍ -** ເພື່ອຊ່ວຍໃຫ້ເຮົາເຂົ້າໃຈວ່າ ເຮົາໄດ້ຮັບການໄຖ່ໃຫ້ພົ້ນຈາກການເປັນຂ້ອຍຂ້າຂອງບາບ ໂດຍພຣະເຢຊູຄຣິດແລ້ວ

2. **ຄຳນຳ -** ພຣະເຢຊູຄຣິດເຈົ້າໄດ້ກູ້ພວກເຮົາໃຫ້ເປັນອິດສະຫຼະຈາກການເປັນຂ້ອຍຂ້າຂອງບາບແລະ ຄວາມຕາຍ ເພື່ອໃຫ້ເຮົາເຮັດຕາມນ້ຳພຣະໄທຂອງພຣະເຈົ້າຕໍ່ໄປ

3. **ອ່ານພຣະຄຳພີ -** ໂຣມ 8:1-4

4. **ຖາມ - ຕອບ**

4.1 ພີ່ນ້ອງທີ່ຢູ່ໃນພຣະຄຣິດໄດ້ລອດພົ້ນຈາກຫຍັງ?

**ຕອບ:** ໂຣມ 8:1 ..........................................................................................

4.2 ເຮົາໄດ້ຮັບການຊ່ວຍໃຫ້ລອດພົ້ນຈາກຫຍັງອີກ?

**ຕອບ:** ໂຣມ 8:2 ..........................................................................................

4.3 ໃຜເປັນຜູ້ຊ່ວຍກູ້ເຮົາອອກມາຈາກການເປັນຂ້ອຍຂ້າຂອງບາບແລະຄວາມຕາຍ?

**ຕອບ:** ໂຣມ 8:2 ..........................................................................................

4.4 ການເຮັດຕາມທຳບັນຍັດນັ້ນຊ່ວຍໃຫ້ເຮົາລອດພົ້ນຈາກການເປັນຂ້ອຍຂ້າຂອງບາບແລະຄວາມ ຕາຍໄດ້ບໍ?

**ຕອບ:** ໂຣມ 8:3 ..........................................................................................

4.5 ເປັນຫຍັງການເຮັດຕາມທຳບັນຍັດຊ່ວຍກູ້ເຮົາບໍ່ໄດ້?

**ຕອບ:** ໂຣມ 8:3 ..........................................................................................

4.6 ພຣະເຢຊູສາມາດຊ່ວຍກູ້ເຮົາແນວໃດ?

**ຕອບ:** ໂຣມ 8:3,4 ......................................................................................

4.7 ເຮົາຄວນປະຕິບັດພຣະອົງແນວໃດ?

**ຕອບ:** ໂຣມ 8:4 ..........................................................................................

5. **ອະທິບາຍ** - ເສລີພາບໃນພຣະຄຣິດ

ຖ້າສົມມຸດວ່າມີຊາຍຄົນໜຶ່ງໄປຂະໂມຍຂອງແລ້ວຖືກຈັບໄດ້ ສານສັ່ງລົງໂທດໃຫ້ເສຍຄ່າປັບໄໝໜຶ່ງລ້ານສາມແສນກີບ ແຕ່ຊາຍຄົນນັ້ນບໍ່ສາມາດຊ່ວຍຕົນເອງໄດ້ ຈຶ່ງຕ້ອງຕິດຄຸກເພາະບໍ່ມີເງິນ ແຕ່ຢູ່ມາມື້ໜຶ່ງມີຄົນສະໝັກໃຈຊ່ວຍເຫຼືອຜູ້ຊາຍຄົນນັ້ນໃຫ້ອອກຄຸກໄດ້ ແຕ່ຜູ້ຊ່ວຍນັ້ນຕ້ອງເສຍຄ່າປັບໄໝແທນນັກໂທດຈຶ່ງຈະອອກຈາກຄຸກເປັນອິດສະຫຼະໄດ້ ຕຳຫຼວດຈະບໍ່ຍອມປ່ອຍນັກໂທດຖ້າຍັງບໍ່ທັນໄດ້ເສຍຄ່າປັບໄໝ ໃນທຳນອງດຽວກັນ ພຣະເຢຊູໄດ້ມາໄຖ່ເຮົາອອກຈາກການເປັນຂ້ອຍຂ້າແຫ່ງບາບແລະຄວາມຕາຍ ເຮົາຈຶ່ງໄດ້ຮັບອິດສະຫຼະພາບ ແລ້ວໃນເມື່ອພຣະເຢຊູໄດ້ຍອມຮັບເອົາໂທດແທນເຮົາທັງຫຼາຍແລ້ວ ຈະບໍ່ມີຜູ້ໃດເອົາໂທດເຮົາໄດ້ອີກ ຍ້ອນຄວາມຊ່ວຍເຫຼືອຈາກພຣະເຢຊູຄຣິດນີ້ເຮົາຈຶ່ງໄດ້ຮັບເສລີພາບໃນພຣະອົງ

6. **ການນຳມາໃຊ້** - ຂໍໃຫ້ທ່ານພິຈາລະນາເບິ່ງວ່າທ່ານໄດ້ຮັບເສລີພາບໃນພຣະຄຣິດແລ້ວບໍ? ຫຼືທ່ານຍັງເປັນຂ້ອຍຂ້າຂອງບາບແລະຄວາມຕາຍຢູ່? ຖ້າຍັງບໍ່ໄດ້ຮັບເສລີພາບກໍຈົ່ງສຳນຶກວ່າ ພຣະເຢຊູຊົງເສຍຄ່າໄຖ່ສຳລັບທ່ານຮຽບຮ້ອຍແລ້ວ ທ່ານຈຶ່ງບໍ່ຕ້ອງຕົກຢູ່ໃນອຳນາດຂອງບາບແລະຄວາມຕາຍອີກຕໍ່ໄປ

7. **ຂໍ້ທ່ອງຈຳ** - ໂຣມ 8:1,2

# 26. ພຣະເຈົ້າຊົງເລືອກສັນພວກເຮົາ

1. **ເປົ້າໝາຍ -** ເພື່ອຊ່ວຍໃຫ້ຄຣິສຕຽນເຂົ້າໃຈວ່າ ພຣະເຈົ້າໄດ້ຊົງເລືອກສັນເຮົາໄວ້ຕັ້ງແຕ່ກ່ອນຊົງເລີ່ມສ້າງໂລກ

2. **ຄຳນຳ -** ພຣະເຈົ້າຊົງຕຽມທຸກສິ່ງທຸກຢ່າງໄວ້ຄົບບໍຣິບູນເພື່ອໃຫ້ພວກເຮົາມີຄວາມລອດພົ້ນ ພວກເຮົາຈຶ່ງພຽງແຕ່ຕ້ອງໄດ້ເຊື່ອເທົ່ານັ້ນຈຶ່ງຈະຮັບຄວາມລອດພົ້ນແລະຄວາມຊ່ວຍເຫຼືອນີ້ທີ່ພຣະອົງຕຽມໄວ້ໃຫ້ແລ້ວ ຫຼາຍກວ່ານັ້ນ ພຣະອົງໄດ້ຊົງເລືອກສັນຜູ້ທີ່ເປັນລູກຂອງພຣະອົງກ່ອນທີ່ພຣະອົງຊົງເລີ່ມສ້າງໂລກ ຂອບຄຸນພຣະເຈົ້າທີ່ພຣະອົງຊົງເປີດທາງໂດຍທາງພຣະເຢຊູຄຣິດເພື່ອໃຫ້ພວກເຮົາໄປຫາພຣະບິດາໄດ້

3. **ອ່ານພຣະຄຳພີ -** ເອເຟໂຊ 1:3-12

4. **ຖາມ - ຕອບ**

   4.1 ໃຜໄດ້ອວຍພອນເຮົາທາງຈິດວິນຍານທຸກປະການ?

   **ຕອບ:** ເອເຟໂຊ 1:3 ........................................................................................

   4.2 ພຣະເຈົ້າໄດ້ເລືອກເຮົາໄວ້ເພື່ອຈະໃຫ້ເຮົາເປັນຄົນແບບໃດ?

   **ຕອບ:** ເອເຟໂຊ 1:4 ........................................................................................

   4.3 ພຣະເຈົ້າໄດ້ເລືອກສັນເຮົາໄວ້ເພື່ອຈະເປັນຄົນແບບໃດອີກ?

   **ຕອບ:** ເອເຟໂຊ 1:4 ........................................................................................

   4.4 ພຣະເຈົ້າໄດ້ກຳນົດເຮົາໄວ້ເປັນຫຍັງອີກ?

   **ຕອບ:** ເອເຟໂຊ 1:5 ........................................................................................

   4.5 ໃຜຊົງປະທານການໄຖ່ບາບແລະການຊົງອະໄພໂທດບາບໃຫ້ເຮົາ?

   **ຕອບ:** ເອເຟໂຊ 1:7 ........................................................................................

   4.6 ການໄຖ່ມະນຸດເປັນແຜນການຂອງໃຜ?

   **ຕອບ:** ເອເຟໂຊ 1:11 ......................................................................................

   4.7 ພຣະເຈົ້າຊົງແຕ່ງຕັ້ງເຮົາໄວ້ເພື່ອຫຍັງ?

   **ຕອບ:** ເອເຟໂຊ 1:12 ......................................................................................

5. **ອະທິບາຍ -** ພຣະເຈົ້າຊົງເລືອກສັນພວກເຮົາ ແຜນການຂອງພຣະເຈົ້າມີ 4 ປະການນຳກັນ ຄື

   5.1 ພຣະເຈົ້າຊົງເລືອກເຮົາໄວ້ເພື່ອເປັນລູກຂອງພຣະອົງ

   5.2 ພຣະເຈົ້າຊົງເລືອກເຮົາໃຫ້ອອກຈາກທາງຂອງໂລກ ຂອງມານ ແລະ ຂອງເນື້ອໜັງ

   5.3 ພຣະເຈົ້າຊົງໂຜດໃຫ້ເຮົາເປັນຜູ້ຊອບທຳໂດຍການຊຳລະດ້ວຍເລືອດຂອງພຣະເຢຊູ

   5.4 ພຣະເຈົ້າຍັງຊົງໂຜດໃຫ້ເຮົາມີສັກສີອີກນຳ ເປັນຕົ້ນເມື່ອເຮົາເຂົ້າໄປໃນສະຫວັນ

6. **ການນຳມາໃຊ້** - ພຣະອົງຊົງເຮັດທຸກສິ່ງທຸກຢ່າງເພື່ອເຮົາ ພີ່ນ້ອງຄິດວ່າຄວນຈະຕອບສະໜອງພຣະຄຸນແລະຄວາມຮັກຂອງພຣະເຢຊູແນວໃດ?

7. **ຂໍ້ທ່ອງຈຳ -** ເອເຟໂຊ 1:3,4

# 27. ຄວາມໝັ້ນຄົງເມື່ອໄດ້ຮັບຄວາມລອດພົ້ນ

1. **ເປົ້າໝາຍ -** ເພື່ອຊ່ວຍໃຫ້ຄຣິສຕຽນເຂົ້າໃຈວ່າເຮົາໝັ້ນຄົງໃນພຣະອົງ

2. **ຄຳນຳ -** ຄຣິສຕຽນບາງຄົນອາດຢ້ານວ່າຖ້າຫາກເຂົາເຮັດຫຍັງຜິດ ພຣະເຈົ້າຈະປະຖິ້ມເຂົາບໍ່ໃຫ້ເປັນລູກຂອງພຣະອົງອີກຕໍ່ໄປ ຫຼື ບາງຄົນອາດເປັນຫ່ວງວ່າຜີມານຊາຕານຫຼືສິ່ງແວດລ້ອມຕ່າງໆຈະສາມາດເຮັດໃຫ້ເຂົາຂາດຈາກຄວາມຮັກຂອງພຣະເຈົ້າ ແຕ່ພຣະຄຳພີຂອງພຣະເຈົ້າສອນວ່າບໍ່ຕ້ອງຢ້ານເລີຍ

3. **ອ່ານພຣະຄຳພີ -** ໂຣມ 8:35-39

4. **ຖາມ - ຕອບ**

4.1 ບໍ່ມີຫຍັງທີ່ສາມາດເຮັດໃຫ້ເຮົາທັງຫຼາຍຂາດຈາກຄວາມຮັກຂອງພຣະອົງໄດ້ ສິ່ງທີ່ເຮັດໃຫ້ຂາດບໍ່ໄດ້ເຫຼົ່ານັ້ນມີຫຍັງແດ່?

**ຕອບ:** ໂຣມ 8:35 (1) ........................................................

(2) .................................................... (5) ..................................................

(3) .................................................... (6) ..................................................

(4) .................................................... (7) ..................................................

4.2 ເປັນຫຍັງຄຣິສຕຽນຕ້ອງຖືກກົດຂີ່ຂົ່ມເຫັງສະເໝີ?

**ຕອບ:** ໂຣມ 8:36 ..............................................................................................

4.3 ເຫດການບາງຢ່າງສາມາດເຮັດໃຫ້ເຮົາຍອມແພ້ແລະຂາດຈາກຄວາມຮັກຂອງພຣະເຈົ້າໄດ້ບໍ?

**ຕອບ:** ໂຣມ 8:37 ..............................................................................................

4.4 ໃຫ້ຂຽນສິ່ງທີ່ບໍ່ສາມາດເຮັດໃຫ້ເຮົາຂາດຈາກຄວາມຮັກຂອງພຣະເຈົ້າອີກ 9 ຢ່າງ

**ຕອບ:** ໂຣມ 8:38,39

(1) .................................................... (6) ..................................................

(2) .................................................... (7) ..................................................

(3) .................................................... (8) ..................................................

(4) .................................................... (9) ..................................................

(5) ....................................................

5. **ອະທິບາຍ -** ຄວາມໝັ້ນຄົງເມື່ອໄດ້ຮັບຄວາມລອດພົ້ນ

ບໍ່ມີຫຍັງເລີຍທີ່ສາມາດເຮັດໃຫ້ເຮົາຂາດຈາກຄວາມຮັກ, ຄວາມເອັນດູ, ການເບິ່ງແຍງດູແລ ແລະການຊ່ວຍເຫຼືອຂອງພຣະເຈົ້າໄດ້ ເພາະວ່າພຣະເຈົ້າຊົງໂອບອຸ້ມເຮົາໄວ້ໃນອ້ອມແຂນຂອງພຣະອົງ ພຣະເຈົ້າຈະບໍ່ຍອມຖິ້ມລູກທີ່ຮັກຂອງພຣະອົງ

5.1 ຄວາມຕາຍບໍ່ສາມາດເຮັດໃຫ້ເຮົາຂາດຈາກຄວາມຮັກຂອງພຣະເຈົ້າ ເພາະຖ້າເຮົາຕາຍເມື່ອໃດ ເຮົາກໍຈະໄປຢູ່ກັບພຣະເຈົ້າເມື່ອນັ້ນ

5.2 ຊີວິດແລະສິ່ງທີ່ເກີດຂຶ້ນໃນຊີວິດປະຈຳວັນ ບໍ່ສາມາດເຮັດໃຫ້ເຮົາຂາດຈາກຄວາມຮັກຂອງພຣະເຈົ້າໄດ້ ເພາະວ່າຕະຫຼອດເວັນຄືນ ຄຣິສຕຽນກໍຢູ່ໃນພຣະຄຸນຄວາມຮັກແລະການດູແລຂອງພຣະອົງ

5.3 ຜີບໍ່ສາມາດເຮັດໃຫ້ເຮົາຂາດຈາກຄວາມຮັກຂອງພຣະເຈົ້າໄດ້ ເຖິງແມ່ນວ່າອຳນາດຊົ່ວຈະພະຍາຍາມເຮັດໃຫ້ເຮົາຫັນອອກຈາກຄວາມຮັກຂອງພຣະອົງ ແຕ່ມັນຕ້ອງພ່າຍແພ້ເພາະພຣະເຈົ້າຊົງຢູ່ກັບເຮົາ

6. **ການນຳມາໃຊ້** - ເວລາທີ່ພີ່ນ້ອງເຈັບປ່ວຍ ໝາຍຄວາມວ່າພຣະເຈົ້າໄດ້ປະຖິ້ມເຮົາບໍ? ພຣະອົງບໍ່ຮັກເຮົາແລ້ວບໍ? ເວລາທີ່ຜີມານພະຍາຍາມຊ່ວງຊີງເຮົາໄປຈາກພຣະເຈົ້າ ເຮົາເຄີຍຢ້ານບໍວ່າຜີນັ້ນຈະເຮັດໃຫ້ພຣະເຈົ້າປະຖິ້ມເຮົາບໍ? ເມື່ອເຮົາເດືອດຮ້ອນ ເຮົາເຂົ້າໃຈຜິດວ່າ ພຣະເຈົ້າເຊົາຮັກເຮົາບໍ? ຂໍໃຫ້ພີ່ນ້ອງຈົ່ງໝັ້ນໃຈໃນພຣະເຈົ້າຜູ້ຊົງເປັນຄວາມຮັກແລະໝັ້ນໃຈໃນຄຳໝັ້ນສັນຍາຂອງພຣະອົງຜູ້ຊົງສັດຈິງ ແລ້ວຈົ່ງຂອບຄຸນພຣະອົງທີ່ພຣະອົງໄດ້ຊົງໂຜດປະທານຄວາມລອດຕະຫຼອດໄປເປັນນິດຢ່າງແນ່ນອນໃຫ້ແກ່ເຮົາ

7. **ຂໍ້ທ່ອງຈຳ** - ໂຣມ 8:38,39

# 28. ພຣະເຈົ້າ

1. **ເປົ້າໝາຍ -** ເພື່ອຊ່ວຍໃຫ້ຄຣິສຕຽນເຂົ້າໃຈວ່າ ພຣະລັກສະນະແລະການກະທຳຂອງພຣະເຈົ້າເປັນແນວໃດ

2. **ຄຳນຳ -** ພີ່ນ້ອງສາມາດຮັກຄົນທີ່ທ່ານບໍ່ຮູ້ຈັກໄດ້ບໍ? ໃນທຳນອງດຽວກັນເຮົາຈະຮັກພຣະເຈົ້າໄດ້ແນວໃດ ຖ້າຫາກເຮົາຍັງບໍ່ຮູ້ຈັກພຣະອົງດີ

3. **ອ່ານພຣະຄຳພີ -** 1 ຕີໂມທຽວ 6:13-16

4. **ຖາມ - ຕອບ**

4.1 ໃຜເປັນຜູ້ໂຜດປະທານຊີວິດໃຫ້ແກ່ຄົນທັງປວງ?

**ຕອບ:** 1 ຕີໂມທຽວ 6:13 ..........................................................................................

4.2 ຄຳສັ່ງຂອງພຣະເຈົ້າເຮົາສົມຄວນຮັກສາແນວໃດແລະດົນປານໃດ?

**ຕອບ:** 1 ຕີໂມທຽວ 6:14 ..........................................................................................

4.3 ລັກສະນະຂອງພຣະເຈົ້າມີຫຍັງແດ່?

**ຕອບ:** 1 ຕີໂມທຽວ 6:15

(1)............................................... (2)..................................................

(3)............................................... (4)..................................................

4.4 ພຣະເຈົ້າຊົງຕາຍໄດ້ບໍ?

**ຕອບ:** 1 ຕີໂມທຽວ 6:16 ..........................................................................................

4.5 ພຣະເຈົ້າຊົງສະຖິດຢູ່ໃສ?

**ຕອບ:** 1 ຕີໂມທຽວ 6:16 ..........................................................................................

4.6 ມີມະນຸດຜູ້ໃດທີ່ເຄີຍເຫັນພຣະເຈົ້າບໍ?

**ຕອບ:** 1 ຕີໂມທຽວ 6:16 ..........................................................................................

4.7 ເຮົາຄວນຖວາຍຫຍັງໃຫ້ກັບພຣະເຈົ້າ?

**ຕອບ:** 1 ຕີໂມທຽວ 6:16 ..........................................................................................

5. **ອະທິບາຍ -** ພຣະເຈົ້າ

5.1 ພຣະເຈົ້າເປັນພຣະເຈົ້າອົງດຽວ ແຕ່ໃນພຣະຄຳພີເວົ້າເຖິງພຣະບິດາ ພຣະເຢຊູຄຣິດ ແລະພຣະວິນຍານບໍຣິສຸດ ເຊິ່ງບໍ່ແມ່ນພຣະເຈົ້າສາມອົງແຕ່ເປັນພຣະເຈົ້າອົງດຽວກັນທີ່ປະກອບດ້ວຍສາມພຣະພາກ

5.2 ພຣະເຈົ້າເປັນພຣະເຈົ້າ ຊົງຢູ່ເໜືອຈັກກະວານ ເໜືອກະສັດທຸກອົງ ເໜືອເທບພະເຈົ້າທັງປວງເໜືອຜີມານຊາຕານ ເໜືອທຸກສິ່ງທຸກຢ່າງ ບໍ່ມີສິ່ງໃດເລີຍທີ່ບໍ່ໄດ້ຢູ່ໃຕ້ຕີນຂອງພຣະອົງ

5.3 ພຣະລັກສະນະແລະການກະທຳຂອງພຣະເຈົ້າ ພຣະເຈົ້າໄດ້ຊົງປະທານພຣະຄຳພີໃຫ້ແກ່ມະນຸດ ເຮົາ ເພື່ອເຮົາຈະໄດ້ຮູ້ຈັກພຣະລັກສະນະແລະການກະທຳຂອງພຣະອົງ

6. **ການນຳມາໃຊ້** - ພຣະລັກຊະນະອັນໃດຂອງພຣະເຈົ້າທີ່ປະທັບໃຈທ່ານຫຼາຍທີ່ສຸດ? ເປັນຫຍັງທ່ານ ປະທັບໃຈພຣະລັກສະນະນັ້ນ? ໃຫ້ພີ່ນ້ອງທຸກຄົນອອກຄວາມຄິດເຫັນ ແລ້ວໃຫ້ອະທິຖານ ສັນລະເສີນພຣະເຈົ້າສຳລັບພຣະລັກສະນະຕ່າງໆຂອງພຣະອົງ

7. **ຂໍ້ທ່ອງຈຳ -** 1 ຕີໂມທຽວ 6:16

# 29. ພຣະຄຳພີ

1. **ເປົ້າໝາຍ -** ເພື່ອຊ່ວຍໃຫ້ເຂົ້າໃຈວ່າພຣະຄຳພີເປັນພຣະຄຳແລະເປັນຖ້ອຍຄຳຂອງພຣະເຈົ້າສຳລັບມະນຸດ

2. **ຄຳນຳ -** ຕັ້ງແຕ່ພຣະເຈົ້າຊົງສ້າງມະນຸດ ພຣະອົງຊົງຕິດຕໍ່ກັບມະນຸດເລື້ອຍໆມາເຖິງສິ່ງທີ່ພຣະເຈົ້າຕ້ອງການໃຫ້ມະນຸດຮູ້ ພຣະອົງຊົງດົນໃຈມະນຸດບາງຄົນໃຫ້ບັນທຶກໄວ້ເປັນພຣະຄຳພີ ເພື່ອມະນຸດຈະມີພຣະຄຳຂອງພຣະອົງໄວ້ອ່ານແລະເຮັດຕາມໄດ້.

3. **ອ່ານພຣະຄຳພີ -** 2 ຕີໂມທຽວ 3:16-17, ລູກາ 1:1-4

4. **ຖາມ - ຕອບ**

   4.1 ຄົນທີ່ຂຽນພຣະຄຳພີໄດ້ຮັບຫຍັງຈາກພຣະເຈົ້າ ເພື່ອຈະຮູ້ວ່າຄວນຂຽນແນວໃດ?

   **ຕອບ:** 2 ຕີໂມທຽວ 3:16 ..........................................................................................

   4.2 ພຣະຄຳພີມີປະໂຫຍດຫຍັງແດ່?

   **ຕອບ:** 2 ຕີໂມທຽວ 3:16

   (1) ....................................................... (2) ..................................................

   (3) ....................................................... (4) ..................................................

   4.3 ພຣະເຈົ້າຊົງໃຊ້ພຣະຄຳພີເພື່ອຄົນຂອງພຣະອົງຈະເປັນແນວໃດ?

   **ຕອບ:** 2 ຕີໂມທຽວ 3:17 ..........................................................................................

   4.4 **ເປົ້າໝາຍ**ທີ່ພຣະເຈົ້າຊົງໃຊ້ຄົນຂອງພຣະອົງໃຫ້ຂຽນພຣະຄຳພີນີ້ຄືຫຍັງ?

   **ຕອບ:** ລູກາ 1:4 ......................................................................................................

5. **ອະທິບາຍ -** ພຣະຄຳພີ

   5.1 ພຣະຄຳພີເປັນໜັງສືພິເສດເໜືອກວ່າໜັງສືທຸກຫົວທີ່ມີຢູ່ໃນໂລກນີ້ ເພາະເປັນພຣະຄຳຂອງພຣະເຈົ້າທີ່ພຣະອົງຊົງໂຜດປະທານໃຫ້ມະນຸດ ຂໍໃຫ້ທ່ານເຂົ້າໃຈວ່າໜັງສືທີ່ທ່ານຖືໄວ້ນັ້ນ ເຖິງແມ່ນວ່າເປັນພຽງເຈ້ຍເທົ່ານັ້ນ ແຕ່ຄຳສອນທີ່ຢູ່ໃນຫົວນັ້ນແມ່ນມາຈາກພຣະເຈົ້າແລະເປັນສິ່ງທີ່ສັກສິດທີ່ສຸດ

   5.2 ພຣະຄຳພີຈະບໍ່ມີປະໂຫຍດຖ້າທ່ານບໍ່ນຳມາໃຊ້ໃນຊີວິດປະຈຳວັນ ສະນັ້ນທ່ານຕ້ອງຮຽນພຣະຄຳພີທຸກມື້

5.3 ພຣະຄຳພີມີປະໂຫຍດຫຼາຍ ຄື:

- ສັ່ງສອນໃຫ້ເຮົາຮູ້ຈັກນ້ຳໃຈຂອງພຣະເຈົ້າ ໃຫ້ເຮົາຮູ້ທຸກສິ່ງທຸກຢ່າງທີ່ກ່ຽວກັບພຣະເຈົ້າ, ມະນຸດ, ຄວາມບາບ, ຄວາມລອດພົ້ນ, ສະຫວັນ, ນະຣົກ, ໆລໆ
- ຕັກເຕືອນໃຫ້ເຮົາລະມັດລະວັງແລະຫຼີກເວັ້ນຈາກສິ່ງທີ່ບໍ່ດີ
- ປັບປຸງແກ້ໄຂບັນຫາຕ່າງໆ ເມື່ອເຮົາເຮັດຜິດພຣະຄຳພີຈະຊີ້ແນະໃຫ້ເຮົາແກ້ບັນຫາເຫຼົ່ານັ້ນ
- ອົບຮົມໃນທາງທຳເພື່ອເຮົາຈະເປັນຄົນທີ່ດີພ້ອມ ບໍ່ຕ້ອງອາຍພຣະເຈົ້າ

6. **ການນຳມາໃຊ້** - ໃຫ້ທ່ານຕັ້ງໃຈອ່ານພຣະຄຳພີ ຄື ເລີ່ມຕົ້ນອ່ານມັດທາຍ ບົດທີ 1 ແລ້ວອ່ານມື້ລະບົດຕໍ່ໄປ ໃຫ້ອ່ານອອກສຽງນຳເພື່ອໃຫ້ສະມາຊິກຄອບຄົວຟັງນຳ ເມື່ອອ່ານໝົດແລ້ວໃຫ້ຂີດກ້ອງຈັກຂໍ້ໜຶ່ງທີ່ທ່ານປະທັບໃຈ ເມື່ອອ່ານພຣະຄຳພີໃໝ່ໝົດແລ້ວໃຫ້ເລີ່ມອ່ານພຣະຄຳພີເດີມ

7. **ຂໍ້ທ່ອງຈຳ** - 2 ຕີໂມທຽວ 3:16,17

# 30. ຜີມານຊາຕານ

1. **ເປົ້າໝາຍ -** ເພື່ອສອນໃຫ້ເຮົາເຂົ້າໃຈວ່າຜີມານຊາຕານແມ່ນໃຜ ມັນເຮັດຫຍັງ ແລະປາຍທາງຂອງມັນແມ່ນແນວໃດ

2. **ຄຳນຳ -** ທຸກມື້ນີ້ເຮົາໄດ້ເຫັນຄວາມຊົ່ວຮ້າຍຢ່າງຫຼວງຫຼາຍໃນສັງຄົມ ເປັນຫຍັງຈຶ່ງເປັນຈັ່ງຊີ້

3. **ອ່ານພຣະຄຳພີ -** ປະຖົມມະການ 2:15-17; 3:1-7,15; 1 ໂຢຮັນ 3:8; ພຣະນິມິດ 20:10

4. **ຖາມ - ຕອບ**

   4.1 ໃຜເປັນຜູ້ລ້າງງູ (ຊາຕານ)?

   **ຕອບ:** ປະຖົມມະການ 3:1 ........................................................................................

   4.2 ພຣະເຈົ້າຊົງບອກວ່າ ຖ້າມະນຸດກິນໝາກໄມ້ຂອງກົກທີ່ໃຫ້ຮູ້ຈັກຄວາມດີແລະຄວາມຊົ່ວ ມະນຸດຈະຮັບໂທດແນວໃດ?

   **ຕອບ:** ປະຖົມມະການ 2:17 ......................................................................................

   4.3 ຊາຕານໄດ້ເວົ້າຫຍັງກັບຜູ້ຍິງ?

   **ຕອບ:** ປະຖົມມະການ 3:4 ........................................................................................

   4.4 ຜູ້ຍິງໄດ້ເຊື່ອໃຜແລະໄດ້ເຮັດຫຍັງ?

   **ຕອບ:** ປະຖົມມະການ 3:6 ........................................................................................

   4.5 ພຣະເຈົ້າຊົງບອກຫຍັງກັບຊາຕານ?ໝາຍຄວາມວ່າຈັ່ງໃດ?

   **ຕອບ:** ປະຖົມມະການ 3:15 ......................................................................................

   4.6 ພຣະເຢຊູເຂົ້າມາໃນໂລກນີ້ເພື່ອຫຍັງ?

   **ຕອບ:** 1 ໂຢຮັນ 3:8 ................................................................................................

   4.7 ພະຍາມານເຄີຍໄດ້ເຮັດຫຍັງ? ມັນຖືກຖິ້ມລົງໄປຢູ່ໃສ?

   **ຕອບ:** ພຣະນິມິດ 20:10 .........................................................................................

   4.8 ມັນຕ້ອງຢູ່ຫັ້ນເຫິງປານໃດ?

   **ຕອບ:** ພຣະນິມິດ 20:10 .........................................................................................

5. **ອະທິບາຍ -** ຜີມານຊາຕານ

   5.1 ພຣະຍາມານເຄີຍເປັນທູດສະຫວັນ ແຕ່ມັນຢາກຍົກຕົວເອງໃຫ້ເປັນຄືກັນກັບອົງພຣະຜູ້ເປັນເຈົ້າສູງສຸດ ພຣະເຈົ້າກໍເລີຍໄລ່ມັນລົງມາຢູ່ແຜ່ນດິນໂລກ

   5.2 ເມື່ອລົງຈາກສະຫວັນແລ້ວ ມານມີຊື່ວ່າເຈົ້າແຫ່ງຍານອາກາດ (ເອເຟໂຊ 2:2) ມັນລໍ້ລວງມະນຸດໃຫ້ຢູ່ໃຕ້ອຳນາດຂອງມັນ

5.3 ພຣະເຢຊູເຂົ້າມາໃນໂລກນີ້ໃນສະພາບມະນຸດເພື່ອຈະທຳລາຍອຳນາດຂອງຊາຕານໂດຍການຕາຍເທິງໄມ້ກາງແຂນ ແລະ ເປັນຂຶ້ນມາຈາກຄວາມຕາຍ ພຣະເຢຊູຊົງມີຣິດອຳນາດເໜືອຜີມານຊາຕານສະເໝີ

5.4 ໃນທີ່ສຸດມານຈະເຮັດຫຍັງອີກບໍ່ໄດ້ ເພາະມັນຈະຖືກຖິ້ມລົງໃນບຶງໄຟນະຣົກແລະມັນຈະຕ້ອງທົນທຸກທໍລະມານຕະຫຼອດໄປເປັນນິດ

6. **ການນຳມາໃຊ້** - ຄຣິສຕຽນຄວນຢ້ານຜີມານຊາຕານບໍ ຍ້ອນຫຍັງ? (ເບິ່ງ 1 ໂຢຮັນ 4:4) ອ່ານຢາໂກໂບ 4:7 ຂໍ້ຄວາມນີ້ມີຄວາມສຳຄັນຕໍ່ຊີວິດປະຈຳວັນຂອງທ່ານແນວໃດ?

7. **ຂໍ້ທ່ອງຈຳ** - 1 ໂຢຮັນ 4:4

# 31. ການສ້າງໂລກ

1. **ເປົ້າໝາຍ -** ເພື່ອຊ່ວຍໃຫ້ຄຣິສຕຽນເຂົ້າໃຈວ່າ ພຣະເຈົ້າເປັນພຣະຜູ້ສ້າງສິ່ງສາລະພັດທັງປວງ

2. **ຄຳນຳ -** ຫຼາຍຄົນມັກເວົ້າວ່າ ໂລກນີ້ເກີດຂຶ້ນມາເອງ ນີ້ເປັນຄຳເວົ້າທີ່ບໍ່ມີຫຼັກຖານເລີຍ ທຸກສິ່ງຕ້ອງມີຜູ້ສ້າງ ຄື: ຄົນບໍ່ໄດ້ເກີດຂຶ້ນມາເອງ ແຕ່ຖືກສ້າງຂຶ້ນໃນທ້ອງຂອງແມ່ ເຮືອນບໍ່ໄດ້ເກີດຂຶ້ນເອງ ແຕ່ມີຊ່າງປຸກມັນຂຶ້ນມາ ດັ່ງນັ້ນຄວາມຈິງກໍແມ່ນ ບໍ່ມີສິ່ງໃດເກີດຂຶ້ນມາເອງໄດ້ ໃນຕົ້ນເດີມພຣະເຈົ້າແມ່ນຜູ້ທີ່ຊົງສ້າງທຸກສິ່ງທຸກຢ່າງຂຶ້ນ

3. **ອ່ານພຣະຄຳພີ -** ປະຖົມມະການ 1:1 - 2:3

4. **ຖາມ - ຕອບ**

   ພຣະເຈົ້າຊົງເຮັດຫຍັງແດ່ໃນ

   4.1 ວັນທີ່ 1

   **ຕອບ:** ປະຖົມມະການ 1:3-5..........................................................

   4.2 ວັນທີ່ 2

   **ຕອບ:** ປະຖົມມະການ 1:6-8..........................................................

   4.3 ວັນທີ່ 3

   **ຕອບ:** ປະຖົມມະການ 1:9-13..........................................................

   4.4 ວັນທີ່ 4

   **ຕອບ:** ປະຖົມມະການ 1:14-19..........................................................

   4.5 ວັນທີ່ 5

   **ຕອບ:** ປະຖົມມະການ 1:20-23..........................................................

   4.6 ວັນທີ່ 6

   **ຕອບ:** ປະຖົມມະການ 1:24-31..........................................................

   4.7 ວັນທີ່ 7

   **ຕອບ:** ປະຖົມມະການ 2:1-3..........................................................

5. **ອະທິບາຍ -** ການສ້າງໂລກ

   5.1 ພຣະເຈົ້າຊົງມີຊີວິດຢູ່ກ່ອນທຸກສິ່ງທີ່ພຣະເຈົ້າຊົງສ້າງຂຶ້ນ

   5.2 ພຣະເຈົ້າຊົງສ້າງໝົດທຸກສິ່ງທຸກຢ່າງຢູ່ໃນຈັກກະວານ

   5.3 ພຣະເຈົ້າເປັນຜູ້ສ້າງທຸກສິ່ງ ພຣະອົງຈຶ່ງຊົງເປັນເຈົ້າຂອງໝົດທຸກສິ່ງທຸກຢ່າງ

   5.4 ພຣະເຈົ້າເປັນພຣະຜູ້ສ້າງ ພຣະອົງຈຶ່ງຊົງເປັນເຈົ້າຂອງໂລກແລະເປັນເຈົ້າຂອງຊີວິດມະນຸດ ມະນຸດຄວນນັບຖືພຣະອົງເປັນໃຫຍ່ ຄວນເຊື່ອຟັງແລະເອົາໃຈໃສ່ໃນພຣະອົງ

6. **ການນໍາມາໃຊ້** - ຖ້າຫາກພີ່ນ້ອງພັກເຮືອນຜູ້ໃຫຍ່ ຈະຕ້ອງລະມັດລະວັງຮັກສາຄວາມສະອາດ ແລະ ບໍ່ເຮັດຫຍັງເສຍໃນເຮືອນຜູ້ໃຫຍ່ນັ້ນ ໃນທໍານອງດຽວກັນ ໂລກທີ່ເຮົາພັກອາໄສຢູ່ດຽວນີ້ເປັນຂອງພຣະເຈົ້າ ເຮົາຄວນມີທ່າທີແນວໃດຕໍ່ໂລກຂອງພຣະເຈົ້າ?

7. **ຂໍ້ທ່ອງຈໍາ** - 1 ໂກຣິນໂທ 8:6 "ແຕ່ວ່າສໍາລັບພວກເຮົານັ້ນມີພຣະເຈົ້າດຽວ ຄື ພຣະບິດາ ແລະສິ່ງສາລະພັດທັງປວງເກີດຂຶ້ນມາຈາກພຣະອົງ ແລະ ເຮົາເປັນມາເພື່ອພຣະອົງ"

# 32. ມະນຸດບໍ່ເຊື່ອຟັງພຣະເຈົ້າ

1. **ເປົ້າໝາຍ** - ເພື່ອຊ່ວຍໃຫ້ເຮົາເຂົ້າໃຈວ່າ ບາບແລະຄວາມຊົ່ວມາຈາກໃສ

2. **ຄຳນຳ** - ພຣະຄຳພີສອນວ່າ ບໍ່ມີຈັກຄົນທີ່ເປັນຄົນດີເລີດແລະຊອບທຳ ການທີ່ມະນຸດກາຍເປັນຄົນບາບນັ້ນເກີດຂຶ້ນໄດ້ແນວໃດ? ເປັນຫຍັງມະນຸດເຮົາເຮັດບາບຕັ້ງແຕ່ເປັນເດັກນ້ອຍໆ? ເປັນຫຍັງມະນຸດເຮົາເຮັດຊົ່ວໄດ້ໂດຍບໍ່ມີໃຜສອນ?

3. **ອ່ານພຣະຄຳພີ** - ປະຖົມມະການ 2:9,15-17; 3:1-24

4. **ຖາມ - ຕອບ**

4.1 ພຣະເຈົ້າຊົງຫ້າມບໍ່ໃຫ້ມະນຸດຄູ່ທຳອິດເຮັດຫຍັງ?

**ຕອບ:** ປະຖົມມະການ 2:16-17 ..........................................................................................

4.2 ງູຫລອກລວງຜູ້ຍິງແນວໃດ?

**ຕອບ:** ປະຖົມມະການ 3:4 ..................................................................................................

4.3 ງູເວົ້າອີກວ່າ ຖ້າກິນໝາກໄມ້ຈາກກົກທີ່ພຣະເຈົ້າຊົງຫ້າມ ນາງຈະເປັນແນວໃດແດ່?

**ຕອບ:** ປະຖົມມະການ 3:5 ..................................................................................................

4.4 ມະນຸດຄູ່ທຳອິດໄດ້ຟັງຄວາມງູ ຫຼື ໄດ້ຟັງຄວາມພຣະເຈົ້າ?

**ຕອບ:** ປະຖົມມະການ 3:6 ..................................................................................................

4.5 ເມື່ອເຂົາໄດ້ຍິນສຽງຂອງພຣະເຈົ້າສະເດັດມາໃນສວນ ເຂົາເຮັດແນວໃດ?

**ຕອບ:** ປະຖົມມະການ 3:8 ..................................................................................................

4.6 ເປັນຫຍັງເຂົາຈຶ່ງບໍ່ຢາກພົບພຣະເຈົ້າ?

**ຕອບ:** ປະຖົມມະການ 3:10 ................................................................................................

4.7 ໃນທີ່ສຸດ ພຣະເຈົ້າຊົງເຮັດຫຍັງເພື່ອຈະເຮັດໃຫ້ມະນຸດຄູ່ທຳອິດບໍ່ສາມາດກິນໝາກໄມ້ຈາກກົກໄມ້ແຫ່ງຊີວິດ?

**ຕອບ:** ປະຖົມມະການ 3:23-24 ..........................................................................................

5. **ອະທິບາຍ**

5.1 ເມື່ອພຣະເຈົ້າຊົງສ້າງມະນຸດຄູ່ທຳອິດຂຶ້ນມາ ພຣະອົງຊົງໃຫ້ເຂົາມີສະຕິປັນຍາໃນການຕັດສິນໃຈເລືອກໄດ້ ມະນຸດຈຶ່ງສາມາດເລືອກໄດ້ວ່າຈະຟັງຄວາມພຣະເຈົ້າຫຼືບໍ່

5.2 ມະນຸດຄູ່ທຳອິດໄດ້ຍອມຟັງຄວາມຊາຕານ ເຂົາໄດ້ຍອມໃຫ້ຊາຕານເປັນເຈົ້ານາຍຂອງເຂົາ ນັບແຕ່ນັ້ນມາມະນຸດທີ່ພຣະເຈົ້າຊົງສ້າງໄວ້ໃຫ້ເປັນເຈົ້າຂອງໂລກກໍໄດ້ຕົກເປັນຂ້ອຍຂ້າຂອງມານ

5.3 ມະນຸດມີບາບຕັ້ງແຕ່ເກີດມາເພາະການເປັນຄົນບາບຕິດມາຈາກເຊື້ອສາຍ ໝາຍຄວາມວ່າ ເຮົາເປັນຄົນບາບເນື່ອງຈາກພໍ່ແມ່ ປູ່ຍ່າ ຕາຍາຍ ທຸກຄົນເປັນຄົນບາບ ບໍ່ມີໃຜສອນໃຫ້ເຮົາເຮັດບາບແຕ່ເຮົາທຸກຄົນກໍຍັງເຮັດຢູ່ເພາະເປັນທຳມະຊາດຂອງມະນຸດ

6. **ການນຳມາໃຊ້** - ມະນຸດເປັນຄົນບາບເລີ່ມຕັ້ງແຕ່ຄູ່ທຳອິດ ເພາະບໍ່ຟັງຄວາມພຣະເຈົ້າແລະເລືອກທີ່ຈະຢູ່ຝ່າຍມານ ສະນັ້ນຄົນທີ່ເກີດໃນຄອບຄົວຄຣິສຕຽນຈະຖືວ່າເປັນຄຣິສຕຽນໂດຍອັດຕະໂນມັດກໍບໍ່ໄດ້ ຖ້າທ່ານຄິດວ່າທ່ານເປັນຄຣິສຕຽນເພາະພໍ່ແມ່ເຊື່ອພຣະເຈົ້າກໍຈົ່ງກັບໃຈໃໝ່ ເພື່ອຈະຫຼຸດພົ້ນຈາກບາບແລະເປັນລູກທີ່ແທ້ຈິງຂອງພຣະເຈົ້າ

7. **ຂໍ້ທ່ອງຈຳ -** ໂຣມ 3:23

# 33. ແຜນການຂອງພຣະເຈົ້າ

1. **ເປົ້າໝາຍ -** ເພື່ອຊ່ວຍໃຫ້ຄຣິສຕຽນເຂົ້າໃຈວ່າແຜນການຂອງພຣະເຈົ້າສຳລັບມະນຸດເປັນແນວໃດ

2. **ຄຳນຳ -** ຫຼັງຈາກທີ່ມະນຸດກະບົດຕໍ່ພຣະເຈົ້າແລ້ວ ພຣະອົງມີແຜນການຫຍັງເພື່ອຈະຊ່ວຍມະນຸດ? ພຣະເຈົ້າຊົງຍຸດຕິທຳແລະບໍຣິສຸດ ຈະບໍ່ຊົງເສີຍເມີຍຕໍ່ບາບ ພຣະອົງຕ້ອງລົງໂທດຄົນບາບ ແລະຈະລົງໂທດຕາມເໝາະສົມ ມະນຸດຈະຕ້ອງພິນາດຈິບຫາຍທຸກຄົນ ແຕ່ພຣະເຈົ້າບໍ່ປາຖະໜາໃຫ້ມະນຸດຈິບຫາຍ ຈຶ່ງວາງແຜນການເພື່ອແກ້ໄຂບັນຫາຂອງມະນຸດໂດຍສົ່ງພຣະເຢຊູຄຣິດລົງມາໃນໂລກ

3. **ອ່ານພຣະຄຳພີ -** ຟີລິບປອຍ 2:5-11

4. **ຖາມ - ຕອບ**
   - 4.1 ພຣະເຢຊູຊົງມີສະພາບເປັນໃຜ?
     **ຕອບ:** ຟີລິບປອຍ 2:5-6 ........................................................................................
   - 4.2 ເຖິງແມ່ນວ່າພຣະເຢຊູຊົງເປັນພຣະເຈົ້າ ແຕ່ພຣະອົງຊົງມີທ່າທີແນວໃດ?
     **ຕອບ:** ຟີລິບປອຍ 2:6-7 ........................................................................................
   - 4.3 ພຣະເຢຊູຊົງຍອມຮັບສະພາບຫຍັງແດ່?
     **ຕອບ:** ຟີລິບປອຍ 2:7-8 ........................................................................................
   - 4.4 ເມື່ອພຣະເຢຊູຊົງປາກົດໃນສະພາບມະນຸດ ພຣະອົງຊົງຍອມເຮັດຫຍັງແດ່?
     **ຕອບ:** ຟີລິບປອຍ 2:8...........................................................................................
   - 4.5 ພຣະເຢຊູຊົງຍອມຕາຍແນວໃດ?
     **ຕອບ:** ຟີລິບປອຍ 2:8...........................................................................................
   - 4.6 ພຣະບິດາເຈົ້າຊົງຕອບສະໜອງຕໍ່ການເສຍສະຫຼະຂອງພຣະເຢຊູແນວໃດ?
     **ຕອບ:** ຟີລິບປອຍ 2:9...........................................................................................
   - 4.7 ມະນຸດຈະຕ້ອງສະແດງທ່າທີແນວໃດຕໍ່ພຣະເຢຊູ?
     **ຕອບ:** ຟີລິບປອຍ 2:10-11 ....................................................................................

5. **ອະທິບາຍ -** ແຜນການຂອງພຣະເຈົ້າເມື່ອມະນຸດກະບົດຕໍ່ພຣະເຈົ້າແລະຟັງຄວາມມານ
   - 5.1 ມະນຸດຕົກຢູ່ໃນບ້ວງແຫ່ງຄວາມບາບ
   - 5.2 ພຣະເຢຊູຊົງຍອມລົງມາຮັບບ້ວງທີ່ມະນຸດຕົກຢູ່ ເພື່ອໄຖ່ມະນຸດອອກຈາກບາບ
   - 5.3 ພຣະເຈົ້າໄດ້ຊົງຍົກພຣະເຢຊູຂຶ້ນຢ່າງສູງເໜືອສິ່ງທັງປວງ ເພື່ອຕອບສະໜອງຕໍ່ຄວາມຖ່ອມໃຈ ຄວາມເສຍສະຫຼະ ຄວາມບໍຣິສຸດ ຄວາມຮັກ ແລະຄວາມເມດຕາຂອງພຣະເຢຊູ
   - 5.4 ໃນທີ່ສຸດຜູ້ທີ່ເຊື່ອໃນພຣະເຢຊູຈະໄດ້ຮັບການຍົກຂຶ້ນໃນທຳນອງດຽວກັນກັບພຣະອົງ ນີ້ແຫຼະເປັນແຜນການຂອງພຣະເຈົ້າ

6. **ການນຳມາໃຊ້**

6.1 ຄຣິສຕຽນບໍ່ຢ້ານອະນາຄົດ ຖ້າມີໃຜທີ່ຍັງຢ້ານອະນາຄົດ ໃຫ້ອະທິຖານເພື່ອຄົນນັ້ນຈະໄດ້ເຂົ້າໃຈແຜນການຂອງພຣະເຈົ້າແລະບໍ່ຢ້ານອີກຕໍ່ໄປ

6.2 ທ່ານຈະອະທິບາຍແຜນການຂອງພຣະເຈົ້າໃຫ້ໝູ່ທີ່ຍັງບໍ່ເຊື່ອເຂົ້າໃຈໄດ້ບໍ?

7. **ຂໍ້ທ່ອງຈຳ -** ຟີລິບປອຍ 2:10-11

# 34. ການກຳເນີດຂອງພຣະເຢຊູຄຣິດ

1. **ເປົ້າໝາຍ -** ເພື່ອຊ່ວຍໃຫ້ເຂົ້າໃຈວ່າ ພຣະເຢຊູເປັນບຸດມະນຸດແລະເປັນບຸດຂອງພຣະເຈົ້າ

2. **ຄຳນຳ -** ບໍ່ມີໃຜຄືພຣະເຢຊູຄຣິດ ພຣະເຢຊູເປັນບຸດມະນຸດ ໝາຍຄວາມວ່າ ເປັນມະນຸດແທ້ໆ 100% ແລະ ເປັນພຣະບຸດຂອງພຣະເຈົ້າ ໝາຍຄວາມວ່າ ເປັນພຣະເຈົ້າແທ້ໆ 100%

3. **ອ່ານພຣະຄຳພີ -** ມັດທາຍ 1:18-25

4. **ຖາມ - ຕອບ**

 4.1 ນາງມາຣີກັບທ້າວໂຢເຊັບແຕ່ງງານແລ້ວຫຼືຍັງ?

 **ຕອບ:** ມັດທາຍ 1:18................................................................................................

 4.2 ມາຣີຍັງເປັນຍິງປະເພດໃດ?

 **ຕອບ:** ມັດທາຍ 1:23................................................................................................

 4.3 ມາຣີຕັ້ງທ້ອງໄດ້ແນວໃດ?

 **ຕອບ:** ມັດທາຍ 1:18................................................................................................

 4.4 ເມື່ອປາກົດວ່າມາຣີມີທ້ອງ ໂຢເຊັບຄິດວ່າຈະເຮັດແນວໃດ?

 **ຕອບ:** ມັດທາຍ 1:19................................................................................................

 4.5 ກ່ອນທີ່ໂຢເຊັບຈະຖອນໝັ້ນ ໄດ້ມີເຫດການຫຍັງເກີດຂຶ້ນກັບເຂົາ?

 **ຕອບ:** ມັດທາຍ 1:20................................................................................................

 4.6 ທູດສະຫວັນມາບອກວ່າມາຣີຈະເກີດລູກຊາຍ ແລ້ວໂຢເຊັບຈະຕ້ອງຕັ້ງຊື່ຫຍັງໃຫ້?

 **ຕອບ:** ມັດທາຍ 1:21................................................................................................

 4.7 ຜູ້ປະກາດພຣະທຳ ທຳນວຍວ່າ ພຣະເຢຊູຈະມີຊື່ວ່າຫຍັງ ແລ້ວຊື່ນັ້ນຈະມີຄວາມໝາຍແນວໃດ?

 **ຕອບ:** ມັດທາຍ 1:22-23 ..........................................................................................

 4.8 ຫຼັງຈາກທີ່ໂຢເຊັບຕື່ນຂຶ້ນເຂົາໄດ້ເຮັດຫຍັງແດ່ທີ່ເປັນການປະຕິບັດຕາມຄຳສັ່ງຂອງພຣະເຈົ້າ?

 **ຕອບ:** ມັດທາຍ 1:24-25

 (1)...................................................................................................................

 (2)...................................................................................................................

 (3)...................................................................................................................

5. **ອະທິບາຍ -** ກຳເນີດຂອງພຣະເຢຊູຄຣິດ

 5.1 ໃຜເປັນພໍ່ຂອງພຣະເຢຊູຄຣິດ? ພຣະເຢຊູບໍ່ມີພໍ່ນອກຈາກພຣະບິດາເຈົ້າ ໂຢເຊັບເປັນພໍ່ລ້ຽງເທົ່ານັ້ນເອງ ພຣະບິດາເຈົ້າເປັນພໍ່ຂອງພຣະເຢຊູ ພຣະເຢຊູຈຶ່ງເປັນບຸດຂອງພຣະບິດາເຈົ້າ ແລະເປັນພຣະເຈົ້າ 100%

5.2 ໃຜເປັນແມ່ຂອງພຣະເຢຊູຄຣິດ? ນາງມາຣີເປັນແມ່ຂອງພຣະເຢຊູ ມາຣີເປັນຜູ້ຍິງທຳມະດາ ແຕ່ນາງຮັກພຣະເຈົ້າຫຼາຍ ນາງເປັນຄົນທີ່ພຣະເຈົ້າໃຊ້ໄດ້ ພຣະເຢຊູເປັນລູກຊາຍກົກຂອງນາງ ສະນັ້ນພຣະອົງຈຶ່ງເປັນມະນຸດແທ້ຈິງ 100%

5.3 ພຣະເຢຊູເປັນພຣະເຈົ້າ (ເອມານູເອັນ = ພຣະເຈົ້າຢູ່ກັບເຮົາ) ແລະ ເປັນມະນຸດຄືກັນ ມາຣີຕັ້ງທ້ອງດ້ວຍຣິດເດດຂອງພຣະວິນຍານບໍຣິສຸດ ຊຶ່ງເປັນສິ່ງອັດສະຈັນ ພຣະເຢຊູເປັນມະນຸດ ພຣະອົງຈຶ່ງຊົງເຂົ້າໃຈເຮົາ ແລະພຣະເຢຊູເປັນພຣະເຈົ້າ ພຣະອົງຈຶ່ງຊົງຊ່ວຍເຮົາໃຫ້ລອດພົ້ນໄດ້ ແລະພຣະອົງຊົງເປັນຜູ້ກາງລະຫວ່າງພຣະເຈົ້າກັບມະນຸດ

6. **ການນຳມາໃຊ້** - ມະນຸດຄົນໜຶ່ງບໍ່ສາມາດໃຫ້ອີກຄົນໜຶ່ງລອດພົ້ນບາບໄດ້ເພາະຫຍັງ? ພຣະເຢຊູເປັນພຣະຜູ້ຊ່ວຍໃຫ້ລອດພົ້ນຂອງມະນຸດໄດ້ເພາະຫຍັງ?

7. **ຂໍ້ທ່ອງຈຳ** - ມັດທາຍ 1:23 ("ເອມານູເອັນ" ແປວ່າ ພຣະເຈົ້າຊົງຢູ່ກັບເຮົາ)

# 35. ການຕາຍ ແລະ ການເປັນຄືນມາຈາກຕາຍຂອງພຣະເຢຊູຄຣິດ

1. **ເປົ້າໝາຍ -** ເພື່ອຊ່ວຍໃຫ້ເຮົາເຂົ້າໃຈວ່າ ພຣະເຢຊູໄດ້ຊົງຄືນມາຈາກຕາຍ ແລ້ວໃນທຸກມື້ນີ້ພຣະອົງຊົງມີຊີວິດຢູ່

2. **ຄຳນຳ -** ຜູ້ກໍ່ຕັ້ງສາສະໜາທຸກສາສະໜາທີ່ຢູ່ໃນໂລກນີ້ກໍຕາຍໄປແລ້ວ ແລະ ມີບ່ອນທີ່ເກັບກະດູກຂອງເຂົາໄວ້ ແຕ່ພຣະເຢຊູບໍ່ຄືກັບພວກເຂົາ ບໍ່ມີແມ່ນແຕ່ບ່ອນທີ່ເກັບກະດູກຂອງພຣະອົງ ເພາະພຽງ 3 ມື້ຫຼັງຈາກພຣະອົງໄດ້ຊົງຕາຍ ພຣະອົງກໍໄດ້ຊົງເປັນຄືນມາຈາກຕາຍ

3. **ອ່ານພຣະຄຳພີ -** ມາຣະໂກ 15:21 - 16:8

4. **ຖາມ - ຕອບ**

   4.1 ເມື່ອພຣະເຢຊູຖືກຄຶງເທິງໄມ້ກາງແຂນ ຄົນທັງປວງເຍາະເຍີ້ຍພຣະອົງວ່າແນວໃດ?
   **ຕອບ:** ມາຣະໂກ 15:30 ..............................................................................................

   4.2 ຕອນບ່າຍສາມໂມງ ພຣະເຢຊູຮ້ອງດັງໆວ່າແນວໃດ?
   **ຕອບ:** ມາຣະໂກ 15:34 ..............................................................................................

   4.3 ນາຍຮ້ອຍທີ່ເຫັນພຣະເຢຊູຕາຍນັ້ນເວົ້າວ່າແນວໃດ?
   **ຕອບ:** ມາຣະໂກ 15:39 ..............................................................................................

   4.4 ຫຼັງຈາກພຣະເຢຊູຕາຍ ເຂົາໄດ້ເຮັດຫຍັງກັບພຣະສົບຂອງພຣະອົງ?
   **ຕອບ:** ມາຣະໂກ 15:46 ..............................................................................................

   4.5 ພຣະເຢຊູໄດ້ຟື້ນຂຶ້ນມາຈາກຕາຍມື້ໃດ?
   **ຕອບ:** ມາຣະໂກ 16:2 ..............................................................................................

   4.6 ເມື່ອພວກຜູ້ຍິງເຂົ້າໄປໃນອຸໂມງ ເຂົາເຫັນຫຍັງແດ່?
   **ຕອບ:** ມາຣະໂກ 16:5 ..............................................................................................

   4.7 ທູດສະຫວັນບອກວ່າພຣະເຢຊູເປັນແນວໃດ?
   **ຕອບ:** ມາຣະໂກ 16:6 ..............................................................................................

5. **ອະທິບາຍ -** ການຕາຍ ແລະການເປັນຄືນມາຂອງພຣະເຢຊູຄຣິດ

   5.1 ພຣະເຢຊູຍອມຖືກຄຶງໃສ່ໄມ້ກາງແຂນເພື່ອຮັບເອົາໂທດແທນມະນຸດທີ່ເປັນຄົນບາບ

   5.2 ພຣະເຢຊູຍອມໃຫ້ພຣະບິດາປະຖິ້ມ ນີ້ເປັນສ່ວນໜຶ່ງໃນການຮັບໂທດແທນເຮົາ

   5.3 ພຣະເຢຊູຍອມຮັບໂທດແທນເຮົາຈົນເຖິງໄດ້ຍອມຕາຍເພື່ອເຮົາ

   5.4 ແຕ່ວ່າໃນວັນທີສາມພຣະເຢຊູໄດ້ຊະນະຄວາມບາບ ຄວາມຕາຍ ແລະ ພະຍາມານ ໂດຍການເປັນຄືນມາຈາກຕາຍ ແລະ ພຣະອົງຍັງຊົງມີຊີວິດຢູ່ຈົນເຖິງທຸກມື້ນີ້

6. **ການນຳມາໃຊ້** - ໃຫ້ພີ່ນ້ອງສັນລະເສີນພຣະເຢຊູສຳລັບການເປັນຄືນມາຂອງພຣະອົງ ແລ້ວຕັ້ງໃຈວ່າ ຈະເປັນພະຍານກັບໝູ່ຢ່າງໜ້ອຍໜຶ່ງຄົນພາຍໃນອາທິດນີ້ ກ່ຽວກັບເລື່ອງພຣະຜູ້ຊ່ວຍໃຫ້ລອດ ພົ້ນທີ່ຊົງມີຊີວິດຢູ່ທຸກມື້ນີ້

7. **ຂໍ້ທ່ອງຈຳ -** ມາຣະໂກ 16:6

# 36. ຄຣິສຕະຈັກດັ້ງເດີມ ແລະ ພຣະວິນຍານບໍຣິສຸດ

1. **ເປົ້າໝາຍ -** ເພື່ອຊ່ວຍໃຫ້ຄຣິສຕຽນເຂົ້າໃຈວ່າ ຄຣິສຕະຈັກສະໄໝເດີມຕັ້ງຕົ້ນແນວໃດແລະພຣະວິນຍານບໍຣິສຸດມາແນວໃດ

2. **ຄໍານໍາ -** ຕັ້ງແຕ່ພຣະເຈົ້າສ້າງໂລກຈົນເຖິງພຣະເຢຊູສະເດັດຂຶ້ນເທິງສະຫວັນເຄີຍມີຄົນທີ່ເຊື່ອພຣະເຈົ້າຫຼາຍຄົນ ແຕ່ຄົນທີ່ເຊື່ອພຣະເຈົ້າຕັ້ງແຕ່ສະໄໝກ່ອນນັ້ນ ພຣະຄໍາພີກໍຍັງບໍ່ໄດ້ເອີ້ນວ່າ "ຄຣິສຕະຈັກ" ເພາະວ່າ "ຄຣິສຕະຈັກ" ໄດ້ຕັ້ງຕົ້ນມາຫຼັງຈາກພຣະເຢຊູສະເດັດຂຶ້ນໄປສະຫວັນ ຄືໃນເມື່ອອົງພຣະວິນຍານບໍຣິສຸດໄດ້ລົງມາສະຖິດໃນຜູ້ທີ່ເຊື່ອທຸກໆຄົນ

3. **ອ່ານພຣະຄໍາພີ -** ກິດຈະການ 2:1–42

4. **ຖາມ - ຕອບ**

4.1 ມື້ເທດສະການເພັນເຕຄໍສະເຕ ມີຫຍັງເກີດຂຶ້ນກັບພີ່ນ້ອງຄຣິສຕຽນຢູ່ຫັ້ນ?

**ຕອບ:** ກິດຈະການ 2:2-3 ............................................................

4.2 ພວກລູກສິດໄດ້ຮັບຫຍັງແບບເຕັມໆ?

**ຕອບ:** ກິດຈະການ 2:4 ............................................................

4.3 ແລ້ວມີການອັດສະຈັນຫຍັງເກີດຂຶ້ນ?

**ຕອບ:** ກິດຈະການ 2:4-8 ............................................................

4.4 ໃຜຢືນຂຶ້ນເທດສະໜາ?

**ຕອບ:** ກິດຈະການ 2:14............................................................

4.5 ເປໂຕເທດສະໜາກ່ຽວກັບໃຜ?

**ຕອບ:** ກິດຈະການ 2:22............................................................

4.6 ເປໂຕເໜັ້ນເລື່ອງຫຍັງແດ່?

**ຕອບ:** ກິດຈະການ 2:24............................................................

4.7 ເປໂຕສັ່ງໃຫ້ຜູ້ຟັງເຮັດຫຍັງ?

**ຕອບ:** ກິດຈະການ 2:38............................................................

4.8 ຜູ້ທີ່ກັບໃຈໃໝ່ຈະໄດ້ຮັບຂອງປະທານຈາກພຣະເຈົ້າຄືຫຍັງ?

**ຕອບ:** ກິດຈະການ 2:38............................................................

4.9 ໃນມື້ນັ້ນມີຄົນເຊື່ອໃໝ່ຈັກຄົນ?

**ຕອບ:** ກິດຈະການ 2:41............................................................

5. **ອະທິບາຍ -** ຄຣິສຕະຈັກດັ້ງເດີມ ແລະ ພຣະວິນຍານບໍຣິສຸດ

5.1 ເປັນຄຣິສຕະຈັກທີ່ປະກອບດ້ວຍພຣະວິນຍານບໍຣິສຸດ ທຸກຄົນທີ່ເຊື່ອກໍມີປະສົບການກັບພຣະວິນຍານບໍຣິສຸດດ້ວຍຕົນເອງ

5.2 ເປັນຄຣິສຕະຈັກທີ່ປະກາດຂ່າວປະເສີດແລະຊວນຄົນທັງຫຼາຍໃຫ້ຖິ້ມໃຈເກົ່າເອົາໃຈໃໝ່

5.3 ເປັນຄຣິສຕະຈັກທີ່ເກີດຜົນ ເລີ່ມທຳອິດມີລູກສິດປະມານ 120 ຄົນທີ່ຕຽມຮັບພຣະວິນຍານບໍຣິສຸດ ໃນມື້ດຽວກັນນັ້ນກໍໄດ້ພາຄົນມາເຊື່ອອີກປະມານ 3,000 ຄົນ

6. **ການນຳມາໃຊ້** - ຄຣິສຕະຈັກຂອງພີ່ນ້ອງເປັນແນວໃດ? ປະກອບດ້ວຍພຣະວິນຍານບໍຣິສຸດບໍ? ກ້າອອກໄປປະກາດບໍ? ເປັນຄຣິສຕຽນທີ່ເກີດຜົນບໍ? ຖ້າຫາກວ່າຄຣິສຕະຈັກຂອງພີ່ນ້ອງບໍ່ຄືກັນກັບຄຣິສຕະຈັກສະໄໝເດີມ ຄວນຈະປັບປຸງແກ້ໄຂແນວໃດແດ່?

7. **ຂໍ້ທ່ອງຈຳ** - ກິດຈະການ 1:8

# 37. ການສະເດັດມາເທື່ອທີສອງຂອງພຣະເຢຊູ

1. **ເປົ້າໝາຍ -** ເພື່ອຊ່ວຍໃຫ້ຄຣິສຕຽນເຂົ້າໃຈວ່າ ການສະເດັດມາເທື່ອທີສອງຂອງພຣະເຢຊູເປັນແນວໃດ

2. **ຄຳນຳ -** ເມື່ອພຣະເຢຊູສະເດັດເຂົ້າມາໃນໂລກນີ້ເທື່ອທຳອິດ ພຣະອົງມາໃນສະພາບຜູ້ຮັບໃຊ້ແລະຜູ້ຊ່ວຍໃຫ້ລອດ ພຣະອົງມາໃນສະພາບຖ່ອມໃຈລົງ ເປັນຄົນທຸກຍາກ ເປັນຜູ້ຍອມເສຍສະຫຼະເພື່ອຊ່ວຍມະນຸດ ແຕ່ເມື່ອພຣະເຢຊູຈະສະເດັດມາເທື່ອທີສອງ ພຣະອົງຈະມາແບບພຣະມະຫາກະສັດທີ່ຍິ່ງໃຫຍ່ ຜູ້ມີຣິດເດດ ແລະ ຈະມາດ້ວຍສະຫງ່າຣາສີ

3. **ອ່ານພຣະຄຳພີ -** 1 ເທສະໂລນິກ 4:13 - 5:11

4. **ຖາມ - ຕອບ**

   4.1 ການສະເດັດກັບມາຂອງພຣະເຢຊູຈະເປັນແນວໃດ

   **ຕອບ:** 1 ເທສະໂລນິກ 4:16 ..................................................................................

   4.2 ຜູ້ໃດຈະຄືນມາກ່ອນ?

   **ຕອບ:** 1 ເທສະໂລນິກ 4:16 ..................................................................................

   4.3 ຄຣິສຕຽນທັງຫຼາຍທີ່ຍັງເປັນຢູ່ຈະໄດ້ຮັບການປະຕິບັດແນວໃດ?

   **ຕອບ:** 1 ເທສະໂລນິກ 4:17 ..................................................................................

   4.4 ຜູ້ທີ່ເຊື່ອທຸກຄົນຈະຢູ່ໃສຕະຫຼອດໄປເປັນນິດ?

   **ຕອບ:** 1 ເທສະໂລນິກ 4:17 ..................................................................................

   4.5 ເປັນຫຍັງພຣະຄຳພີຊີ້ງອະທິບາຍເຖິງການສະເດັດກັບມາຂອງພຣະເຢຊູ?

   **ຕອບ:** 1 ເທສະໂລນິກ 4:13-18 ..............................................................................

   4.6 ພຣະເຢຊູບອກມື້ແລະປີທີ່ພຣະເຢຊູຈະກັບມາບໍ?

   **ຕອບ:** 1 ເທສະໂລນິກ 5:1-2 ..................................................................................

   4.7 ເມື່ອພຣະເຢຊູສະເດັດກັບມາ ຄົນທົ່ວໄປຈະຕຽມພ້ອມເພື່ອຕ້ອນຮັບພຣະອົງບໍ?

   **ຕອບ:** 1 ເທສະໂລນິກ 5:1-3 ..................................................................................

   4.8 ຄຣິສຕຽນຄວນເຮັດຫຍັງຈຶ່ງຈະຕຽມຕົວໃຫ້ພ້ອມເມື່ອພຣະອົງຈະກັບມາ?

   **ຕອບ:** 1 ເທສະໂລນິກ 5:6 ....................................................................................

5. **ອະທິບາຍ -** ການສະເດັດກັບມາເທື່ອທີສອງຂອງພຣະເຢຊູ

   5.1 ພຣະເຢຊູສັນຍາວ່າຈະສະເດັດກັບມາ ຄຳສັນຍາຂອງພຣະອົງເປັນສິ່ງທີ່ແນ່ນອນ ພຣະອົງເຄີຍບອກວ່າ "ເມື່ອເຮົາໄປຈັດຕຽມບ່ອນໄວ້ສຳລັບພວກທ່ານແລ້ວ ເຮົາຈະກັບມາອີກເພື່ອຮັບເອົາທ່ານໄປຢູ່ກັບເຮົາ" (ໂຢຮັນ 14:3)

**5.2** ພຣະຄຳພີບໍ່ໄດ້ບອກວັນເວລາທີ່ພຣະອົງຈະສະເດັດກັບມາ ມີພຽງພຣະບິດາເຈົ້າເທົ່ານັ້ນຊົງຮູ້ເວລາທີ່ພຣະເຢຊູຈະມາ (ມັດທາຍ 24:36)

**5.3** ເມື່ອພຣະເຢຊູກັບມາ ພຣະອົງຈະມາດ້ວຍສະຫງ່າຣາສີ ຈະມີທູດສະຫວັນຄອຍເປັນຂະບວນຈະມີສຽງແກຂອງພຣະເຈົ້າ ພຣະອົງຈະມາແບບພຣະມະຫາກະສັດ

6. **ການນຳມາໃຊ້** - ເມື່ອພີ່ນ້ອງຄຣິສຕຽນຄົນໜຶ່ງຄົນໃດເສຍຊີວິດ ເຮົາຄວນຈະມີທ່າທີແນວໃດແດ່? ເຮົາຈະພົບຄົນນັ້ນອີກເມື່ອໃດ? ແລະ ສຳລັບພວກເຮົາທີ່ຍັງເປັນຢູ່ ຄວນຈະຕຽມຕົວແນວໃດເພື່ອຈະພ້ອມໃນການຕ້ອນຮັບພຣະເຢຊູໃນເມື່ອພຣະອົງສະເດັດກັບມາຮັບເອົາພວກເຮົາໄປຢູ່ກັບພຣະອົງ?

7. **ຂໍ້ທ່ອງຈຳ** - 1 ເທສະໂລນີກ 5:9,10

# 38. ສະຫວັນ

1. **ເປົ້າໝາຍ -** ເພື່ອຊ່ວຍໃຫ້ເຮົາເຂົ້າໃຈວ່າ ສະຫວັນເປັນແນວໃດ?

2. **ຄຳນຳ -** ບາງຄົນມັກເວົ້າວ່າບໍ່ມີສະຫວັນຫຼືນະຣົກ ລາງຄົນກໍເວົ້າວ່າ "ສະຫວັນຢູ່ໃນອົກ ນະຣົກຢູ່ໃນໃຈ" (ຄວາມໝາຍຂອງເຂົາກໍຄື ສະຫວັນຢູ່ໃນໃຈຂອງຄົນດີ ສ່ວນນະຣົກກໍຢູ່ໃນໃຈຂອງຄົນຊົ່ວ) ແຕ່ພຣະຄຳພີບໍ່ໄດ້ສອນແນວນັ້ນ ພຣະຄຳພີສອນວ່າ ສະຫວັນມີຢູ່ຈິງ ເປັນສະຖານທີ່ປະທັບຂອງພຣະເຈົ້າ ແລະເປັນປາຍທາງຂອງຄຣິສຕຽນທຸກຄົນ

3. **ອ່ານພຣະຄຳພີ -** ພຣະນິມິດ 21:1-4; 22:1-5

4. **ຖາມ - ຕອບ**

4.1 ໃຜແດ່ຈະຢູ່ນຳກັນເທິງສະຫວັນ?

**ຕອບ:** ພຣະນິມິດ 21:3 ......................................................................................

4.2 ເທິງສະຫວັນບໍ່ມີຫຍັງແດ່?

**ຕອບ:** ພຣະນິມິດ 21:4

(1)............................................... (2) .......................................................

(3)............................................... (4) .......................................................

4.3 ເທິງສະຫວັນຈະມີຫຍັງຊ່ວຍປິ່ນປົວບັນດາປະຊາຊາດໃຫ້ຫາຍດີ?

**ຕອບ:** ພຣະນິມິດ 22:2 ......................................................................................

4.4 ເທິງສະຫວັນຈະບໍ່ມີອັນໃດອີກ?

**ຕອບ:** ພຣະນິມິດ 22:3 ......................................................................................

4.5 ຄຣິສຕຽນຈະເຮັດຫຍັງແດ່ເທິງສະຫວັນ

**ຕອບ:** ພຣະນິມິດ 22:3 ......................................................................................

4.6 ຄຣິສຕຽນຈະໄດ້ເຫັນໃຜເທິງສະຫວັນ?

**ຕອບ:** ພຣະນິມິດ 22:4 ......................................................................................

4.7 ກາງຄືນຈະບໍ່ມີອີກຕໍ່ໄປເທິງສະຫວັນ ສະຫວັນມີແສງສະຫວ່າງມາຈາກໃສ?

**ຕອບ:** ພຣະນິມິດ 22:5 ......................................................................................

4.8 ຄຣິສຕຽນຈະປົກຄອງເທິງສະຫວັນອີກດົນປານໃດ?

**ຕອບ:** ພຣະນິມິດ 22:5 ......................................................................................

5. **ອະທິບາຍ -** ສະຫວັນ

5.1 ສະຫວັນເປັນທີ່ປະທັບຂອງພຣະເຈົ້າແລະແນ່ນອນຕ້ອງເປັນສະຖານທີ່ສວຍສົດງົດງາມຫຼາຍຕ້ອງມີສະຫງ່າຣາສີກວ່າໂລກນີ້ຫຼາຍຮ້ອຍເທົ່າ

5.2 ສະຫວັນມີຫຼາຍຢ່າງທີ່ໂລກນີ້ບໍ່ມີ ຄື ພຣະບັນລັງຂອງພຣະເຈົ້າ ພຣະບຸດຂອງພຣະອົງ ແມ່ນໍ້າແຫ່ງຊີວິດ ລວມທັງມີກົກໄມ້ແຫ່ງຊີວິດທີ່ຊ່ວຍປິ່ນປົວຄົນເຈັບປ່ວຍໃຫ້ດີໄດ້ ມີຄວາມສະຫວ່າງຂອງພຣະເຈົ້າ ແລະເຕັມປ່ຽມໄປດ້ວຍຄວາມຜາສຸກ

5.3 ເຫິງສະຫວັນບໍ່ມີຫຼາຍຢ່າງຊຶ່ງໂລກນີ້ມີຢູ່ໃນທຸກມື້ນີ້ ໄດ້ແກ່: ຄວາມທຸກ ຄວາມໂສກເສົ້າ ຄວາມບາບ ພະຍາມານ ຜີ ການເຈັບປວດ ການຂັດສົນ ການອຶດຢາກ ໆລໆ

5.4 ເທິງສະຫວັນເຮົາຕ້ອງເຮັດຫຍັງແດ່? ຫຼາຍຄົນເປັນຫ່ວງວ່າສະຫວັນຈະບໍ່ມ່ວນຊື່ນ ແຕ່ພຣະຄໍາພີສອນວ່າເຮົາຈະຮັບໃຊ້ແລະນະມັດສະການພຣະເຈົ້າ ຄົງຈະມ່ວນຊື່ນເພາະສະຫວັນບໍ່ມີບັນຫາບໍ່ມີການຜິດຖຽງກັນ ບໍ່ມີສິ່ງເຮັດໃຫ້ຂາດຄວາມສຸກ

6. **ການນໍາມາໃຊ້** - ຄົນທີ່ຍັງບໍ່ເຊື່ອໄປສະຫວັນໄດ້ບໍ? ຄົນທີ່ເຊື່ອຕາຍແລ້ວເຂົາກໍໄປສະຫວັນ ດັ່ງນັ້ນເມື່ອພີ່ນ້ອງຄົນໃດທີ່ເຊື່ອຕາຍເຮົາຄວນຈະໂສກເສົ້າເສຍໃຈຄືກັນກັບຕອນຄົນທີ່ບໍ່ເຊື່ອຕາຍບໍ?

7. **ຂໍ້ທ່ອງຈໍາ** - ພຣະນິມິດ 22:4,5

# 39. ນະຣົກ

1. **ເປົ້າໝາຍ -** ເພື່ອຊ່ວຍໃຫ້ເຮົາເຂົ້າໃຈວ່ານະຣົກເປັນແນວໃດ

2. **ຄຳນຳ -** ຄົນທົ່ວໄປບໍ່ຢ້ານຕົກນະຣົກເພາະບໍ່ເຊື່ອວ່ານະຣົກມີຈິງ ແຕ່ພຣະຄຳພີສອນຢ່າງຊັດເຈນວ່າພຣະເຈົ້າໄດ້ຕຽມນະຣົກໄວ້ສຳລັບພະຍາມານແລະພວກລູກນ້ອງຂອງມັນ ນະຣົກເປັນບ່ອນທີ່ທຸກທໍລະມານທີ່ສຸດ ທຸກຄົນທີ່ຕິດຕາມມານຈະຢູ່ກັບມານຢູ່ຫັ້ນແລະຈະບໍ່ມີທາງອອກໄປໄດ້

3. **ອ່ານພຣະຄຳພີ -** ພຣະນິມິດ 20:10-15; 21:8

4. **ຖາມ - ຕອບ**
   - 4.1 ໃຜຈະຕົກນະຣົກກ່ອນ?
     **ຕອບ:** ພຣະນິມິດ 20:10 ........................................................................................
   - 4.2 ນະຣົກມີລັກສະນະແນວໃດ?
     **ຕອບ:** ພຣະນິມິດ 20:10 ........................................................................................
   - 4.3 ຜູ້ທີ່ຕົກນະຣົກຈະຕ້ອງຖືກຫຍັງແດ່?
     **ຕອບ:** ພຣະນິມິດ 20:10 ........................................................................................
   - 4.4 ຜູ້ທີ່ຕົກນະຣົກຈະຢູ່ຫັ້ນດົນປານໃດ?
     **ຕອບ:** ພຣະນິມິດ 20:10 ........................................................................................
   - 4.5 ການຕົກໃນບຶງໄຟນະຣົກເອີ້ນວ່າຫຍັງ?
     **ຕອບ:** ພຣະນິມິດ 20:14 ........................................................................................
   - 4.6 ນອກຈາກພະຍາມານແລ້ວ ໃຜແດ່ຈະຕົກນະຣົກອີກ?
     **ຕອບ:** ພຣະນິມິດ 20:15 ........................................................................................
   - 4.7 ມະນຸດທີ່ຕົກນະຣົກເປັນຄົນແນວໃດ?
     **ຕອບ:** ພຣະນິມິດ 21:8 ..........................................................................................

5. **ອະທິບາຍ -** ນະຣົກ
   - **5.1** ນະຣົກເປັນບ່ອນທີ່ຕ້ອງທົນທຸກທໍລະມານ ບໍ່ເປັນຕາໄປແນ່ນອນ ມະນຸດທີ່ຕົກຢູ່ຫັ້ນຕ້ອງຢູ່ກັບມານແລະພວກຜີຕະຫຼອດໄປເປັນນິດ ນະຣົກນັ້ນມືດ ຮ້ອນ ບໍ່ມີຫຍັງຈະກິນ ບໍ່ມີຫຍັງຈະເຮັດ ມີແຕ່ໄຟແລະມາດ ບາງຄົນເຄີຍເວົ້າວ່າ "ຢາກຕົກນະຣົກເດ! ຢູ່ກັບມານຄືຊິມ່ວນ!" ຄົນທີ່ຄິດຈັ່ງຊີ້ເປັນຄົນທີ່ເຂົ້າໃຈຜິດຫຼາຍ
   - **5.2** ຜູ້ທີ່ໄວ້ວາງໃຈໃນພຣະເຈົ້າບໍ່ຕ້ອງຢ້ານຕົກນະຣົກ ນະຣົກເປັນບ່ອນທີ່ຊົງຈັດແຈງໄວ້ສຳລັບລົງໂທດຜີມານຊາຕານແລະທຸກຄົນທີ່ບໍ່ຍອມເຊື່ອຟັງພຣະເຢຊູຄຣິດ

5.3 ນະຣົກບໍ່ມີທາງອອກ ບາງສາສະໜາສອນວ່າ ຕ້ອງຢູ່ນະຣົກຊົ່ວຄາວເທົ່ານັ້ນ ເມື່ອໄດ້ຮັບໂທດພຽງພໍແລ້ວກໍຈະອອກມາໄດ້ ແຕ່ພຣະຄຳພີບໍ່ໄດ້ສອນຈັ່ງຊັ້ນ ແຕ່ສອນວ່າຄົນເຮົາມີຊີວິດນີ້ພຽງຊີວິດດຽວ ແລະ ຫຼັງຈາກນັ້ນພຣະເຈົ້າຈະຕັດສິນລົງໂທດ ຖ້າບໍ່ເຊື່ອພຣະເຢຊູຈະຕົກນະຣົກຕະຫຼອດໄປເປັນນິດໂດຍບໍ່ມີຊາດໜ້າ ບໍ່ມີໂອກາດຈະຖອນຕົວອອກໄດ້

6. **ການນຳມາໃຊ້** - ພີ່ນ້ອງເຊື່ອວ່າມີນະຣົກບໍ? ຖ້າເຊື່ອວ່າມີນະຣົກແທ້ໆ ທ່ານຄວນຈະເຮັດຫຍັງແດ່ເພື່ອພີ່ນ້ອງແລະໝູ່ໃກ້ຄຽງຈະບໍ່ຕົກນະຣົກ?

7. **ຂໍ້ທ່ອງຈຳ -** ພຣະນິມິດ 20:12

# 40. ຄອບຄົວຄຣິສຕຽນ

1. **ເປົ້າໝາຍ -** ເພື່ອຊ່ວຍໃຫ້ຄຣິສຕຽນເຂົ້າໃຈວ່າ ຄອບຄົວ ຜົວ ເມຍ ຄຣິສຕຽນຄວນມີຄວາມສຳພັນກັນແນວໃດ

2. **ຄຳນຳ -** ບາງສາສະໜາສອນວ່າ ເມຍ, ລູກ ແລະຊັບສົມບັດເປັນໂສ້ທີ່ລ່າມຜູ້ຊາຍໄວ້ບໍ່ໃຫ້ເຂົ້າພົບນິພານ ແຕ່ພຣະຄຳພີຂອງພຣະເຈົ້າບໍ່ໄດ້ສອນຈັ່ງຊັ້ນ ພຣະຄຳພີສອນວ່າ ບາບເປັນໂສ້ທີ່ລ່າມມະນຸດໄວ້ໃຫ້ຕົກນະຣົກ ສ່ວນເມຍ, ລູກ ແລະຊັບສົມບັດເປັນພຣະພອນມາຈາກພຣະເຈົ້າ

3. **ອ່ານພຣະຄຳພີ -** ເອເຟໂຊ 5:21-31

4. **ຖາມ - ຕອບ**

   4.1 ຜົວເມຍຕ້ອງສະແດງທ່າທີຕໍ່ກັນແນວໃດ?

   **ຕອບ:** ເອເຟໂຊ 5:21 ..........

   4.2 ເປັນຫຍັງເມຍຕ້ອງຍອມຟັງຜົວ?

   **ຕອບ:** ເອເຟໂຊ 5:22,23 ..........

   4.3 ພຣະຄຳພີສອນຜົວໃຫ້ມີທ່າທີແນວໃດຕໍ່ເມຍ?

   **ຕອບ:** ເອເຟໂຊ 5:25 ..........

   4.4 ຜົວຄວນຮັກເມຍຕາມແບບຢ່າງຂອງໃຜ?

   **ຕອບ:** ເອເຟໂຊ 5:25 ..........

   4.5 ຜົວຄວນຮັກເມຍຄືກັນກັບທີ່ຕົນຮັກໃຜ?

   **ຕອບ:** ເອເຟໂຊ 5:28 ..........

   4.6 ເມື່ອຜູ້ຊາຍແຕ່ງງານຈະຕ້ອງເຮັດຫຍັງ?

   **ຕອບ:** ເອເຟໂຊ 5:31 ..........

   4.7 ເມື່ອແຕ່ງງານແລ້ວຜົວເມຍຈະມີຄວາມສຳພັນໃກ້ຊິດເທົ່າກັບວ່າແນວໃດ?

   **ຕອບ:** ເອເຟໂຊ 5:31 ..........

5. **ອະທິບາຍ -** ຄອບຄົວຄຣິສຕຽນ

   5.1 ໃນຄອບຄົວຄຣິສຕຽນຜົວເມຍຕ້ອງຮັກກັນໃຫ້ຫຼາຍໆ ຖ້າຜົວເມຍຮັກກັນຫຼາຍລູກກໍຈະມີຄວາມສຸກແລະຜົວເມຍເອງກໍຈະໝົດຫ່ວງ

   5.2 ໃນຄອບຄົວຄຣິສຕຽນຜົວຈະຕ້ອງເອົາໃຈໃສ່ເບິ່ງແຍງເມຍໃຫ້ມີຄວາມສຸກ ບໍ່ໃຫ້ເມຍແບກພາລະໜັກໃນການລ້ຽງດູຄອບຄົວຜູ້ດຽວ ການທຳມາຫາກິນຄວນເປັນໜ້າທີ່ຂອງຜົວ

   5.3 ໃນຄອບຄົວຄຣິສຕຽນຜົວເປັນຫົວໜ້າ ສ່ວນເມຍຄືມົງກຸດ (ການແປຕາມຕົວຈາກພາສາເຮັບເຣີ ໃນ ສຸພາສິດ 12:4 ກ່າວວ່າ "ເມຍທີ່ມີນິໄສໃຈຄໍດີເດັ່ນເປັນມົງກຸດຂອງຜົວ")

6. **ການນຳມາໃຊ້** - ທຸກມື້ນີ້ຄອບຄົວທົ່ວໄປມີບັນຫາຮ້ອຍແປດ ແມ່ນຫຍັງເປັນສາເຫດ? ພວກເຮົາທີ່ເຊື່ອໃນພຣະເຈົ້າຈະແກ້ບັນຫາຄອບຄົວໄດ້ແນວໃດ?

7. **ຂໍ້ທ່ອງຈຳ -** ເອເຟໂຊ 5:31

# 41. ພໍ່ ແມ່ ລູກ

1. **ເປົ້າໝາຍ** - ເພື່ອຊ່ວຍໃຫ້ຄຣິສຕຽນເຂົ້າໃຈວ່າໃນຄອບຄົວຄຣິສຕຽນ ພໍ່ ແມ່ ລູກ ຄວນມີຄວາມສໍາພັນແນວໃດ

2. **ຄໍານໍາ** - ພໍ່ແມ່ຫຼາຍຄົນເຫັນແກ່ຜົນປະໂຫຍດຂອງຕົນເອງໃນການມີລູກ ຄື ຕ້ອງມີລູກເພື່ອຊ່ວຍເຮັດໄຮ່ເຮັດນາຫຼືຊ່ວຍທໍາມາຫາກິນ ເມື່ອພໍ່ແມ່ເຖົ້າແກ່ແລ້ວກໍຈະໄດ້ເພິ່ງພາອາໃສລູກໆ ເພາະສະນັ້ນພໍ່ແມ່ຈຶ່ງໄດ້ບັງຄັບລູກແຕ່ຍັງນ້ອຍໆ ໃຫ້ເຮັດທຸກຢ່າງເພື່ອເຫັນແກ່ພໍ່ແມ່ ແຕ່ໃນຄອບຄົວຄຣິສຕຽນພໍ່ແມ່ຮັກລູກໂດຍບໍ່ເຫັນແກ່ຜົນປະໂຫຍດສ່ວນຕົວ ແຕ່ໄດ້ເສຍສະຫຼະເພື່ອລູກຈະຮັກພຣະເຈົ້າແລະຕິດຕາມພຣະເຢຊູໄປດ້ວຍສຸດຈິດສຸດໃຈ ຖ້າຄອບຄົວເປັນອັນໜຶ່ງອັນດຽວກັນໃນພຣະຄຣິດຈະມີການຊ່ວຍກັນຢ່າງສູງ

3. **ອ່ານພຣະຄໍາພີ** - ເອເຟໂຊ 6:1-4

4. **ຖາມ - ຕອບ**

   4.1 ລູກຄວນສະແດງທ່າທີແນວໃດຕໍ່ພໍ່ແມ່?

   **ຕອບ:** ເອເຟໂຊ 6:1 ..........................................................................

   4.2 ພຣະບັນຍັດຂໍ້ໃດມີພຣະສັນຍາໄວ້ນໍາ?

   **ຕອບ:** ເອເຟໂຊ 6:2 ..........................................................................

   4.3 ລູກທີ່ໃຫ້ກຽດພໍ່ແມ່ຈະໄດ້ຮັບຫຍັງແດ່?

   **ຕອບ:** ເອເຟໂຊ 6:3 ..........................................................................

   4.4 ພໍ່ແມ່ບໍ່ຄວນເຮັດຫຍັງຕໍ່ລູກຂອງຕົນ?

   **ຕອບ:** ເອເຟໂຊ 6:4 ..........................................................................

   4.5 ພໍ່ແມ່ຄວນເຮັດຫຍັງຕໍ່ລູກ?

   **ຕອບ:** ເອເຟໂຊ 6:4 ..........................................................................

   ..........................................................................

5. **ອະທິບາຍ** - ພໍ່ ແມ່ ແລະ ລູກ

   5.1 ລູກຄວນນອບນ້ອມຟັງຄວາມພໍ່ແມ່ຂອງຕົນເອງໃນອົງພຣະຜູ້ເປັນເຈົ້າ ຄໍາວ່າ "ໃນອົງພຣະຜູ້ເປັນເຈົ້າ" ໝາຍຄວາມວ່າ "ຕາມນໍ້າໃຈຂອງພຣະເຈົ້າ" ຖ້າຫາກວ່າພໍ່ແມ່ສັ່ງໃຫ້ເຮັດຫຍັງທີ່ບໍ່ເປັນຕາມນໍ້າໃຈຂອງພຣະເຈົ້າ ຄື: ບວດນາກ ໄຫວ້ບັນພະບູລຸດ ຫຼື ເຮັດຫຍັງທີ່ບໍ່ຊື່ສັດຕໍ່ພຣະເຈົ້າ ລູກກໍບໍ່ຄວນເຮັດ

5.2 ພໍ່ແມ່ມີໜ້າທີ່ສອນລູກ ຖ້າຫາກວ່າລູກດື້ ຄວນຕີສອນເພື່ອລູກຈະຮູ້ຈັກຟັງຄວາມພໍ່ແມ່ ແຕ່ເມື່ອຕີລູກ ພໍ່ແມ່ຄວນເຮັດຕາມຂັ້ນຕອນດັ່ງນີ້:

- ລໍຖ້າໃຫ້ອາລົມຮ້າຍຂອງຕົນເອງເຢັນລົງກ່ອນ ບໍ່ຄວນຕີລູກເວລາຕົນເອງໃຈຮ້າຍ
- ຕີໃຫ້ເຈັບ ບໍ່ແມ່ນຕີຊູ່ຊີ່ໆ
- ຫຼັງຈາກຕີແລ້ວ ໃຫ້ບອກສາເຫດທີ່ພໍ່ແມ່ຕ້ອງຕີ
- ພາລູກອະທິຖານສາລະພາບບາບຕໍ່ພຣະເຈົ້າ ແລະ ຂໍພຣະອົງຊົງອາໄພໂທດ
- ບອກລູກໃຫ້ເຂົ້າໃຈວ່າພໍ່ແມ່ຮັກລູກ ດັ່ງນັ້ນພໍ່ແມ່ຈຶ່ງບໍ່ຍອມປ່ອຍໃຫ້ເຮັດຜິດໂດຍບໍ່ສັ່ງສອນ
- ຖ້າຫາກວ່າພໍ່ແມ່ມີສ່ວນຜິດໃນເລື່ອງທີ່ໄດ້ເກີດຂຶ້ນນັ້ນໃຫ້ຂໍໂທດລູກດ້ວຍໃຈຈິງ

5.3 ພໍ່ແມ່ມີໜ້າທີ່ເຕືອນສະຕິຕາມຫຼັກຂອງອົງພຣະຜູ້ເປັນເຈົ້າ ພໍ່ແມ່ຕ້ອງຮັບຜິດຊອບໃນການບອກໃຫ້ລູກຮູ້ທາງແຫ່ງຄວາມລອດພົ້ນ ແລະ ຕ້ອງແນະນຳການດຳເນີນຊີວິດຕາມນ້ຳໃຈຂອງພຣະເຈົ້າທັງໝົດ

6. **ການນຳມາໃຊ້ -** ຄອບຄົວຄຣິສຕຽນຄວນຮວມກັນທຸກມື້ເພື່ອ

- ອ່ານພຣະຄຳພີນຳກັນ
- ອະທິຖານນຳກັນ
- ຮ້ອງເພງນຳກັນ
- ເວົ້າຄຸຍລົມເລື່ອງສຳຄັນນຳກັນ
- ສາລະພາບບາບ ແລະ ແກ້ໄຂບັນຫາທີ່ມີນຳກັນ

7. **ຂໍ້ທ່ອງຈຳ -** ເອເຟໂຊ 6:4

# 42. ເຫດການສຳຄັນໃນຄອບຄົວຄຣິສຕຽນ - ມື້ແຕ່ງງານ

1. **ເປົ້າໝາຍ** - ເພື່ອຊ່ວຍໃຫ້ຄຣິສຕຽນເຂົ້າໃຈວ່າ ການແຕ່ງງານແບບຄຣິສຕຽນເປັນແນວໃດ

2. **ຄຳນຳ** - ຊາວໂລກຖືວ່າມື້ແຕ່ງງານເປັນມື້ເຮັດພິທີໃຫຍ່ເພື່ອມີໜ້າມີຕາໃນສັງຄົມ ຕ້ອງມີສິນສອດຄ່າດອງແພງໆ ມີການກິນລ້ຽງໃຫຍ່ໆ ເພື່ອຄອບຄົວເຈົ້າສາວຈະໄດ້ຮັບກຽດ ແຕ່ຄຣິສຕຽນບໍ່ມີເປົ້າໝາຍແບບນັ້ນ ຄຣິສຕຽນແຕ່ງງານເພື່ອຖວາຍກຽດແກ່ພຣະເຈົ້າ

3. **ອ່ານພຣະຄຳພີ** - 2 ໂກຣິນໂທ 6:14-18; ມາຣະໂກ 10:2-12

4. **ຖາມ - ຕອບ**

4.1 ພຣະຄຳພີສອນວ່າ ຄົນທີ່ເຊື່ອບໍ່ຄວນເຂົ້າເປັນຄູ່ກັບຄົນທີ່ບໍ່ເຊື່ອ ດັ່ງນັ້ນ ຄຣິສຕຽນຄວນແຕ່ງງານກັບຄົນທີ່ບໍ່ເປັນຄຣິສຕຽນບໍ?

**ຕອບ:** 2 ໂກຣິນໂທ 6:14-15..........................................................................

4.2 ຄຣິສຕຽນເປັນວິຫານທີ່ບໍຣິສຸດຂອງພຣະເຈົ້າ ເມື່ອຄົນທີ່ເຊື່ອສອງຄົນແຕ່ງງານກັນຄວນເຮັດພິທີສົມຣົດຕາມແບບສາສະໜາດັ້ງເດີມບໍ?

**ຕອບ:** 2 ໂກຣິນໂທ 6:16-18..........................................................................

4.3 ໃຜເປັນຜູ້ຕັ້ງໃຫ້ມະນຸດແຕ່ງງານກັນ?

**ຕອບ:** ມາຣະໂກ 10:6,9 ..................................................................................

4.4 ເມື່ອແຕ່ງງານຄວນຕັ້ງຄອບຄົວໃໝ່ແນວໃດ?

**ຕອບ:** ມາຣະໂກ 10:9 .....................................................................................

4.5 ພຣະເຈົ້າຊົງຕັ້ງໃຫ້ຜົວເມຍເປັນອັນໜຶ່ງອັນດຽວກັນ ເພາະສະນັ້ນມະນຸດບໍ່ຄວນເຮັດຫຍັງ?

**ຕອບ:** ມາຣະໂກ 10:9 .....................................................................................

5. **ອະທິບາຍ** - ມື້ແຕ່ງງານ

5.1 ມື້ແຕ່ງງານເປັນມື້ຖວາຍກຽດແດ່ພຣະເຈົ້າ ພຣະເຈົ້າຊົງຕັ້ງການແຕ່ງງານຂຶ້ນໃຫ້ເປັນແບບນັ້ນ ການແຕ່ງງານຄວນປະກອບດ້ວຍການນະມັດສະການພຣະເຈົ້າ ການສັນເສີນພຣະເຈົ້າ ການຂອບໃຈສຳລັບຄວາມຮັກຊຶ່ງພຣະເຈົ້າຊົງໂຜດປະທານໃຫ້ ມື້ແຕ່ງງານບໍ່ຄວນເຮັດເພື່ອເອົາໜ້າເອົາຕາ ແຕ່ຄວນເຮັດເພື່ອຖວາຍກຽດແດ່ພຣະເຈົ້າ

5.2 ມື້ແຕ່ງງານ ຄຣິສຕຽນຄວນໄປຮ່ວມພິທີສົມຣົດແລະອວຍພອນຄູ່ບ່າວສາວ ບໍ່ແມ່ນໄປເພື່ອຈະໄດ້ຮັບຜົນປະໂຫຍດອັນໃດ ແຕ່ເພື່ອສະແດງຄວາມຮັກແລະເພື່ອສະໜັບສະໜູນຄອບຄົວໃໝ່

5.3 ມື້ແຕ່ງງານເປັນໂອກາດດີທີ່ຈະນຳພາຄົນທີ່ບໍ່ເຊື່ອມາຮູ້ຈັກກັບພຣະເຢຊູຄຣິດ ໃນການປະກອບພິທີສົມຣົດຄຣິສຕຽນຄວນເອົາພຣະຄຳພີມາສອນຫຼືເທດສະໜາກ່ຽວກັບພຣະເຢຊູແລະຄອບຄົວຄຣິສຕຽນ ຄວນເຮັດທຸກຢ່າງເພື່ອໂນ້ມນາວຈິດໃຈຂອງຄົນທີ່ບໍ່ເຊື່ອໃຫ້ຢາກເປັນຄຣິສຕຽນຄືກັນກັບຄູ່ບ່າວສາວ

6. **ການນຳມາໃຊ້ -** ເມື່ອຄຣິສຕຽນສອງຄົນແຕ່ງງານກັນ ຄວນປະກອບພິທີສົມຣົດແນວໃດ ມີຫຍັງທີ່ບໍ່ຄວນເຮັດ

7. **ຂໍ້ທ່ອງຈຳ** - ມາຣະໂກ 10:9

# 43. ເຫດການສຳຄັນໃນຄອບຄົວຄຣິສຕຽນ - ການເກີດລູກ

1. **ເປົ້າໝາຍ -** ເພື່ອຊ່ວຍໃຫ້ຄຣິສຕຽນເຂົ້າໃຈວ່າຄວນມີທ່າທີແນວໃດຕໍ່ການມີລູກ

2. **ຄຳນຳ -** ໃນສັງຄົມລາວຫຼາຍຄົນບະຜີ ໂດຍເວົ້າວ່າ ຖ້າຊ່ວຍໃຫ້ມີລູກໄດ້ ກໍຈະແກ້ບະຕ່າງໆ ໂດຍເຫດນີ້ລູກຂອງເຂົາກໍຢູ່ໃຕ້ອິດທິພົນຂອງຜີມານຕັ້ງແຕ່ເກີດ ແຕ່ຄຣິສຕຽນບໍ່ຄວນເຮັດແນວນັ້ນ ຄຣິສຕຽນຕ້ອງເຂົ້າໃຈວ່າລູກເປັນຂອງໂຜດປະທານມາຈາກພຣະເຈົ້າ ຄຣິສຕຽນຄວນຖວາຍລູກແດ່ພຣະເຈົ້າ

3. **ອ່ານພຣະຄຳພີ -** ມາຣະໂກ 10:13-16

4. **ຖາມ - ຕອບ**
   - 4.1 ພໍ່ແມ່ພາລູກໄປຫາພຣະເຢຊູເຮັດຫຍັງ?
     **ຕອບ:** ມາຣະໂກ 10:13 ..............................................................................................
   - 4.2 ໃຜຫ້າມບໍ່ໃຫ້ພາລູກໄປຫາພຣະເຢຊູ?
     **ຕອບ:** ມາຣະໂກ 10:13 ..............................................................................................
   - 4.3 ພຣະເຢຊູຊົງເວົ້າແນວໃດກັບຜູ້ທີ່ຫ້າມບໍ່ໃຫ້ພາເດັກນ້ອຍມາຫາພຣະອົງ?
     **ຕອບ:** ມາຣະໂກ 10:14 ..............................................................................................
   - 4.4 ເປັນຫຍັງພຣະເຢຊູບໍ່ໃຫ້ລູກສິດຫ້າມຜູ້ທີ່ຢາກພາເດັກນ້ອຍມາຫາພຣະອົງ?
     **ຕອບ:** ມາຣະໂກ 10:14 ..............................................................................................
   - 4.5 ພຣະເຢຊູບອກວ່າເດັກນ້ອຍເປັນຕົວຢ່າງທີ່ດີໃນເລື່ອງຫຍັງ?
     **ຕອບ:** ມາຣະໂກ 10:15 ..............................................................................................
   - 4.6 ພຣະເຢຊູຊົງອຸ້ມເດັກນ້ອຍເຫຼົ່ານັ້ນ ແລະ ເຮັດຫຍັງໃຫ້ເຂົາອີກ?
     **ຕອບ:** ມາຣະໂກ 10:16 ..............................................................................................

5. **ອະທິບາຍ** - ການມີລູກ
   - 5.1 ພຣະເຈົ້າເປັນພຣະຜູ້ສ້າງໃຫ້ມີລູກເກີດມີມາຕັ້ງແຕ່ຢູ່ໃນທ້ອງແມ່ ສະແດງວ່າ ພຣະເຈົ້າຊົງຮູ້ຈັກເຮົາກ່ອນທີ່ເຮົາຈະເກີດ ຖ້າເປັນແນວນັ້ນເຮົາບໍ່ຄວນເຮັດໃຫ້ຫລຸລູກເພາະລູກເປັນຂອງຂວັນຈາກພຣະເຈົ້າ (ອ່ານ ເພງສັນລະເສີນ 139:13-16)
   - 5.2 ເມື່ອຕັ້ງຕົ້ນມີລູກໃນທ້ອງ ພໍ່ແມ່ຄວນຖວາຍລູກແດ່ພຣະເຈົ້າ ໝາຍຄວາມວ່າ ຕ້ອງຕັ້ງໃຈວ່າຈະອະທິຖານເພື່ອລູກທຸກໆມື້ຕະຫຼອດຊີວິດ ແລະ ຈະສອນລູກໃຫ້ຮູ້ຈັກຄວາມຮັກຂອງພຣະເຈົ້າ ແລະໃຫ້ຮູ້ຈັກຮັກພຣະອົງດ້ວຍ
   - 5.3 ແມ່ນແຕ່ເວລາທີ່ຍັງເປັນເດັກນ້ອຍ ກໍຈະເຊື່ອແລະຮັກພຣະເຢຊູໄດ້ ແບບດຽວກັນກັບພຣະເຢຊູຍົກຍ້ອງເດັກນ້ອຍວ່າ ແຜ່ນດິນຂອງພຣະເຈົ້າເປັນຂອງເດັກນ້ອຍ ສ່ວນພໍ່ແມ່ຄວນນຳພາລູກໃຫ້ເຊື່ອພຣະເຈົ້າຕັ້ງແຕ່ເມື່ອຍັງນ້ອຍຢູ່

6. **ການນຳມາໃຊ້ -** ໃນເມື່ອພີ່ນ້ອງໃນຄຣິສຕະຈັກເຂົ້າໃຈແລ້ວວ່າ ລູກເປັນພຣະພອນມາຈາກພຣະເຈົ້າ ຄົນທີ່ມີລູກຄວນເຮັດຫຍັງເພື່ອສະແດງທ່າທີທີ່ເໝາະສົມຕໍ່ລູກ?

7. **ຂໍ້ທ່ອງຈຳ -** ເພງສັນລະເສີນ 139:13

# 44. ເຫດການສຳຄັນໃນຄອບຄົວຄຣິສຕຽນ - ການຕາຍ

1. **ເປົ້າໝາຍ** - ເພື່ອຊ່ວຍໃຫ້ຄຣິສຕຽນເຂົ້າໃຈວ່າຄວນເຮັດແນວໃດເມື່ອພີ່ນ້ອງຄຣິສຕຽນເສຍຊີວິດ

2. **ຄຳນຳ** - ເມື່ອຄົນທີ່ບໍ່ເປັນຄຣິສຕຽນຕາຍ ຍາດຕິພີ່ນ້ອງຂອງເຂົາກໍເຮັດບຸນໄປໃຫ້ ໂດຍຫວັງຈະຊ່ວຍຜູ້ຕາຍໃຫ້ຂຶ້ນສະຫວັນ ແຕ່ພຣະຄຳຂອງພຣະເຈົ້າສອນວ່າຄົນທີ່ຕາຍແລ້ວຕ້ອງຢືນຕໍ່ໜ້າພຣະເຈົ້າເພື່ອຖືກຕັດສິນ ຖ້າຫາກເປັນລູກຂອງພຣະເຈົ້າກໍຈະໄດ້ຂຶ້ນສະຫວັນ ແຕ່ຖ້າເປັນຄົນທີ່ບໍ່ເຊື່ອກໍຈະຕ້ອງຕົກນະຮົກ ເຖິງແນວໃດກໍຕາມ ມະນຸດທີ່ຍັງມີຊີວິດຢູ່ເທິງໂລກນີ້ກໍຈະບໍ່ສາມາດຊ່ວຍຜູ້ທີ່ຕາຍໄປແລ້ວນັ້ນໄດ້ ການເຮັດບຸນງານສົບ ບໍ່ວ່າຈະເປັນການເຮັດບຸນ 7 ວັນ ຫຼື 100 ວັນ ຫຼືເຮັດບຸນຄົບຮອບກໍຕາມ ກໍບໍ່ມີປະໂຫຍດຫຍັງເລີຍ ແລ້ວຖ້າຄຣິສຕຽນບໍ່ເຮັດບຸນໃຫ້ກັບຄົນຕາຍພວກເຮົາຄວນຈະເຮັດຫຍັງແດ່?

3. **ອ່ານພຣະຄຳພີ** - ກິດຈະການ 7:54 - 8:2; 1 ໂກຣິນໂທ 15:51-57

4. **ຖາມ - ຕອບ**

4.1 ເມື່ອຊະເຕຟາໂນປະກາດເລື່ອງຄວາມຍິ່ງໃຫຍ່ຂອງພຣະເຢຊູ ຊາວຢິວເຮັດຫຍັງຕໍ່ເຂົາ?
**ຕອບ:** ກິດຈະການ 7:59.......................................................................................

4.2 ກ່ອນຊະເຕຟາໂນຕາຍ ເຂົາຂໍໃຫ້ພຣະເຈົ້າເຮັດແນວໃດຕໍ່ຜູ້ຂ້າເຂົາ?
**ຕອບ:** ກິດຈະການ 7:60.......................................................................................

4.3 ພຣະຄຳພີໃຊ້ຄຳໃດທີ່ໝາຍເຖິງຄວາມຕາຍສຳລັບຄຣິສຕຽນ?
**ຕອບ:** ໂຢຮັນ 11:11-14; ກິດຈະການ 7:60 ...........................................................

4.4 ພີ່ນ້ອງຄຣິສຕຽນທີ່ຝັງສົບຊະເຕຟາໂນສະແດງທ່າທີແນວໃດ?
**ຕອບ:** ກິດຈະການ 8:2 ........................................................................................

4.5 ຄຣິສຕຽນຕາຍໄປແລ້ວຈະໄດ້ຮັບຜົນແນວໃດ?
**ຕອບ:** 1 ໂກຣິນໂທ 15:51....................................................................................

4.6 ຄຣິສຕຽນຈະຖືກປ່ຽນແປງແນວໃດ?
**ຕອບ:** 1 ໂກຣິນໂທ 15:53....................................................................................

4.7 ຄວາມຕາຍຈະແພ້ຄຣິສຕຽນບໍ?
**ຕອບ:** 1 ໂກຣິນໂທ 15:55....................................................................................

4.8 ເມື່ອຄຣິສຕຽນປະສົບກັບຄວາມຕາຍ ເຮົາຄວນມີທ່າທີແນວໃດ?
**ຕອບ:** 1 ໂກຣິນໂທ 15:57....................................................................................

5. **ອະທິບາຍ** - ຄວາມຕາຍ

5.1 ສໍາລັບຄຣິສຕຽນ ຄວາມຕາຍຄືກັນກັບການນອນຫຼັບ ເພາະສະນັ້ນຈຶ່ງບໍ່ຕ້ອງຢ້ານ ພຣະເຢຊູຊົງມີໄຊຊະນະເໜືອຄວາມຕາຍໂດຍການຄືນມີຊີວິດຂອງພຣະອົງ ຄຣິສຕຽນຕ້ອງຕາຍຄືກັນກັບມະນຸດທຸກຄົນ ແຕ່ຫຼັງຈາກຕາຍແລ້ວກໍຈະໄປຢູ່ກັບພຣະເຈົ້າທັນທີ

5.2 ສໍາລັບຄຣິສຕຽນທີ່ຕາຍກໍບໍ່ສົມຄວນເຮັດບຸນ ເພາະວ່າມະນຸດບໍ່ໄດ້ລອດໄດ້ຍ້ອນການເຮັດບຸນແຕ່ລອດຍ້ອນພຣະຄຸນຂອງພຣະເຈົ້າ ການເຮັດບຸນທັງໝົດເປັນການໄຮ້ປະໂຫຍດທັງສິ້ນ

5.3 ສໍາລັບຄຣິສຕຽນທີ່ຕາຍກໍບໍ່ຕ້ອງເສຍໃຈຫລາຍ ເປັນເລື່ອງທໍາມະດາທີ່ຈະຮ້ອງໄຫ້ເມື່ອພີ່ນ້ອງຕາຍ ເພາະອາດຈະອີກຫຼາຍປີກວ່າພວກເຮົາຈະໄດ້ພົບກັນໃໝ່ ແຕ່ຄຣິສຕຽນບໍ່ຄວນຮ້ອງໄຫ້ເສຍໃຈຫລາຍແບບຄົນທີ່ບໍ່ເຊື່ອ ເພາະຄົນທີ່ບໍ່ເຊື່ອບໍ່ມີຄວາມຫວັງແນວໃດເລີຍ ແຕ່ພວກເຮົາທີ່ເຊື່ອພຣະເຈົ້າຄວນດີໃຈວ່າຜູ້ທີ່ຈາກເຮົາໄປນັ້ນກໍໄດ້ໄປຢູ່ທີ່ສຸກສະບາຍແລ້ວ

5.4 ສໍາລັບຄຣິສຕຽນ ພິທີສົບເປັນໂອກາດທີ່ດີທີ່ສຸດທີ່ຈະປະກາດເລື່ອງຄວາມລອດພົ້ນໃນພຣະເຢຊູຄຣິດ ອາດມີຄົນບໍ່ເຊື່ອຫຼາຍຄົນມາຮ່ວມພິທີນໍາ ເຮົາຕ້ອງສວຍໂອກາດນີ້ເພື່ອໃຫ້ເຂົາຮູ້ຂ່າວປະເສີດເລື່ອງພຣະເຢຊູ

6. **ການນໍາມາໃຊ້** - ເມື່ອມີຄຣິສຕຽນຕາຍ ພວກພີ່ນ້ອງຄຣິສຕຽນຄວນປະກອບພິທີແນວໃດ? ຄວນມີທ່າທີຕໍ່ພີ່ນ້ອງຂອງຜູ້ຕາຍແນວໃດ? ຄວນເຮັດແນວໃດກັບສົບ? ຂໍໃຫ້ພີ່ນ້ອງຈື່ໄວ້ວ່າ ຄຣິສຕຽນຄວນເຮັດທຸກຢ່າງເພື່ອຖວາຍກຽດແດ່ພຣະເຈົ້າ ຊຶ່ງລວມເຖິງໃນການເຮັດງານສົບນໍາ

7. **ຂໍ້ທ່ອງຈໍາ** - 1 ໂກຣິນໂທ 15:52 “ຄົນທີ່ຕາຍແລ້ວຈະຖືກຊົງບັນດານໃຫ້ເປັນຂຶ້ນມາໂດຍບໍ່ເປື່ອຍເນົ່າ ແລະ ຝ່າຍພວກເຮົາກໍຈະຊົງຖືກປ່ຽນແປງໃໝ່”

# 45. ການສະຫຼອງວັນພິເສດຂອງຄຣິສຕຽນ

1. **ເປົ້າໝາຍ -** ເພື່ອຊ່ວຍໃຫ້ຄຣິສຕຽນເຂົ້າໃຈວ່າ ຄວນສັນເສີນຄວາມດີຂອງພຣະເຈົ້າທີ່ຊົງມີຕໍ່ເຮົາ ດ້ວຍການສະເຫຼີມສະຫຼອງວັນພິເສດຕ່າງໆ

2. **ຄໍານໍາ -** ໃນສະໄໝພຣະຄໍາພີເດີມ ຊາວອິດສະຣາເອນເຄີຍສະຫຼອງວັນພິເສດຕ່າງໆ ເປັນເຫດສະການຕ່າງໆທີ່ພຣະເຈົ້າໄດ້ກໍານົດໄວ້ເພື່ອໃຫ້ປະຊາຊາດຂອງພຣະອົງຈະໄດ້ລະນຶກຄຶດຮອດຄວາມດີ, ຄວາມຮັກ ແລະການຊ່ວຍເຫຼືອຂອງອົງພຣະຜູ້ເປັນເຈົ້າ ປັດຈຸບັນນີ້ບໍ່ມີເຫດສະການທີ່ພຣະເຈົ້າຊົງກໍານົດໄວ້ໃຫ້ຄຣິສຕະຈັກ ແຕ່ກໍເປັນການດີທີ່ຄຣິສຕະຈັກຄວນສະຫຼອງວັນພິເສດຕ່າງໆ ເພື່ອພີ່ນ້ອງຈະໄດ້ລະນຶກເຖິງພຣະຄຸນແລະຄວາມດີຂອງພຣະອົງ

3. **ອ່ານພຣະຄໍາພີ -** ເອຊາຢາ 12:1-6 ເປັນບົດເພງທີ່ຊາວອິດສະຣາເອນຮ້ອງເມື່ອສະຫຼອງເຫດສະການ

4. **ຖາມ - ຕອບ**

4.1 ແມ່ນຫຍັງເປັນເປົ້າໝາຍໃນການສະຫຼອງວັນພິເສດ?

**ຕອບ:** ເອຊາຢາ 12:1 ..........................................................................................

4.2 ຄວນຂອບພຣະຄຸນພຣະເຈົ້າເພາະພຣະອົງຊົງເປັນຫຍັງສໍາລັບເຮົາ?

**ຕອບ:** ເອຊາຢາ 12:2 ..........................................................................................

4.3 ໃນການສະຫຼອງວັນພິເສດ ແລະ ໃນການສັນເສີນພຣະເຈົ້າ ເຮົາຄວນມີທ່າທີແນວໃດ?

**ຕອບ:** ເອຊາຢາ 12:3 ..........................................................................................

4.4 ການສະຫຼອງວັນພິເສດເປັນການປະກາດເຖິງບັນດາພຣະຣາຊກິດຂອງພຣະອົງໃຫ້ໃຜຮູ້ຈັກ?

**ຕອບ:** ເອຊາຢາ 12:1 ..........................................................................................

4.5 ປະຊາຊາດອິດສະຣາເອນໄດ້ເຮັດຫຍັງເພື່ອເປັນການສະແດງຄວາມຊື່ນບານໃນພຣະເຈົ້າ?

**ຕອບ:** ເອຊາຢາ 12:5-6 ......................................................................................

5. **ອະທິບາຍ** - ການສະຫຼອງວັນພິເສດຂອງຄຣິສຕຽນ

5.1 ຄຣິສຕຽນຄວນສະຫຼອງວັນຫຍັງແດ່? ຄວາມຈິງພຣະເຈົ້າບໍ່ໄດ້ຊົງກຳນົດໃຫ້ວ່າຈະຕ້ອງສະຫຼອງວັນພິເສດຫຍັງເລີຍ ເພາະສະນັ້ນ ຄຣິສຕຽນຈຶ່ງມີອິດສະຫຼະໃນການເລືອກວັນທີ່ຈະຖືເປັນວັນສຳຄັນ ສ່ວນຫຼາຍ ຄຣິສຕຽນທົ່ວໂລກເຫັນພ້ອມກັນວ່າຢາກຖືວັນພິເສດຕໍ່ລົງໄປນີ້ ຄື:

- ວັນຄຣິດສະມາດ ເປັນວັນເກີດຂອງພຣະເຢຊູຄຣິດ ພວກເຮົາບໍ່ຮູ້ວັນເກີດແທ້ຂອງພຣະເຢຊູ ແຕ່ທົ່ວໂລກສ່ວນໃຫຍ່ແມ່ນຖືເປັນວັນທີ 25 ທັນວາ (ເດືອນ 12) ຂອງທຸກປີ
- ວັນຕາຍຈົນເຖິງວັນກັບເປັນຄືນມາຂອງພຣະເຢຊູ ເປັນເວລາ 3 ວັນໃນເດືອນມີນາ ຫລື ເມສາ (ເດືອນ 3 ຫລື 4) ຂອງທຸກໆປີ
- ວັນຖວາຍຜົນເກັບກ່ຽວຊຶ່ງເປັນວັນຂອບຄຸນພຣະເຈົ້າສຳລັບໝາກຜົນ ການນັດວັນສະຫຼອງນີ້ແມ່ນແລ້ວແຕ່ພີ່ນ້ອງຈະຈັດຂຶ້ນໃນແຕ່ລະທ້ອງຖິ່ນ ເພາະລະດູເກັບກ່ຽວບໍ່ຕົງກັນໃນແຕ່ລະພາກແລະໃນແຕ່ລະປະເທດ
- ວັນຂຶ້ນປີໃໝ່ຊຶ່ງເປັນວັນຂອບຄຸນພຣະເຈົ້າສຳລັບປີຜ່ານມາແລະຂໍພຣະເຈົ້າຊົງນຳພາໃນປີໃໝ່ ນອກຈາກວັນພິເສດເຫລົ່ານີ້ ພີ່ນ້ອງຈະສະຫຼອງວັນພິເສດອື່ນໆອີກໄດ້ຕາມເຫັນສົມຄວນ ເພາະພຣະຄຳພີບໍ່ໄດ້ຫ້າມ ຕົວຢ່າງ: ມື້ຂຶ້ນເຮືອນໃໝ່ ວັນເກີດ ວັນແມ່ ໆລໆ

5.2 ໃນການສະຫຼອງວັນພິເສດ ສິ່ງທີ່ຄວນຄິດໃສ່ສະເໝີກໍຄື ເຮັດຢ່າງໃດເພື່ອພຣະເຈົ້າຈະໄດ້ຮັບກຽດນຳ ພີ່ນ້ອງຈະຖວາຍກຽດຕໍ່ພຣະເຈົ້າດ້ວຍການສະແດງຄວາມຊື່ນບານໃນພຣະອົງກໍໄດ້ ຕົວຢ່າງ: ດ້ວຍການຮ້ອງເພງ, ເທດສະໜາ, ກິນເຂົ້ານຳກັນ, ຮ້ອງເພງພິເສດ, ຫຼິ້ນລະຄອນ, ການຫຼິ້ນທີ່ມ່ວນຊື່ນຕ່າງໆ ບໍ່ວ່າເຮົາຈະເຮັດຫຍັງກໍຕາມເຮົາຕ້ອງເຊີດຊູພຣະນາມຂອງພຣະອົງໃນທຸກເລື່ອງ

5.3 ວັນພິເສດເປັນໂອກາດທີ່ດີໃນການສັນເສີນພຣະເຈົ້າ ໃນການສ້າງສັງຄົມຄຣິສຕຽນ ແລະໃນການພາຄົນມາຮູ້ຈັກກັບພຣະເຈົ້າ ແຕ່ວ່າບໍ່ໄດ້ໝາຍຄວາມວ່າວັນນັ້ນເປັນວັນທີ່ສັກສິດເປັນພິເສດກວ່າວັນທຳມະດາ ພຣະຄຳພີສອນວ່າທຸກມື້ໃນຕະຫຼອດປີກໍຄືກັນໝົດ ສິ່ງທີ່ສຳຄັນບໍ່ແມ່ນຢູ່ທີ່ວັນພິເສດນັ້ນແຕ່ສິ່ງສຳຄັນແມ່ນຢູ່ທີ່ການໃຊ້ວັນນັ້ນເພື່ອເປັນກຽດໃຫ້ພຣະອົງ

6. **ການນຳມາໃຊ້** - ພີ່ນ້ອງຢາກຈະສະຫຼອງວັນຫຍັງແດ່ໃຫ້ເປັນວັນພິເສດແລະຢາກຈະເຮັດຫຍັງໃນວັນນັ້ນ?

7. **ຂໍ້ທ່ອງຈຳ** - ເອຊາຢາ 12:4

# 46. ອາວຸດຍຸດທະພັນທັງຊຸດຂອງພຣະເຈົ້າ

1. **ເປົ້າໝາຍ -** ເພື່ອໃຫ້ກຳລັງໃຈຄຣິສຕຽນ ໃຫ້ມີຄວາມເຂັ້ມແຂງແລະກ້າຫານໃນການຕໍ່ສູ້ກັບສັດຕູທາງດ້ານຈິດວິນຍານ ໂດຍສວມອາວຸດຍຸດທະພັນຄົບຊຸດຂອງພຣະເຈົ້າໄວ້ຕະຫຼອດເວລາ

2. **ຄຳນຳ -** ຄັ້ງໜຶ່ງມີຊາຍ 2 ຄົນພວມຕໍ່ສູ້ກັນແບບເອົາເປັນເອົາຕາຍ ຊາຍຄົນທີ 1 ນັ້ນໃນມືຖືດາບຢືນຈັງຢູ່ ສ່ວນຊາຍຄົນທີ 2 ນັ້ນສູ້ດ້ວຍມືເປົ່າ ຊາຍທັງສອງຄົນຕໍ່ສູ້ກັນຄາວໜຶ່ງສັ້ນໆກໍປາກົດວ່າຊາຍຄົນທີ 2 ນັ້ນຕ້ອງພ່າຍແພ້ໄປເພາະຂາດອາວຸດ ລາວຈຶ່ງຖືກຊາຍຄົນທີ 1 ໃຊ້ດາບຟັນຕົວລາວເປັນແຜຫຼາຍບ່ອນ ຈົນເຖິງແກ່ຄວາມຕາຍ ທ່ານຮູ້ບໍ່ວ່າພວກເຮົາພວມສູ້ກັບສັດຕູຕົວຮ້າຍກາດ ກໍຄື: ພວກຜີມານວິນຍານຊົ່ວທີ່ຢູ່ຝ່າຍອຳນາດແຫ່ງຄວາມມືດໃນສະຖານຟ້າອາກາດ ຖ້າເຮົາຕໍ່ສູ້ແບບມືເປົ່າກໍມີແຕ່ຈະພ່າຍແພ້ທ່າດຽວ ດັ່ງນັ້ນເຮົາຈຳເປັນຕ້ອງຮັບເອົາອາວຸດຍຸດທະພັນຄົບຊຸດຂອງພຣະເຈົ້າມາໃຊ້ແລະສວມໃສ່ ເຮົາຈຶ່ງຈະຕໍ່ສູ້ກັບພວກມັນແລະແພ້ພວກມັນໄດ້

3. **ອ່ານພຣະຄຳພີ -** ເອເຟໂຊ 6:10-18

4. **ຖາມ - ຕອບ**

4.1 ກຳລັງເຫື່ອແຮງຂອງຄຣິສຕຽນມາຈາກໃສແລະເປັນແນວໃດ?

**ຕອບ:** ເອເຟໂຊ 6:10 ..........................................................................................

4.2 ເຮົາຕ້ອງສວມຫຍັງ? ສວມເພື່ອຫຍັງ?

**ຕອບ:** ເອເຟໂຊ 6:11 ..........................................................................................

4.3 ເຮົາຕໍ່ສູ້ກັບໃຜແດ່?

**ຕອບ:** ເອເຟໂຊ 6:12 ..........................................................................................

4.4 ເຮົາຕ້ອງຮັບຍຸດທະພັນຄົບຊຸດຂອງພຣະເຈົ້າໄວ້ເພື່ອຫຍັງ?

**ຕອບ:** ເອເຟໂຊ 6:13 ..........................................................................................

4.5 ເຮົາຕ້ອງເອົາຫຍັງມາໃສ່ແດ່ເພື່ອປ້ອງກັນຕົວ? ແຕ່ລະຢ່າງນັ້ນປຽບໄດ້ກັບອັນໃດ?

**ຕອບ:** ເອເຟໂຊ 6:14-17

| | |
|---|---|
| 1) ຄວາມຈິງ .................................... | 1) ສາຍແອວ .................................... |
| 2) .................................... | 2) .................................... |
| 3) .................................... | 3) .................................... |
| 4) .................................... | 4) .................................... |
| 5) .................................... | 5) .................................... |

4.6 ເຮົາຕ້ອງຕໍ່ສູ້ໂດຍໃຊ້ຫຍັງເປັນອາວຸດ? ອາວຸດນັ້ນແມ່ນຫຍັງ ແລະ ໝາຍຄວາມວ່າແນວໃດ?

**ຕອບ:** ເອເຟໂຊ 6:17 ......................................................................................

......................................................................................

4.7 ມີຄໍາສັ່ງແນວໃດອີກ?

**ຕອບ:** ເອເຟໂຊ 6:18 ......................................................................................

......................................................................................

5. **ອະທິບາຍ** - ອາວຸດຍຸດທະພັນຄົບຊຸດຂອງພຣະເຈົ້າ

5.1 ມະນຸດເຮົາຕ້ອງຕົກຢູ່ໃນສົງຄາມ ສົງຄາມນີ້ແມ່ນສົງຄາມທາງດ້ານຈິດວິນຍານ ເປັນການສູ້ລົບລະຫວ່າງອານາຈັກຂອງພຣະເຈົ້າແລະອານາຈັກຂອງຜີມານຊາຕານ ລະຫວ່າງຄວາມສະຫວ່າງ ແລະຄວາມມືດ

5.2 ພຣະເຈົ້າຊົງປະທານອາວຸດຍຸດທະພັນຂອງພຣະອົງໃຫ້ແກ່ເຮົາ ເພື່ອເຮັດໃຫ້ເຮົາພ້ອມທີ່ຈະຕໍ່ສູ້ສະເໝີ ຍ້ອນເຮົາມີ:

- ຄວາມຈິງມັດແອວ ໝາຍຄວາມວ່າ ຄຣິສຕຽນຕ້ອງຊື່ກົງ ແລະ ເວົ້າຄວາມຈິງ
- ຄວາມຊອບທໍາປ້ອງກັນເອິກ ໝາຍຄວາມວ່າ ຈິດໃຈຂອງຄຣິສຕຽນໄດ້ຮັບການຊໍາລະແລ້ວດ້ວຍເລືອດຂອງພຣະເຢຊູ
- ຂ່າວປະເສດແຫ່ງສັນຕິສຸກເປັນເກີບ ໝາຍຄວາມວ່າ ເຮົາຈະຍ່າງຕິດຕາມພຣະເຢຊູໄປທຸກຫົນທຸກແຫ່ງແລະເປັນພະຍານເພື່ອພຣະອົງ
- ຄວາມເຊື່ອເປັນໂລ່ ໝາຍຄວາມວ່າ ເຮົາຕ້ອງເຊື່ອໃນພຣະຄໍາຂອງພຣະເຈົ້າແລະຣິດເດດຂອງພຣະອົງສະເໝີ
- ຄວາມລອດພົ້ນເປັນໝວກເຫຼັກເພື່ອປ້ອງກັນຫົວຄິດໃຫ້ຄິດແຕ່ທາງພຣະຄໍາຂອງພຣະເຈົ້າເທົ່ານັ້ນ

5.3 ພຣະເຈົ້າໂຜດປະທານເຄື່ອງປ້ອງກັນຕົວຫລາຍຢ່າງໃຫ້ເຮົາໃສ່ ແຕ່ໂຜດປະທານອາວຸດສໍາລັບຕໍ່ສູ້ຢ່າງໜຶ່ງຢ່າງດຽວເທົ່ານັ້ນໃຫ້ແກ່ພວກເຮົາ ກໍຄື ດາບ ຊຶ່ງໝາຍເຖິງຄໍາສັ່ງສອນຂອງພຣະອົງ ເພາະສະນັ້ນເຮົາຈໍາເປັນຕ້ອງອ່ານ ຮຽນ ທວນສໍານຶກແລະທ່ອງຈໍາພຣະຄໍາພີສະເໝີເພື່ອເຮົາຈະພ້ອມສູ້ລົບກັບມານແລະມີໄຊຊະນະຕະຫຼອດການ

5.4 ການອະທິຖານມີສ່ວນສໍາຄັນໃນການຕໍ່ສູ້ທາງດ້ານວິຍານ ເຮົາຄວນຈະອະທິຖານຂໍສະຕິປັນຍາ ກໍາລັງເຫື່ອແຮງແລະຂໍໃຫ້ພົ້ນຈາກມານຮ້າຍ ເຮົາຄວນອະທິຖານເພື່ອຕົນເອງແລະເພື່ອພີ່ນ້ອງຄຣິສຕຽນອີກດ້ວຍ

6. **ການນໍາມາໃຊ້** - ຄຣິສຕຽນຈະສວມອາວຸດຍຸດທະພັນຄົບຊຸດຂອງພຣະເຈົ້າໄດ້ແນວໃດ?

7. **ຂໍ້ທ່ອງຈໍາ** - ເອເຟໂຊ 6:10-12

# 47. ການມີໄຊຊະນະໃນເມື່ອຜະຈົນຜີມານມາຫຼອກລວງ

1. **ເປົ້າໝາຍ** - ເພື່ອສອນໃຫ້ຄຣິສຕຽນເຂົ້າໃຈວ່າຜີມານມີວິທີການແນວໃດ ແລະ ໃຫ້ເຮົາຮູ້ວ່າເຮັດແນວໃດຈຶ່ງຈະແພ້ມັນໄດ້

2. **ຄຳນຳ** - ໃນການເຮັດສົງຄາມທະຫານຕ້ອງຮູ້ວ່າສັດຕູມີອາວຸດແລະມີແຜນການຫຍັງແດ່ ເພື່ອຈະໄດ້ຕຽມຕົວສູ້ກັບມັນໄດ້ ແບບດຽວກັນ ຄຣິສຕຽນກໍຕ້ອງຮູ້ວ່າຈະແພ້ການທົດລອງຂອງຜີມານໄດ້ແນວໃດ

3. **ອ່ານພຣະຄຳພີ** - ມັດທາຍ 3:13-4:11

4. **ຖາມ - ຕອບ**

4.1 ເມື່ອພຣະເຢຊູຮັບບັບຕິສະມາແລ້ວ ໃຜມາສະຖິດຢູ່ເທິງພຣະອົງ?

**ຕອບ:** ມັດທາຍ 3:16........................................................................................

4.2 ພຣະເຈົ້າຊົງເວົ້າຫຍັງກ່ຽວກັບພຣະເຢຊູ?

**ຕອບ:** ມັດທາຍ 3:17........................................................................................

4.3 ໃຜນຳພາພຣະເຢຊູໄປໃນປ່າປ່ຽວ? ນຳໄປທີ່ນັ້ນເພື່ອຫຍັງ?

**ຕອບ:** ມັດທາຍ 4:1..........................................................................................

4.4 ພຣະເຢຊູຊົງອົດອາຫານຈັກມື້? ແລ້ວພຣະອົງຮູ້ສຶກແນວໃດ?

**ຕອບ:** ມັດທາຍ 4:2..........................................................................................

4.5 ພະຍາມານມາຫາພຣະເຢຊູແລ້ວເວົ້າວ່າແນວໃດ?

**ຕອບ:** ມັດທາຍ 4:3..........................................................................................

4.6 ພຣະເຢຊູຕອບວ່າແນວໃດ?

**ຕອບ:** ມັດທາຍ 4:4..........................................................................................

4.7 ພະຍາມານສັ່ງພຣະເຢຊູເຮັດຫຍັງ?

**ຕອບ:** ມັດທາຍ 4:6..........................................................................................

4.8 ພຣະເຢຊູບໍ່ຍອມຟັງຄວາມພະຍາມານ ແລະ ພຣະອົງຊົງຕອບວ່າແນວໃດ?

**ຕອບ:** ມັດທາຍ 4:7..........................................................................................

4.9 ຖ້າພະເຢຊູຈະກາບລົງນະມັດສະການພະຍາມານ ມັນເວົ້າວ່າມັນຈະເອົາຫຍັງໃຫ້ພຣະເຢຊູ?

**ຕອບ:** ມັດທາຍ 4:9..........................................................................................

4.10 ພຣະເຢຊູຊົງເວົ້າວ່າແນວໃດກັບມານຊາຕານ?

**ຕອບ:** ມັດທາຍ 4:10........................................................................................

4.11 ແລ້ວພະຍາມານມາເຮັດຫຍັງ?

**ຕອບ:** ມັດທາຍ 4:11........................................................................................

5. **ອະທິບາຍ** - ການມີໄຊຊະນະໃນເມື່ອຜະຈົນຜີມານມາຫຼອກລວງ

5.1 ເມື່ອພະຍາມານມາຫຼອກລວງພຣະເຢຊູ ພຣະວິນຍານຊົງສະຖິດຢູ່ກັບພຣະເຢຊູແລະຊົງນຳພຣະເຢຊູ ເຊັ່ນດຽວກັນ ພຣະວິນຍານບໍຣິສຸດຊົງສະຖິດຢູ່ກັບພວກເຮົາເພື່ອຊົງນຳພາແລະຊ່ວຍພວກເຮົາໃນເມື່ອຜີມານມາຫຼອກລວງພວກເຮົາ

5.2 ມານພະຍາຍາມໃຫ້ພຣະເຢຊູສົງໄສພຣະຄຳພຣະເຈົ້າ ພຣະເຈົ້າບອກວ່າ “ທ່ານຜູ້ນີ້ເປັນລູກທີ່ຮັກຂອງເຮົາ” (ມັດທາຍ 3:17) ສະນັ້ນມານເວົ້າວ່າ “ຖ້າທ່ານເປັນບຸດຂອງພຣະເຈົ້າ” (ມັດທາຍ 4:3) ວິທີການຢ່າງໜຶ່ງຂອງຜີມານກໍຄື ໃຫ້ເຮົາສົງໄສວ່າພຣະຄຳຂອງພຣະເຈົ້າແລະພຣະສັນຍາຂອງພຣະເຈົ້າບໍ່ເປັນຄວາມຈິງ

5.3 ພຣະເຢຊູຕອບພະຍາມານທຸກໆເທື່ອໂດຍການອ້າງຂໍ້ພຣະຄຳພີ (ມັດທາຍ 4:4,7,10) ຄຳສັ່ງສອນຂອງພຣະເຈົ້າເປັນອາວຸດຂອງເຮົາໃນການຕໍ່ສູ້ກັບຜີມານຊາຕານຄືກັນ ເພາະສະນັ້ນເຮົາຕ້ອງຂະຫັຍນໝັ່ນພຽນໃນການຮຽນແລະການທ່ອງຈຳພຣະຄຳພີສະເໝີ

5.4 ພະຍາມານມັກຕົວະ ມັນບອກວ່າຈະເອົາອານາຈັກໃນໂລກໃຫ້ແກ່ພຣະເຢຊູ (ມັດທາຍ 4:8) ແຕ່ອານາຈັກທັງໝົດຢູ່ໃນໂລກນີ້ເປັນຂອງພຣະເຢຊູຢູ່ແລ້ວ ມານຈະຕົວະໃຫ້ເຮົາສະເໝີ ເຮົາຕ້ອງລະວັງບໍ່ໃຫ້ຫລົງເຊື່ອຄຳເວົ້າຂອງມານ

5.5 ພຣະເຢຊູຊົງສັ່ງໃຫ້ພະຍາມານອອກໄປແລະມັນຈຶ່ງປະພຣະອົງໄປ (ມັດທາຍ 4:11,10) ເຮົາຜູ້ເປັນລູກຂອງພຣະເຈົ້າມີສິດສັ່ງໃຫ້ພະຍາມານແລະຜີມານທັງຫລາຍໜີຫ່າງໄປຈາກເຮົາໃນພຣະນາມຂອງພຣະເຢຊູຄຣິດແລະມັນກໍຕ້ອງໄປຄືກັນ

6. **ການນຳມາໃຊ້** - ທ່ານຈະຕຽມຕົວໃຫ້ພ້ອມເພື່ອຜະຈົນແລະຕໍ່ສູ້ກັບການຫຼອກລວງຂອງຜີມານໄດ້ແນວໃດແດ່? ເມື່ອຜີມານຊັກຊວນໃຫ້ທ່ານເຮັດຜິດ ທ່ານຈະເຮັດຫຍັງເພື່ອແພ້ມັນໄດ້ແລະບໍ່ໃຫ້ຫລົງເຮັດບາບ

7. **ຂໍ້ທ່ອງຈຳ** - ມັດທາຍ 4:10-11

# 48. ໄຊຊະນະເໜືອຜີ ແລະ ວິນຍານຊົ່ວ

1. **ເປົ້າໝາຍ -** ເພື່ອໃຫ້ຜູ້ເຊື່ອທຸກຄົນມີຄວາມເຂົ້າໃຈແລະໝັ້ນໃຈວ່າເຮົາມີອຳນາດເໜືອຜີມານວິນຍານຊົ່ວທັງປວງ ເພາະພຣະເຢຊູມີອຳນາດເໜືອຜີມານວິຍານຊົ່ວແລະພຣະອົງກໍໄດ້ຊົງປະທານອຳນາດນີ້ໃຫ້ແກ່ຜູ່ທີ່ເຊື່ອໃນພຣະນາມຂອງພຣະອົງທຸກໆຄົນ

2. **ຄຳນຳ -** ຄົນທົ່ວໄປເຊື່ອວ່າຜີເປັນຄົນທີ່ຕາຍໄປແລ້ວ ແຕ່ຄວາມຄິດຈັ່ງຊີ້ບໍ່ຈິງເລີຍ ຜີເປັນລູກນ້ອງຂອງຊາຕານພະຍາມານ ເປັນວິນຍານຊົ່ວທີ່ມັກຫຼອກຫຼອນເຮັດໃຫ້ມະນຸດຢ້ານກົວແລະເດືອດຮ້ອນ ມະນຸດທີ່ເສຍຊີວິດໄປແລ້ວບໍ່ໄດ້ກັບຄືນມາເປັນຜີ ແຕ່ຈະຂຶ້ນສະຫວັນຫຼືຕົກນະຮົກແລ້ວແຕ່ພຣະເຈົ້າຕັດສິນ

3. **ອ່ານພຣະຄຳພີ -** ມາຣະໂກ 5:1-20, ລູກາ 10:17-20

4. **ຖາມ - ຕອບ**

4.1 ຜູ້ຊາຍທີ່ມີຜີເຂົ້າສິງຢູ່ ເຂົາອາໄສຢູ່ໃສ? ເຂົາມັກເຮັດຫຍັງ?

**ຕອບ:** ມາຣະໂກ 5:2-5 ........................................................................

4.2 ເມື່ອເຂົາເຫັນພຣະເຢຊູ ເຂົາເຮັດຫຍັງ?

**ຕອບ:** ມາຣະໂກ 5:6 ........................................................................

4.3 ເຂົາຮູ້ວ່າພຣະເຢຊູແມ່ນໃຜບໍ?

**ຕອບ:** ມາຣະໂກ 5:7 ........................................................................

4.4 ພຣະເຢຊູໄດ້ສັ່ງຫຍັງໃຫ້ຜີທີ່ເຂົ້າສິງຄົນນັ້ນ?

**ຕອບ:** ມາຣະໂກ 5:8 ........................................................................

4.5 ຜີທັງຫຼາຍນັ້ນຂໍຫຍັງຈາກພຣະເຢຊູ?

**ຕອບ:** ມາຣະໂກ 5:12 ........................................................................

4.6 ພຣະເຢຊູຊົງເຮັດຫຍັງ ແລ້ວມີຫຍັງເກີດຂຶ້ນ?

**ຕອບ:** ມາຣະໂກ 5:13 ........................................................................

4.7 ເຫດການນີ້ໄດ້ປ່ຽນແປງຊີວິດຂອງຜູ້ຊາຍຄົນນີ້ແນວໃດ?

**ຕອບ:** ມາຣະໂກ 5:15 ........................................................................

4.8 ລູກສິດເຈັດສິບຄົນມີຄວາມຊື່ນຊົມຍິນດີຍ້ອນຫຍັງ?

**ຕອບ:** ລູກາ 10:17 ........................................................................

4.9 ພຣະເຢຊູມອບອຳນາດຫຍັງແກ່ລູກສິດ?

**ຕອບ:** ລູກາ 10:19 ........................................................................

4.10 ລູກສິດຂອງພຣະເຢຊູຄວນຊົມຊື່ນຍິນດີຍ້ອນຫຍັງ?

**ຕອບ:** ລູກາ 10:20 ........................................................................

5. **ອະທິບາຍ** - ໄຊຊະນະເໜືອຜີ ແລະ ວິນຍານຊົ່ວ

5.1 ພວກຜີເປັນລູກນ້ອງຂອງມານຊາຕານ ພວກຜີເຄີຍເປັນເທວະດາຂອງພຣະເຈົ້າເມື່ອກ່ອນ ແຕ່ເມື່ອພະຍາມານຊາຕານກະບົດຕໍ່ພຣະເຈົ້າພວກມັນກໍໄດ້ຕິດຕາມຊາຕານ ພຣະອົງຈຶ່ງຊົງໄລ່ຊາຕານແລະພວກຜີອອກຈາກສະຫວັນ

5.2 ຜີຮູ້ວ່າພຣະເຢຊູເປັນບຸດຂອງພຣະເຈົ້າຜູ້ສູງສຸດ ແລະ ມັນຍັງຮູ້ອີກວ່າອິດທິພົນຂອງມັນກໍຖືກຈຳກັດໄວ້ແລ້ວເພາະພຣະເຢຊູມີຣິດອຳນາດເໜືອມັນແລະມັນຕ້ອງຟັງຄວາມພຣະອົງ

5.3 ໃນວັນສິ້ນສຸດຂອງໂລກນີ້ ພຣະເຈົ້າຈະຊົງລົງໂທດພວກຜີໂດຍການຖິ້ມມັນໃສ່ນະຣົກພ້ອມກັບຊາຕານ

5.4 ພຣະເຢຊູຊົງສະຖິດຢູ່ກັບຄົນຜູ້ທີ່ເຊື່ອໃນພຣະອົງ ພຣະອົງມີຣິດອຳນາດເໜືອພວກຜີທີ່ຢູ່ໃນໂລກນີ້ ເພາະສະນັ້ນ ຄຣິສຕຽນມີສິດຂັບໄລ່ຜີອອກໄປໃນພຣະນາມຂອງພຣະອົງ

5.5 ພຣະເຢຊູບໍ່ຕ້ອງການໃຫ້ເຮົາດີອົກດີໃຈຍ້ອນວ່າພວກຜີຢູ່ໃຕ້ການບັງຄັບຂອງເຮົາ ແຕ່ພຣະອົງຊົງປາຖະໜາໃຫ້ເຮົາຊົມຊື່ນຍິນດີເພາະວ່າເຮົາມີຊີວິດອັນຕະຫຼອດໄປເປັນນິດ

6. **ການນຳມາໃຊ້** - ເປັນຫຍັງຄຣິສຕຽນຈຶ່ງບໍ່ຄວນຢ້ານຜີ? ຖ້າຫາກວ່າຜີມາຫຼອກຫຼອນຫຼືລົບກວນເຮົາເຮົາຄວນເຮັດຫຍັງແດ່?

7. **ຂໍ້ທ່ອງຈຳ** - ຢາໂກໂບ 4:7

# 49. ການຮັບບັບຕິສະມາ

1. **ເປົ້າໝາຍ** - ເພື່ອຊ່ວຍໃຫ້ເຮົາເຂົ້າໃຈວ່າການຮັບບັບຕິສະມາມີຄວາມໝາຍຫຍັງໃນຊີວິດຂອງຄຣິສຕຽນ

2. **ຄໍານໍາ** - ຄົນທີ່ບໍ່ເຊື່ອສ່ວນຫຼາຍ ເມື່ອເຫັນຄຣິສຕຽນພວມຮັບບັບຕິສະມາ ເຂົາມັກຈະບອກວ່າ ຄຣິສຕຽນພວມລ້າງບາບ ແຕ່ການຮັບບັບຕິສະມາບໍ່ແມ່ນການລ້າງບາບ ບໍ່ມີໃຜສາມາດລ້າງບາບອອກຈາກໃຈດ້ວຍນໍ້າໄດ້ ຖ້າມະນຸດຈະເປັນຄົນບໍຣິສຸດໄດ້ໂດຍພຽງແຕ່ການລ້າງຕົວເທົ່ານັ້ນກໍງ່າຍແທ້ ແຕ່ການຮັບບັບຕິສະມາກໍບໍ່ເປັນການລ້າງບາບແລ້ວ ການຮັບບັບຕິສະມານີ້ໝາຍຄວາມວ່າແນວໃດ?

3. **ອ່ານພຣະຄໍາພີ** - ກິດຈະການ 8:26-40; ໂຣມ 6:1-4

4. **ຖາມ - ຕອບ**
   - 4.1 ຟີລິບປະກາດເລື່ອງຫຍັງໃຫ້ຊາວເອທີໂອເປຍຟັງ?
     **ຕອບ:** ກິດຈະການ 8:35.........................................................................................
   - 4.2 ໃນເມື່ອພວກເຂົາພວມເດີນທາງໄປນັ້ນພວກເຂົາກໍມາເຖິງຫຍັງ?
     **ຕອບ:** ກິດຈະການ 8:36.........................................................................................
   - 4.3 ການຮັບບັບຕິສະມາມີເງື່ອນໄຂຫຍັງແດ່
     **ຕອບ:** ກິດຈະການ 8:37.........................................................................................
   - 4.4 ການຮັບບັບຕິສະມາເຂົ້າໃນພຣະເຢຊູຄຣິດໝາຍເຖິງການເຂົ້າສ່ວນໃນອັນໃດຂອງພຣະອົງ?
     **ຕອບ:** ໂຣມ 6:3 ..................................................................................................
   - 4.5 ການມຸດລົງນໍ້າໝາຍເຖິງຫຍັງ?
     **ຕອບ:** ໂຣມ 6:4 ..................................................................................................
   - 4.6 ການພົ້ນຂຶ້ນຈາກນໍ້າໝາຍເຖິງຫຍັງ?
     **ຕອບ:** ໂຣມ 6:4 ..................................................................................................

5. **ອະທິບາຍ** - ການຮັບບັບຕິສະມາ
   - 5.1 ການຮັບບັບຕິສະມາເປັນເຄື່ອງໝາຍສະແດງໃຫ້ເຫັນວ່າເຮົາເປັນລູກຂອງພຣະເຈົ້າ ການຮັບບັບຕິສະມາບໍ່ສາມາດຊ່ວຍໃຫ້ຜູ້ໜຶ່ງຜູ້ໃດລອດໄດ້ ມະນຸດລອດໄດ້ກໍຍ້ອນພຣະຄຸນຂອງພຣະເຈົ້າ ແລະຍ້ອນຄວາມເຊື່ອໃນພຣະອົງ ບໍ່ແມ່ນຍ້ອນການຮັບບັບຕິສະມາ ຄົນທີ່ຮັບບັບຕິສະມາດ້ວຍນໍ້າແຕ່ຍັງບໍ່ເຊື່ອແທ້ກໍຮັບເປັນພຽງການມຸດລົງໄປໃຫ້ປຽກນໍ້າຊື່ໆ
   - 5.2 ການມຸດລົງນໍ້າໝາຍເຖິງການຕາຍ ສະແດງວ່າ ຜູ້ທີ່ຮັບບັບຕິສະມາແມ່ນຕາຍຝ່າຍຄວາມບາບ ຊີວິດເກົ່າໄດ້ຕາຍໄປແລ້ວ

5.3 ການພົ້ນຂຶ້ນມາຈາກນ້ຳໝາຍເຖິງຊີວິດໃໝ່ ສະແດງວ່າ ຜູ້ຮັບບັບຕິສະມາມີຊີວິດໃໝ່ຊຶ່ງໄດ້ຮັບຈາກພຣະເຢຊູຄຣິດ

5.4 ພຣະເຢຊູໄດ້ຊົງສັ່ງໃຫ້ຜູ້ທີ່ເຊື່ອທຸກຄົນຮັບບັບຕິສະມາດ້ວຍນ້ຳ ເພາະສະນັ້ນເຮົາຄວນຟັງຄວາມ ແລະ ຮັບບັບຕິສະມາຕາມຄຳສັ່ງຂອງພຣະອົງ

6. **ການນຳມາໃຊ້ -** ມີໃຜແດ່ທີ່ເຊື່ອແລ້ວຍັງບໍ່ທັນໄດ້ຮັບບັບຕິສະມາບໍ? ຖ້າຫາກຍັງບໍ່ທັນໄດ້ຮັບກໍຄວນຈະຟ້າວຮັບບັບຕິສະມາສາ ເພື່ອສະແດງອອກວ່າຕົນຕັ້ງໃຈຟັງຄວາມຂອງພຣະເຈົ້າ

7. **ຂໍ້ທ່ອງຈຳ -** ໂຣມ 6:4

# 50. ການຮັບພິທີມະຫາສະນິດ

1. **ເປົ້າໝາຍ -** ເພື່ອຊ່ວຍໃຫ້ຄຣິສຕຽນເຂົ້າໃຈວ່າ ພິທີມະຫາສະນິດມີຄວາມໝາຍຫຍັງແດ່ໃນຊີວິດຄຣິສຕຽນ

2. **ຄຳນຳ -** ເຫດການສຳຄັນທີ່ສຸດຕັ້ງແຕ່ພຣະເຈົ້າຊົງສ້າງໂລກຄືການຕາຍຂອງພຣະເຢຊູເພື່ອໄຖ່ບາບມະນຸດ ດັ່ງນັ້ນການຕາຍຂອງພຣະອົງຈຶ່ງເປັນເຫດການທີ່ບໍ່ຄວນລືມ ດ້ວຍເຫດນີ້ພຣະເຢຊູຈຶ່ງຊົງຕັ້ງພິທີມະຫາສະນິດໄວ້ ເພື່ອໃຫ້ຄຣິສຕຽນລະນຶກເຖິງການຕາຍຂອງພຣະອົງເທິງໄມ້ກາງແຂນສະເໝີ

3. **ອ່ານພຣະຄຳພີ -** ມາຣະໂກ 14:22-26; 1 ໂກຣິນໂທ 11:23-34

4. **ຖາມ - ຕອບ**

4.1 ພຣະເຢຊູໄດ້ຕັ້ງພິທີມະຫາສະນິດຂຶ້ນເມື່ອໃດ?

**ຕອບ:** 1 ໂກຣິນໂທ 11:23..........................................................................

4.2 ເຂົ້າຈີ່ໝາຍເຖິງຫຍັງ?

**ຕອບ:** 1 ໂກຣິນໂທ 11:23,24 ....................................................................

4.3 ເປັນຫຍັງເຮົາຈຶ່ງກິນເຂົ້າຈີ່ນີ້?

**ຕອບ:** 1 ໂກຣິນໂທ 11:24..........................................................................

4.4 ພຣະເຢຊູບອກວ່າຈອກນີ້ແມ່ນຫຍັງ?

**ຕອບ:** 1 ໂກຣິນໂທ 11:25..........................................................................

4.5 ຈອກນີ້ເລັງເຖິງຫຍັງ?

**ຕອບ:** 1 ໂກຣິນໂທ 11:25..........................................................................

4.6 ເປັນຫຍັງເຮົາຈຶ່ງດື່ມຈາກຈອກນີ້?

**ຕອບ:** 1 ໂກຣິນໂທ 11:25..........................................................................

4.7 ກ່ອນຈະຮັບພິທີມະຫາສະນິດເຮົາຄວນຕຽມຕົວຢ່າງໃດ?

**ຕອບ:** 1 ໂກຣິນໂທ 11:28..........................................................................

5. **ອະທິບາຍ** - ການຮັບພິທີມະຫາສະນິດ

5.1 ເຂົ້າຈີ່ເລັງເຖິງຮ່າງກາຍຂອງພຣະຄຣິດທີ່ໄດ້ທົນທຸກທໍລະມານເທິງໄມ້ກາງແຂນຍ້ອນຄວາມບາບຂອງມະນຸດ ເມື່ອເຮົາກິນເຂົ້າຈີ່ນັ້ນເຮົາຄວນລະນຶກສະເໝີວ່າພຣະເຢຊູຊົງຮັບໂທດແທນເຮົາ

5.2 ຈອກນ້ຳອະງຸ່ນ ໝາຍເຖິງເລືອດຂອງພຣະເຢຊູທີ່ໄດ້ໄຫຼຈາກຮ່າງກາຍຂອງພຣະອົງເທິງໄມ້ກາງແຂນ ເມື່ອເຮົາຮັບແລະດື່ມຈາກຈອກນີ້ເຮົາຄວນລະນຶກໄວ້ວ່າພຣະເຢຊູຊົງລ້າງບາບຂອງມະນຸດໂດຍພຣະໂລຫິດຂອງພຣະອົງ

5.3 ພິທີມະຫາສະນິດເປັນພິທີທີ່ຄຣິສຕຽນເຮັດ ເພື່ອລະນຶກເຖິງການຕາຍຂອງພຣະເຢຊູ ເມື່ອລະນຶກເຖິງ ເຮົາຄວນຂອບຄຸນສັນລະເສີນພຣະອົງ ແລະ ຖວາຍເພງສັນເສີນພຣະອົງສຳລັບຄວາມຮັກຍິ່ງໃຫຍ່ມະຫາສານຂອງພຣະອົງທີ່ມີຕໍ່ເຮົາ

5.4 ກ່ອນທີ່ພີ່ນ້ອງຈະຮ່ວມຮັບພິທີຈະຕ້ອງພິຈາລະນາຕົນເອງແລະສາລະພາບບາບຕໍ່ພຣະເຈົ້າກ່ອນ ຖ້າຫາກມີເລື່ອງກັບພີ່ນ້ອງຄຣິສຕຽນຄົນໃດກໍຄວນແກ້ໄຂກັນກ່ອນຈຶ່ງມາຮັບພິທີມະຫາສະນິດ

5.5 ພີ່ນ້ອງຕ້ອງເຂົ້າໃຈວ່າ ເຂົ້າຈີ່ແລະນ້ຳອະງຸ່ນທີ່ໃຊ້ໃນພິທີມະຫາສະນິດເປັນສິ່ງຂອງທຳມະດາເທົ່ານັ້ນ ບໍ່ແມ່ນຂອງສັກສິດແລະບໍ່ໄດ້ເປັນອາຫານທິບທີ່ຈະຊ່ວຍບຳລຸງຊີວິດຄຣິສຕຽນຢ່າງໃດ ເຂົ້າຈີ່ແລະນ້ຳອະງຸ່ນເປັນພຽງແຕ່ສັນຍາລັກທີ່ເລັງເຖິງຮ່າງກາຍ ແລະເລືອດຂອງພຣະເຢຊູຄຣິດ

## 6. ການນຳມາໃຊ້

6.1 ໃຜຄວນຮັບພິທີມະຫາສະນິດ ແລະ ໃຜບໍ່ຄວນຮັບ?

6.2 ທຸກເທື່ອກ່ອນທີ່ເຮົາຈະຮັບພິທີມະຫາສະນິດ ເຮົາຄວນຈະພິຈາລະນາຕົນເອງແນວໃດ? ເພາະຫຍັງ?

## 7. ຂໍ້ທ່ອງຈຳ - 1 ໂກຣິນໂທ 11:26

# 51. ການຖວາຍ

1. **ເປົ້າໝາຍ -** ເພື່ອຊ່ວຍໃຫ້ຄຣິສຕຽນເຂົ້າໃຈວ່າ ເປັນຫຍັງເຮົາຈຶ່ງຄວນຖວາຍເງິນແລະຄວນຖວາຍແນວໃດ

2. **ຄຳນຳ -** ທຸກສິ່ງທີ່ມະນຸດມີໃຊ້ ຄື ໂລກ ຮ່າງກາຍ ລົມຫັນໃຈ ຊີວິດ ອາຫານການກິນ ມາຈາກພຣະເຈົ້າຜູ້ໂຜດປະທານໃຫ້ ຖ້າພຣະອົງຊົງມີໃຈກວ້າງຂວາງຂະໜາດນີ້ຈົນໄດ້ໂຜດປະທານທຸກສິ່ງສາລະພັດໃຫ້ແກ່ມະນຸດ ພວກເຮົາກໍຄວນຈະໃຈກວ້າງຕາມແບບຢ່າງຂອງພຣະອົງໃນການຖວາຍໃຫ້ແກ່ວຽກການຂອງພຣະອົງແລະໃນການແບ່ງປັນຊ່ວຍເຫລືອສິ່ງທີ່ເຮົາມີໃຫ້ກັບຜູ້ທີ່ຂາດເຂີນອີກຄືກັນ

3. **ອ່ານພຣະຄຳພີ -** 2 ໂກຣິນໂທ 9:5-15; ມັດທາຍ 6:1-4

4. **ຖາມ - ຕອບ**

   **4.1** ພຣະຄຳພີ 2 ໂກຣິນໂທ 9:5-15 ນີ້ກ່ຽວກັບເລື່ອງຫຍັງເປັນຕົ້ນ?

   **ຕອບ:** 2 ໂກຣິນໂທ 9:5................................................................................

   **4.2** ເມື່ອຖວາຍເງິນບໍ່ຄວນມີທ່າທີແນວໃດ?

   **ຕອບ:** 2 ໂກຣິນໂທ 9:7................................................................................

   **4.3** ພຣະເຈົ້າຢາກໃຫ້ຄຣິສຕຽນມີທ່າທີແນວໃດໃນການຖວາຍເງິນ?

   **ຕອບ:** 2 ໂກຣິນໂທ 9:7................................................................................

   **4.4** ຖ້າຄຣິສຕຽນຖວາຍເງິນເພື່ອໃຫ້ຄົນສັນເສີນ ເພື່ອເອົາໜ້າເອົາຕາ ຄຣິສຕຽນເຫຼົ່ານີ້ຈະໄດ້ຮັບຫຍັງຈາກພຣະເຈົ້າ?

   **ຕອບ:** ມັດທາຍ 6:1................................................................................

   **4.5** ຄວນບໍລິຈາກຫຼືຖວາຍເງິນແນວໃດ?

   **ຕອບ:** ມັດທາຍ 6:4................................................................................

5. **ອະທິບາຍ** - ການຖວາຍ

   **5.1** ການຖວາຍບໍ່ແມ່ນການເຮັດບຸນ ມະນຸດບໍ່ໄດ້ລອດຍ້ອນການເຮັດບຸນ ແຕ່ລອດຍ້ອນພຣະຄຸນຂອງພຣະເຈົ້າເທົ່ານັ້ນ

   **5.2** ການຖວາຍບໍ່ແມ່ນເພື່ອຈະມີໜ້າມີຕາ ການຖວາຍທີ່ພຣະເຈົ້າພໍໃຈຄືການຖວາຍເພື່ອພຣະເຈົ້າຈະໄດ້ຮັບກຽດ ບໍ່ແມ່ນເພື່ອໜ້າຕາຫຼືຊື່ສຽງຂອງຕົວເຮົາເອງ

   **5.3** ຄຣິສຕຽນຄວນຖວາຍເງິນເພື່ອຊ່ວຍວຽກການຂອງພຣະເຈົ້າ ເພື່ອໃຫ້ຂ່າວປະເສີດແຜ່ອອກໄປເຖິງມະນຸດທົ່ວໂລກ ແລະຄວນຖວາຍເພື່ອສົງເຄາະຊ່ວຍເຫຼືອຄົນທຸກຍາກດ້ວຍ

   **5.4** ບໍ່ຕ້ອງລໍຖ້າໃຫ້ໄດ້ຮັບຫຼາຍກ່ອນຈຶ່ງຖວາຍໄດ້ ທຸກຄົນຄວນມີສ່ວນໃນການຖວາຍ ແລະຄວນໃຫ້ຕາມທີ່ຕົນມີຢູ່

6. **ການນຳມາໃຊ້ -** ພີ່ນ້ອງເຄີຍຖວາຍເງິນໃຫ້ແກ່ພຣະເຈົ້າຫຼືຍັງ? ເຮົາຄວນຖວາຍເປັນສ່ວນຂອງລາຍໄດ້ ຄື 10% (ສິບສ່ວນຮ້ອຍ) ຫຼື ຫຼາຍກວ່າ 10% ກໍໄດ້ ພີ່ນ້ອງຄວນເຮັດບັນຊີສ່ວນຕົວຈົດລາຍໄດ້ຂອງຕົນໄວ້ທີ່ໄດ້ມາແຕ່ລະອາທິດ ເພື່ອຊ່ວຍໃຫ້ເຮົາຮູ້ວ່າ ເຮົາພວມຖວາຍໃຫ້ພຣະເຈົ້າຢ່າງສັດຊື່ ແລະຢ່າງສຸດກຳລັງເຫື່ອແຮງຂອງເຮົາຢູ່ຫຼືບໍ່

7. **ຂໍ້ທ່ອງຈຳ -** 2 ໂກຣິນໂທ 9:7 “ພຣະເຈົ້າຊົງຮັກຄົນທີ່ໃຫ້ດ້ວຍຊື່ນໃຈຍິນດີ”

# 52. ຜູ້ຮັບໃຊ້ໃນຄຣິສຕະຈັກຂອງພຣະເຈົ້າ

1. **ເປົ້າໝາຍ -** ເພື່ອຊ່ວຍໃຫ້ຄຣິສຕຽນເຂົ້າໃຈວ່າຜູ້ຮັບໃຊ້ໃນຄຣິສຕະຈັກຄວນເປັນຄົນແບບໃດແລະມີໜ້າທີ່ແນວໃດແດ່?

2. **ຄຳນຳ -** ພຣະເຢຊູເຄີຍສອນລູກສິດຂອງພຣະອົງວ່າ
"ຖ້າຜູ້ໃດໃນພວກເຈົ້າຢາກເປັນຜູ້ໃຫຍ່ ຜູ້ນັ້ນຕ້ອງເປັນຜູ້ຮັບໃຊ້ເຈົ້າທັງຫຼາຍແລະຜູ້ໃດໃນພວກເຈົ້າຢາກເປັນເອກ ຜູ້ນັ້ນກໍຕ້ອງເປັນຂ້ອຍໃຊ້ຂອງໝົດທຸກຄົນ ເພາະບຸດມະນຸດເອງບໍ່ໄດ້ມາເພື່ອໃຫ້ຄົນຮັບໃຊ້ເພິ່ນ ແຕ່ມາເພື່ອຮັບໃຊ້ແລະຍອມເສຍສະຫລະຊີວິດເປັນຄ່າໄຖ່ຄົນຈຳນວນຫຼວງຫຼາຍ" ມາຣະໂກ 10:43-45

3. **ອ່ານພຣະຄຳພີ -** 1 ຕີໂມທຽວ 3:1-7

4. **ຖາມ - ຕອບ**

**4.1** ຖ້າຜູ້ໃດປາຖະໜາເປັນຜູ້ຮັບໃຊໃນຄຣິສຕະຈັກ ຜູ້ນັ້ນປາຖະໜາກິດຈະການງານທີ່ເປັນແນວໃດ?

**ຕອບ:** 1 ຕີໂມທຽວ 3:1 ..........................................................................................

**4.2** ຜູ້ຮັບໃຊ້ໃນຄຣິສຕະຈັກຄວນມີຄຸນລັກສະນະແນວໃດແດ່?

**ຕອບ:** 1 ຕີໂມທຽວ 3:2-3

1) .................................................. 7) ..................................................
2) .................................................. 8) ..................................................
3) .................................................. 9) ..................................................
4) .................................................. 10) ..................................................
5) .................................................. 11) ..................................................
6) .................................................. 12) ..................................................

**4.3** ເປັນຫຍັງຜູ້ຮັບໃຊ້ໃນຄຣິສຕະຈັກຂອງພຣະເຈົ້າຕ້ອງເປັນຄົນທີ່ປົກຄອງຄອບຄົວຂອງຕົນໄດ້ຢ່າງດີແລະຮຽບຮ້ອຍ?

**ຕອບ:** 1 ຕີໂມທຽວ 3:4-5 ......................................................................................
..........................................................................................................

**4.4** ເປັນຫຍັງບໍ່ຄວນຕັ້ງໃຫ້ຄຣິສຕຽນໃໝ່ເປັນຜູ້ຮັບຜິດຊອບການຮັບໃຊ້ໃນຄຣິສຕະຈັກຂອງພຣະເຈົ້າ?

**ຕອບ:** 1 ຕີໂມທຽວ 3:6 ..........................................................................................

**4.5** ຜູ້ຮັບໃຊ້ໃນຄຣິສຕະຈັກຕ້ອງເປັນທີ່ນັບຖືຂອງໃຜອີກແດ່?

**ຕອບ:** 1 ຕີໂມທຽວ 3:7 ..........................................................................................

5. **ອະທິບາຍ** - ຜູຮັບໃຊໃນຄຣິສຕະຈັກຂອງພຣະເຈົ້າ

5.1 ຜູ້ທີ່ສົມຄວນຮັບການຕັ້ງຂຶ້ນໃຫ້ເປັນຜູ້ຮັບໃຊ້ໃນຄຣິສຕະຈັກຂອງພຣະເຈົ້າ ຕ້ອງບໍ່ແມ່ນຍ້ອນເຂົາມີຄວາມຮູ້ຄວາມສາມາດຊື່ໆ ຫຼື ຍ້ອນເຂົາມີຖານະສູງໃນສັງຄົມ ແຕ່ຍ້ອນເຂົາເປັນຄົນທີ່ຈະເລີນເຕີບໂຕທາງດ້ານຈິດວິນຍານ

5.2 ຜູ້ຮັບໃຊ້ໃນຄຣິສຕະຈັກຂອງພຣະເຈົ້າ ບໍ່ໄດ້ເປັນເຈົ້ານາຍຂອງສະມາຊິກ ແຕ່ເປັນຜູ້ຮັບໃຊ້ສະມາຊິກຕ່າງຫາກ ແມ່ນແຕ່ທ່ານເປົາໂລໄດ້ກ່າວເນັ້ນເລື້ອຍໆວ່າຕົນເອງເປັນຂ້ອຍຂ້າຂອງພຣະຄຣິດເພື່ອຮັບໃຊ້ໃນຄຣິສຕະຈັກ

5.3 ຜູ້ຮັບໃຊ້ໃນຄຣິສຕະຈັກຂອງພຣະເຈົ້າມີໜ້າທີ່ລ້ຽງພີ່ນ້ອງຄຣິສຕຽນທາງດ້ານຈິດໃຈແລະຈິດວິນຍານເພື່ອໃຫ້ຄຣິສຕຽນຈະເປັນຜູ້ໃຫຍ່ໃນພຣະເຢຊູຄຣິດ

6. **ການນຳມາໃຊ້**

6.1 ຜູ້ຮັບໃຊ້ໃນຄຣິສຕະຈັກຄວນມີທ່າທີແນວໃດ?

6.2 ຜູ້ຮັບໃຊ້ໃນຄຣິສຕະຈັກມີໜ້າທີ່ຫຍັງແດ່? ພີ່ນ້ອງຄວນມີທ່າທີແນວໃດຕໍ່ຜູ້ຮັບໃຊ້ໃນຄຣິສຕະຈັກ?

7. **ຂໍ້ທ່ອງຈຳ -** ມາຣະໂກ 10:43

# 53. ເລື່ອງຄວາມທຸກ

1. **ເປົ້າໝາຍ -** ເພື່ອຊ່ວຍໃຫ້ຄຣິສຕຽນເຂົ້າໃຈວ່າ ຜູ້ທີ່ຕິດຕາມພຣະເຢຊູຈະປະສົບກັບຄວາມທຸກຍາກລຳບາກຄືກັນກັບພຣະອົງ

2. **ຄຳນຳ -** ມີບາງຄົນເຂົ້າໃຈວ່າ ຖ້າຮັບເຊື່ອພຣະເຢຊູແລ້ວກໍຈະບໍ່ມີບັນຫາອີກຕໍ່ໄປ ບາງຄົນຄິດວ່າພຣະເຈົ້າຈະຊ່ວຍໃຫ້ພົ້ນຈາກຄວາມທຸກຍາກລຳບາກທັງໝົດແລ້ວຈະໃຫ້ຢູ່ເຢັນເປັນສຸກຕະຫຼອດຊີວິດ ສ່ວນຫຼາຍເມື່ອຄົນທີ່ຄິດແບບນີ້ປະສົບກັບຄວາມທຸກຍາກແນວໃດກໍມັກຜິດຫວັງ ແລ້ວລາອອກຈາກການເປັນຄຣິດຕຽນທັນທີ

3. **ອ່ານພຣະຄຳພີ -** 1 ເປໂຕ 4:12-19

4. **ຖາມ - ຕອບ**
   - 4.1 ພີ່ນ້ອງບໍ່ຄວນປະຫຼາດໃຈເມື່ອໄດ້ຮັບຫຍັງ?
     **ຕອບ:** 1 ເປໂຕ 4:12 ......................................................
   - 4.2 ເມື່ອພົບກັບຄວາມເດືອດຮ້ອນຍ້ອນການເປັນຄຣິສຕຽນ ເຮົາຄວນມີທ່າທີແນວໃດ?
     **ຕອບ:** 1 ເປໂຕ 4:13 ......................................................
   - 4.3 ຄົນທີ່ເຊື່ອພຣະເຢຊູຈະຖືກໝິ່ນປະມາດຍ້ອນຫຍັງ?
     **ຕອບ:** 1 ເປໂຕ 4:14 ......................................................
   - 4.4 ຖ້າຫາກວ່າຄົນທີ່ບໍ່ເຊື່ອໝິ່ນປະໝາດເຮົາຍ້ອນເຮົາເປັນຄຣິສຕຽນ ເຮົາຈະມີຄວາມຮູ້ສຶກແນວໃດ? ແລະ ໃຜສະຖິດຢູ່ໃນເຮົາ?
     **ຕອບ:** 1 ເປໂຕ 4:14 ......................................................
   - 4.5 ຖ້າເຮົາຖືກໃສ່ຮ້າຍຍ້ອນມີຊື່ວ່າເປັນຄຣິສຕຽນ ເຮົາຄວນຈະວາງຕົວແນວໃດ?
     **ຕອບ:** 1 ເປໂຕ 4:16 ......................................................
   - 4.6 ພີ່ນ້ອງທີ່ປະສົບກັບຄວາມທຸກທໍລະມານຕາມພະປະສົງຂອງພຣະເຈົ້າ ຕ້ອງເຮັດແນວໃດ?
     **ຕອບ:** 1 ເປໂຕ 4:19 ......................................................

5. **ອະທິບາຍ** - ເລື່ອງຄວາມທຸກ
   - 5.1 ຄຣິສຕຽນຈະພົບກັບຄວາມທຸກຄືກັນກັບພຣະເຢຊູເຄີຍໄດ້ພົບ ເມື່ອພຣະອົງຢູ່ໃນໂລກນີ້ກໍພົບກັບຄວາມທຸກຍາກລຳບາກແລະການຂົ່ມເຫັງຈົນເຖິງຕາຍ ເພາະສະນັ້ນຜູ້ທີ່ເຊື່ອແລະຕິດຕາມພຣະອົງກໍຈະໄດ້ຮັບຄືກັນ
   - 5.2 ເມື່ອຖືກຂົ່ມເຫັງຍ້ອນເປັນຄຣິສຕຽນ ຄວນຊົມຊື່ນຍິນດີແລະສັນລະເສີນພຣະເຈົ້າເພາະຈະໄດ້ຮັບບຳເໜັດອັນບໍຣິບູນເທິງສະຫວັນ

5.3 ເມື່ອຖືກຕິຕຽນແລະນິນທາວ່າຮ້າຍຍ້ອນເປັນລູກຂອງພຣະອົງ ເຮົາບໍ່ຄວນກຽດຊັງຫຼືແກ້ແຄ້ນຜູ້ທີ່ເຮັດຮ້າຍຕໍ່ເຮົາ ແຕ່ຄວນສະແດງຄວາມຮັກຂອງພຣະເຈົ້າຕໍ່ເຂົາ ເພື່ອເຂົາຈະໄດ້ເຫັນຄວາມເມດຕາຂອງພຣະເຈົ້າແລ້ວເຂົາຈະຖິ້ມໃຈເກົ່າເອົາໃຈໃໝ່

6. **ການນຳມາໃຊ້ -** ໃຫ້ພີ່ນ້ອງຄິດເຖິງຄົນທີ່ເຄີຍຂົ່ມເຫັງທ່ານຍ້ອນທ່ານເຊື່ອພຣະເຈົ້າ ແລ້ວຈຶ່ງຕັ້ງໃຈອະທິຖານເພື່ອເຂົາທຸກໆມື້ຕະຫຼອດໄປ

7. **ຂໍ້ທ່ອງຈຳ -** 1 ເປໂຕ 4:12,13